# ແຜນຈັດປະສົບການ

# ໜ່ວຍບ້ານຂອງຂ້ອຍ

## ຊັ້ນອະນຸບານສຶກສາປີທີ 3



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2016

ແຜນຈັດປະສົບການ ໜ່ວຍບ້ານຂອງຂ້ອຍ ຊັ້ນອະນຸບານສຶກສາປີທີ 3 2016

ສະໜັບສະໜູນການສ້າງຕົ້ນສະບັບ
ໂດຍ: ອົງການຮ່ວມມືສາກົນ UNICEF ປະຈຳລາວ
ສະໜັບສະໜູນການພິມໂດຍ: ງົບປະມານແຫ່ງລັດ
ທະບຽນພິມເລກທີ: ...............
ຂະໜາດ 21x29,7 ຊມ ຈຳນວນ.............ຫົວ
ພິມທີ່ ບໍລິສັດ ລັດວິສາຫະກິດໂຮງພິມສຶກສາ
2016
ສະຫງວນລິຂະສິດ

# ແຜນຈັດປະສົບການ

# ໜ່ວຍບ້ານຂອງຂ້ອຍ

## ຊັ້ນອະນຸບານສຶກສາ ປີທີ 3


ຮຽບຮຽງໂດຍ: ພູມະລີ ແສງຈັນນະວົງ
ລັດສະໜີ ນາມເມືອງ
ມະນີວອນ ອາດຜາສຸກ
ບົວວອນ ພົງລັດສະໜີ
ອ່າງຄຳ ບຸດສະດີ

ກວດແກ້ໂດຍ: ດຣ ອ່ອນແກ້ວ ນວນນະວົງ
ປາກຣົນ ຫຼວງໄຊຊະນະ
ແສງມະນີ ສຸພັນທະລົບ
ຈຸນລາ ເຂັມທອງ
ວຽງແກ້ວ ພົມມະຈັກ

ເຂົ້າໜ້າໂດຍ: ສີວິໄລ ແກ້ວມະນີວັນ



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2016

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---====000====----

07498-

ກະຊວງສຶກສາທິການ ແລະ ກິລາ

ເລກທີ ສສກ.ສວສ

ນະຄອນຫຼວງວຽງຈັນ, ວັນທີ 09 DEC 2015

## ຂໍ້ຕົກລົງຂອງລັດຖະມົນຕີ

## ວ່າດ້ວຍການຮັບຮອງ ແລະ ປະກາດນຳໃຊ້ຫຼັກສູດ ແລະ ປຶ້ມປະກອບການຮຽນ-ການສອນ

## ສຳລັບຊັ້ນອະນຸບານສຶກສາ ປີທີ 3

ເຫັນຕາມ: ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 282/ນຍ, ລົງວັນທີ 7 ກັນຍາ 2011;

ເຫັນຕາມ: ການສະເໜີຂອງສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

**ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ ຈຶ່ງຕົກລົງ**

ມາດຕາ 1: ຮັບຮອງ ແລະ ປະກາດນຳໃຊ້ຫຼັກສູດ ແລະ ປຶ້ມປະກອບການຮຽນ-ການສອນ ສຳລັບຊັ້ນອະນຸບານສຶກສາ ປີທີ 3 ສະບັບປະຕິຮູບ ໃນໂຮງຮຽນອະນຸບານທົ່ວປະເທດ ນັບແຕ່ສົກຮຽນ 2016-2017 ເປັນຕົ້ນໄປ.

ມາດຕາ 2: ໃຫ້ກົມອະນຸບານ ແລະ ປະຖົມສຶກສາ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ, ກົມຄຸ້ມຄອງການສຶກສາພາກເອກະຊົນ, ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງວຽງຈັນ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຕາມໜ້າທີ່ຂອງໃຜລາວ ໃຫ້ໄດ້ຮັບຜົນດີ.

ມາດຕາ 3: ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ

ກະຊວງສຶກສາທິການ ... ລັດຖະມົນຕີ

ລີຕູ ບົວປາວ

# ຄຳນຳ

ແຜນຈັດປະສົບການສະບັບນີ້ຮຽບຮຽງຂຶ້ນ ເພື່ອເປັນອີງນຳໃຊ້ເຂົ້າໃນການວາງແຜນການສອນ ແລະ ໃຫ້ຄູສອນນຳໃຊ້ໃນການສອນຄວບຄູ່ກັບປຶ້ມແນະນຳກິດຈະກຳການຮຽນ-ການສອນ ໂດຍໃຫ້ແທດເໝາະກັບພັດທະນາການຂອງເດັກອະນຸບານອາຍຸ 5 ປີ ຕາມຄວາມຕ້ອງການຮຽນຮູ້ ຂອງເຂົ້າເຈົ້າ ແລະ ສະພາບຕົວຈິງຂອງແຕ່ລະທ້ອງຖິ່ນ.

ເນື້ອໃນຄວາມຮູ້ທີ່ກຳນົດໃນກິດຈະກຳການຫຼິ້ນ ແລະ ຮຽນຮູ້ແຕ່ລະວັນມີລັກສະນະບູລະນາການຄວາມຮູ້ທາງດ້ານພາສາລາວ, ຄະນິດສາດ ແລະ ວິທະຍາສາດທົ່ວໄປ.

ກິດຈະກຳການຫຼິ້ນເກມການສຶກສາ ທັງນີ້ກໍເພື່ອໃຫ້ເດັກໄດ້ຮັບການພັດທະນາຕາມສະມັດຖະພາບດ້ານການຮຽນຂອງເດັກອະນຸບານປີທີ 3 (ອາຍຸ 5 ປີ) ໃນການກຽມຄວາມພ້ອມທາງດ້ານຮ່າງກາຍ, ດ້ານອາລົມ, ຈິດໃຈ, ດ້ານສັງຄົມ, ດ້ານພາສາລາວ ແລະ ດ້ານສະຕິປັນຍາ ກ່ອນເຂົ້າຮຽນໃນຊັ້ນປະຖົມ.

ແຜນການຈັດປະສົບການສະບັບນີ້ເນັ້ນໜັກການສອນແບບເອົາເດັກເປັນໃຈກາງ ໂດຍໃຫ້ເດັກໄດ້ປະຕິບັດຕົວຈິງຜ່ານການຫຼິ້ນ ແລະ ຮຽນ ໂດຍຍຶດຫຼັກການສຳຄັນດັ່ງນີ້:

1. ເດັກໄດ້ຮັບການກຽມຄວາມພ້ອມໃນທຸກດ້ານຕາມຄວາມສາມາດ ແລະ ທຳມະຊາດຂອງເດັກ.
2. ເດັກໄດ້ຮຽນຮູ້ຕາມຄວາມສົນໃຈ, ຄວາມຕ້ອງການຢ່າງອິດສະຫຼະຈາກສິ່ງໃກ້ຕົວ, ຈາກທັກສະທີ່ງ່າຍໄປສູ່ທັກສະທີ່ຍາກຕາມລຳດັບໂດຍໄດ້ຮຽນຮູ້ເປັນລາຍບຸກຄົນ ແລະ ກຸ່ມຕາມຄວາມສົນໃຈ.
3. ການຈັດກິດຈະກຳການຮຽນຮູ້ແມ່ນໃຫ້ເດັກໄດ້ປະຕິບັດຕົວຈິງໃນລັກສະນະຂອງການຮຽນແບບຕັ້ງໜ້າຫຼືເອົາເດັກເປັນໃຈກາງ, ເພື່ອເປີດໂອກາດໃຫ້ເດັກມີຄວາມກ້າຫານ, ກ້າສະແດງອອກ ແລະ ຄົ້ນພົບສິ່ງໃໝ່ດ້ວຍຕົນເອງໂດຍຜ່ານການຫຼິ້ນທີ່ເບີກບານມ່ວນຊື່ນ ສອດຄ່ອງກັບທຳມະຊາດຂອງເດັກແຕ່ລະຄົນທີ່ມີຄວາມແຕກຕ່າງກັນໃນການຫຼິ້ນ ແລະ ການຮຽນຮູ້ໃນກິດຈະກຳສ້າງສັນ.
4. ການຈັດປະສົບການໄດ້ເນັ້ນໜັກເນື້ອໃນທີ່ເດັກຄວນຮຽນຮູ້ຈາກສັງຄົມ, ວັດທະນະທຳ ແລະ ສະພາບແວດລ້ອມທີ່ເດັກອາໄສຢູ່ໂດຍຄຳນຶງເຖິງຄວາມແຕກຕ່າງຂອງເດັກແຕ່ລະຄົນ.

ນອກນັ້ນໃນແຜນການຈັດປະສົບການສະບັບນີ້ຍັງໄດ້ແນະນຳການຈັດຫ້ອງ, ທັກສະທີ່ຄວນພັດທະນາ ເພື່ອໃຫ້ສອດຄ່ອງກັບທຳມະຊາດຂອງເດັກອາຍຸ 5 ປີ ແລະ ການຈັດປະສົບການໃນໜ່ວຍການສອນ ໃຫ້ຄູໄດ້ນຳໄປໃຊ້ໃນການຈັດການສອນຂອງຕົນ. ເປັນທີ່ແນ່ນອນວ່າ ເອກະສານສະບັບນີ້ ປາສະຈາກຄວາມຂາດຕົກບົກຜ່ອງບໍ່ໄດ້ ຄະນະຮຽບຮຽງ ແລະ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ມີຄວາມຍິນດີຕ້ອນຮັບທຸກຄຳເຫັນທີ່ສ້າງສັນຈາກຜູ້ຊົມໃຊ້ ເພື່ອປັບປຸງໃຫ້ນັບມື້ດີຂຶ້ນໃນອະນາຄົດ.

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

# ສາລະບານ


**ຈຸດປະສົງລວມ** ........ 1-5

**ຈຸດປະສົງສຳລັບອາທິດທີ 1** ........ 6-10

**1. ໝ່ອຍບ້ານຂອງຂ້ອຍ, ອາທິດທີ 1: ມື້ທີ 1**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວປະຕິບັດຄຳສັ່ງຕາມນາຍຄູແນະນຳ ........ 11

ກິດຈະກຳວົງມົນ: ບ້ານ ແລະ ສະຖານທີ່ສຳຄັນໃນບ້ານ ........ 12

ກິດຈະກຳ ສິລະປະສ້າງສັນ: ແຕ້ມຮູບພາບໝູ່ບ້ານຕາມແບບ ........ 13

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນແຂ່ງຂັນລຳລຽງສິນຄ້າ ........ 14

ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັບຮູບພາບສະຖານທີ່ສຳຄັນໃນບ້ານ ........ 15

ກິດຈະກຳຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມອ່ານ ........ 16

**2. ໝ່ອຍບ້ານຂອງຂ້ອຍ, ອາທິດທີ 1: ມື້ທີ 2**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວປະຕິບັດຄຳສັ່ງຕາມນາຍຄູແນະນຳ ........ 17

ກິດຈະກຳວົງມົນ: ຫ້ອງການປົກຄອງບ້ານ ........ 18

ກິດຈະກຳ ສິລະປະສ້າງສັນ: ຂີດຂຽນສະຫຼະ ×ະ ຕາມຄຳສັບ ........ 19

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນປິດຕາຈັບແບ້ ........ 20

ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັບຮູບພາບບຸກຄົນທີ່ເຮັດວຽກໃນຫ້ອງການບ້ານ ........ 21

ກິດຈະກຳຫຼິ້ນຕາມມຸມ: ມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ. ........ 22

**3. ໝ່ອຍບ້ານຂອງຂ້ອຍ, ອາທິດທີ 1: ມື້ທີ 3**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມສຽງສັນຍານ ເປົ່າໝາກຫວີດ ........ 23

ກິດຈະກຳວົງມົນ: ວັດ, ສະຖານທີ່ທ່ອງທ່ຽວ ........ 24

ກິດຈະກຳ ສິລະປະສ້າງສັນ: ຮ້ອຍກະດູມສະຫຼັບສີ: ແດງ, ຟ້າ ແລະ ສີເຫຼືອງ ........ 25

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນເຕັ້ນເຂົ້າວົງຕາມສຽງສັນຍານ ........ 26

ກິດຈະກຳເກມການສຶກສາ: ເກມຈັດໝວດໝູ່ຮູບພາບວັດຕາມສີ ........ 27

ກິດຈະກຳຫຼິ້ນຕາມມຸມ: ມຸມອ່ານ ແລະ ມຸມເກມການສຶກສາ ........ 28

**4. ໝ່ອຍບ້ານຂອງຂ້ອຍ, ອາທິດທີ 1: ມື້ທີ 4**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມຈິນຕະນາການປະກອບບົດເພງ ບ້ານຂອງຂ້ອຍ 29

ກິດຈະກຳວົງມົນ: ໂຮງຮຽນ ແລະ ສຸກສາລາ ........ 30

ກິດຈະກຳ ສິລະປະສ້າງສັນ: ພັບເຈ້ຍເປັນຮູບກາແຜດ ........ 31

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນຜອງຊາຍໃສ່ກະປ໋ອງ ........ 32

ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບສຸກສາລາ. ........ 33

ກິດຈະກຳຫຼິ້ນຕາມມຸມ: ມຸມບົດບາດສົມມຸດ ແລະ ມຸມເກມການສຶກສາ ........ 34

**5. ໝ່ອຍບ້ານຂອງຂ້ອຍ, ອາທິດທີ 1: ມື້ທີ 5**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວເປັນຜູ້ນຳ-ຜູ້ປະຕິບັດຕາມປະກອບບົດເພງ ສຽງດົນຕີ 35

ກິດຈະກຳວົງມົນ: ຕະຫຼາດ ແລະ ເດີ່ນກິລາ ........ 36

ກິດຈະກຳສິລະປະສ້າງສັນ: ທາສີຮູບພາບເດີ່ນກິລາ ........ 37

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນແຂ່ງຂັນແລ່ນສົ່ງໝາກໄມ້ ........ 38

ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບຕະຫຼາດ ແລະ ເດີ່ນກິລາ ........ 39

ກິດຈະກຳຫຼິ້ນຕາມມຸມ: ມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ ........ 40

**ຈຸດປະສົງສຳລັບ ອາທິດທີ 2......................................................................................41-42**

**6. ພ່ອຍບ້ານຂອງຂ້ອຍ, ອາທິດທີ 2: ມື້ທີ 1**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມຈິນຕະນາການປະກອບບົດຄຳຄ່ອງ ໂຮງຮຽນ ແລະ ສຸກສາລາ ........................................................................................... 43
ກິດຈະກຳວົງມົນ: ອາຊີບນາຍຄູ ແລະ ແພດ ........................................................................... 44
ກິດຈະກຳ ສິລະປະສ້າງສັນ: ຂີດຂຽນຕົວເລກ 11 ຕາມຮອຍຈ້ຳ ແລະ ຕາມໃຈ ........................... 45
ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນໂພງພາງຕາບອດ .................................................. 46
ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັນຮູບພາບບຸກຄົນສຳຄັນພາຍໃນບ້ານ ........................... 47
ກິດຈະກຳຫຼິ້ນຕາມມຸມ: ມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ ....................................... 48

**7. ພ່ອຍບ້ານຂອງຂ້ອຍ, ອາທິດທີ 2: ມື້ທີ 2**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມຈິນຕະນາການ ........ 49
ກິດຈະກຳວົງມົນ: ອາຊີບຊາວນາ ແລະ ຊາວສວນ ................................................................... 50
ກິດຈະກຳ ສິລະປະສ້າງສັນ: ຂີດຂຽນຄຳສັບທີ່ປະສົມສະຫຼະ ×ະ ............................................. 51
ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນແຂ່ງຍັບຕົ້ນຂ້າມຫ້ວຍ ............................................. 52
ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບຊາວນາ ແລະ ຊາວສວນ ........................................... 53
ກິດຈະກຳຫຼິ້ນຕາມມຸມ: ມຸມອ່ານ ແລະ ມຸມສິລະປະສ້າງສັນ ..................................................... 54

**8. ພ່ອຍບ້ານຂອງຂ້ອຍ, ອາທິດທີ 2: ມື້ທີ 3**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວປະຕິບັດຄຳສັ່ງຕາມນາຍຄູແນະນຳ ...................... 55
ກິດຈະກຳວົງມົນ: ອາຊີບພໍ່ຄ້າ ແລະ ແມ່ຄ້າ ............................................................................. 56
ກິດຈະກຳ ສິລະປະສ້າງສັນ: ຕິດພະຍັນຊະນະ ......................................................................... 57
ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນນ້ຳ-ຫຼິ້ນດິນຊາຍ ................................................................. 58
ກິດຈະກຳເກມການສຶກສາ: ເກມຈັບຄູ່ຮູບພາບກັບຮູບພາບຕາມການອອກສຽງຕົວພະຍັນຊະນະຕົ້ນ ....... 59
ກິດຈະກຳຫຼິ້ນຕາມມຸມ: ມຸມບົດບາດສົມມຸດ, ມຸມວິທະຍາສາດ ແລະ ທຳມະຊາດ .......................... 60

**9. ພ່ອຍບ້ານຂອງຂ້ອຍ, ອາທິດທີ 2: ມື້ທີ 4**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມທີ່ນາຍຄູອອກແບບປະກອບບົດເພງ ຮ້ານຄ້າບ້ານ ຂອງຂ້ອຍ ....................................................................................... 61
ກິດຈະກຳວົງມົນ: ອາຊີບທະຫານ ແລະ ຕຳຫຼວດ .................................................................... 62
ກິດຈະກຳ ສິລະປະສ້າງສັນ: ທາສີຮູບພາບເຄື່ອງນຸ່ງຕຳຫຼວດ ແລະ ທະຫານ ................................ 63
ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນຕັ່ງວິເສດ ............................................................... 64
ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັນຕົວພະຍັນຊະນະ .................................................. 65
ກິດຈະກຳຫຼິ້ນຕາມມຸມ: ມຸມບົດບາດສົມມຸດ ແລະ ມຸມເກມການສຶກສາ ........................................ 66

**10. ພ່ອຍບ້ານຂອງຂ້ອຍ, ອາທິດທີ 2: ມື້ທີ 5**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມສຽງສັນຍານ ເຄາະ ..................................... 67
ກິດຈະກຳວົງມົນ: ອາຊີບກຳມະກອນ ແລະ ນາຍຊ່າງ ............................................................... 68
ກິດຈະກຳ ສິລະປະສ້າງສັນ: ສະຫຼັບຮູບຊີ້ງຕາມແບບ ................................................................ 69
ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນແຂ່ງຍັບຍ້າຍບ່ອນຕາມສຽງສັນຍານ ............................. 70
ກິດຈະກຳເກມການສຶກສາ: ເກມຈັບຄູ່ຮູບພາບກັບຕົວພະຍັນຊະນະ ............................................. 71
ກິດຈະກຳຫຼິ້ນຕາມມຸມ: ມຸມເກມການສຶກສາ ແລະ ມຸມສິລະປະສ້າງສັນ ...................................... 72

**ຈຸດປະສົງສຳລັບ ອາທິດທີ 3**..........................................................................................**73-74**

**11. ໜ່ວຍບ້ານຂອງຂ້ອຍ, ອາທິດທີ 3: ມື້ທີ 1**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມສຽງສັນຍານ ສັ່ນກະແຊັກ ........................... 75

ກິດຈະກຳວົງມົນ: ສິລະປະວັບນະຄະດີພື້ນເມືອງ ......................................................................... 76

ກິດຈະກຳ ສິລະປະສ້າງສັນ: ການແຕ້ມຮູບດອກຈຳປາຕາມແບບ ................................................. 77

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນງູກິນຂຽດ ................................................................. 78

ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບເດັກນ້ອຍລຳ ................................................................ 79

ກິດຈະກຳຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມບົດບາດສົມມຸດ ....................................... 80

**12. ໜ່ວຍບ້ານຂອງຂ້ອຍ, ອາທິດທີ 3: ມື້ທີ 2**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວປະຕິບັດຄຳສັ່ງຕາມນາຍຄູແນະນຳ ...................... 81

ກິດຈະກຳວົງມົນ: ເຄື່ອງດົນຕີ ແລະ ແບບຫຼິ້ນພື້ນເມືອງ ............................................................... 82

ກິດຈະກຳ ສິລະປະສ້າງສັນ: ການຮ້ອຍໄມ້ປ່ອງ 1-10 ................................................................. 83

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນແຂ່ງຂັນແລ່ນສົ່ງໝາກໄມ້ ........................................... 84

ກິດຈະກຳເກມການສຶກສາ: ເກມຈັດໝວດໝູ່ຕາມປະເພດຮູບພາບເຄື່ອງດົນຕີພື້ນເມືອງລາວ ............ 85

ກິດຈະກຳຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ ....................................... 86

**13. ໜ່ວຍບ້ານຂອງຂ້ອຍ, ອາທິດທີ 3: ມື້ທີ 3**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມຈິນຕະນາການ ........ 87

ກິດຈະກຳວົງມົນ: ຫັດຖະກຳພື້ນເມືອງ ....................................................................................... 88

ກິດຈະກຳ ສິລະປະສ້າງສັນ: ສານລາຍຂັດ .................................................................................. 89

ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນ ຜອງຊາຍໃສ່ກະປ໋ອງ ....................................................... 90

ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັນຮູບພາບເຄື່ອງຫັດຖະກຳພື້ນເມືອງລາວ ...................... 91

ກິດຈະກຳຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ ........................................ 92

**14. ໜ່ວຍບ້ານຂອງຂ້ອຍ, ອາທິດທີ 3: ມື້ທີ 4**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ທວຕາມທີ່ນາຍຄູອອກແບບປະກອບບົດຄຳຄ່ອງ ຫັດຖະກຳ ...... 93

ກິດຈະກຳວົງມົນ: ບຸນເຂົ້າພັນສາ ແລະ ອອກພັນສາ ...................................................................... 94

ກິດຈະກຳ ສິລະປະສ້າງສັນ: ທາສີຮູບພາບຊໍ່ດອກໄມ້ .................................................................. 95

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນຕຳຫຼວດຈັບໂຈນ ......................................................... 96

ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັນຮູບພາບບຸນອອກພັນສາ ............................................. 97

ກິດຈະກຳຫຼິ້ນຕາມມຸມ: ມຸມອ່ານ ແລະ ມຸມເກມການສຶກສາ ........................................................ 98

**15. ໜ່ວຍບ້ານຂອງຂ້ອຍ, ອາທິດທີ 3: ມື້ທີ 5**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມທີ່ນາຍຄູອອກແບບປະກອບບົດຄຳຄ່ອງ
ບຸນເຂົ້າພັນ ສາ ແລະ ອອກພັນສາ ............................................................................................... 99

ກິດຈະກຳວົງມົນ: ບຸນພະເຫວດ ແລະ ບຸນປີໃໝ່ລາວ .................................................................. 100

ກິດຈະກຳ ສິລະປະສ້າງສັນ: ຕິດຮູບພາບ .................................................................................. 101

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນແຂ່ງຂັນສົ່ງໂອ.ນ້ຳອ້າມຫົວ ......................................... 102

ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັນຮູບພາບບຸນປີໃໝ່ລາວ .............................................. 103

ກິດຈະກຳຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມບົດບາດສົມມຸດ ....................................... 104

**ຈຸດປະສົງສຳລັບ ອາທິດທີ 4....................................................................................105-106**

**16. ພໍ່ບ້ານຂອງຂ້ອຍ, ອາທິດທີ 4: ມື້ທີ 1**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວປະຕິບັດຂໍ້ຕົກລົງຕາມນາຍຄູແນະນຳ .................... 107

ກິດຈະກຳວົງມົນ: ບ້ານ, ເມືອງ, ແຂວງ ແລະ ປະເທດ ........................................................... 108

ກິດຈະກຳ ສິລະປະສ້າງສັນ: ຂີດຂຽນຕົວເລກ 12 ຕາມຮອຍຈ້ຳ ................................................. 109

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນຕາບອດຊົກມອຍ. ....................................................... 110

ກິດຈະກຳເກມການສຶກສາ: ເກມລຽນລຳດັບຕົວເລກ 0-9 ............................................................ 111

ກິດຈະກຳຫຼິ້ນຕາມມຸມ: ມຸມເກມການສຶກສາ ແລະ ມຸມອ່ານ ..................................................... 112

**17. ພໍ່ບ້ານຂອງຂ້ອຍ, ອາທິດທີ 4: ມື້ທີ 2**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມການສັນຍານ ຍົກທຸງ .................................. 113

ກິດຈະກຳວົງມົນ: ວັນຊາດ ....................................................................................................... 114

ກິດຈະກຳ ສິລະປະສ້າງສັນ: ແຕ້ມ ແລະ ທາສີຮູບພາບທຸງຊາດລາວຕາມແບບ ........................... 115

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນແຂ່ງຂັນຮ່າຍນ້ຳໃສ່ແກ້ວຕາມສີຕ່າງໆ..........................116

ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັນຮູບພາບທຸງຊາດ, ທຸງທິວຕາມສີ ............................... 117

ກິດຈະກຳຫຼິ້ນຕາມມຸມ: ມຸມອ່ານ ແລະ ມຸມເກມການສຶກສາ ...................................................... 118

**18. ພໍ່ບ້ານຂອງຂ້ອຍ, ອາທິດທີ 4: ມື້ທີ 3**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມສຽງສັນຍານ ເຄາະ ................................... 119

ກິດຈະກຳວົງມົນ: ວັນແມ່ຍິງ ແລະ ວັນຄູ ................................................................................ 120

ກິດຈະກຳ ສິລະປະສ້າງສັນ: ການຮ້ອຍດອກໄມ້ເປັນພວງມະໄລ ................................................. 121

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນມັດຕາຈັບປຸ່ມ ເປົ້າ ..................................................... 122

ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັນຮູບພາບການສະເຫຼີມສະຫຼອງວັນແມ່ຍິງສາກົນ ............ 123

ກິດຈະກຳຫຼິ້ນຕາມມຸມ: ມຸມສິລະປະສ້າງສັນ ແລະ ແລະ ມຸມອ່ານ ............................................. 124

**19. ພໍ່ບ້ານຂອງຂ້ອຍ, ອາທິດທີ 4: ມື້ທີ 4**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມສຽງສັນຍານ ຕົບມື ..................................... 125

ກິດຈະກຳວົງມົນ: ວັນກຳມະກອນ ແລະ ວັນກອງທັບ ................................................................ 126

ກິດຈະກຳ ສິລະປະສ້າງສັນ: ຕິດເຈ້ຍມຸ່ນໃສ່ຮູບພາບຄ້ອນຕີ ...................................................... 127

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນແຂ່ງຂັນຫາມບານ ........................................................ 128

ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັນຮູບພາບການສະເຫຼີມສະຫຼອງວັນສ້າງກອງທັບ ............ 129

ກິດຈະກຳຫຼິ້ນຕາມມຸມ: ມຸມອ່ານ ແລະ ມຸມສິລະປະສ້າງສັນ ...................................................... 130

**20. ພໍ່ບ້ານຂອງຂ້ອຍ, ອາທິດທີ 4: ມື້ທີ 5**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມສຽງສັນຍານ ສັ່ນກະແຊັກ .............................. 131

ກິດຈະກຳວົງມົນ: ວັນເດັກນ້ອຍສາກົນ .................................................................................... 132

ກິດຈະກຳ ສິລະປະສ້າງສັນ: ຂີດຂຽນຕົວເລກ 13 ຕາມຮອຍຈ້ຳ ................................................. 133

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນນ້ຳ-ຫຼິ້ນຊາຍ........................................................................... 134

ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັນຮູບພາບການການສະເຫຼີມສະຫຼອງບຸນວັນເດັກນ້ອຍ ....... 135

ກິດຈະກຳຫຼິ້ນຕາມມຸມ: ມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ ........................................ 136

- ເອກະສານອ້າງອີງ ................................................................................................................ 137

# ຈຸດປະສົງລວມ

## ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

1. ປະຕິບັດຄຳສັ່ງຕາມນາຍຄູແນະນຳໄດ້ຖືກຕ້ອງ.
2. ສະແດງທ່າທາງຕາມການສັນຍານ ຍົກທຸງໄດ້ຖືກຕ້ອງ.
3. ສະແດງທ່າທາງຕາມສຽງສັນຍານ ເຄາະ, ຕົບມື, ສັ່ນກະແຊັກ, ເປົ່າໝາກຫວີດໄດ້ຖືກຕ້ອງ.
4. ສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດເພງ, ບົດຄຳຄ່ອງຢ່າງມ່ວນຊື່ນ.
5. ສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມປະກອບເນື້ອໃນບົດເພງໄດ້ຖືກຕ້ອງ.
6. ສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມຈິນຕະນາການຢ່າງມ່ວນຊື່ນ.
7. ສະແດງທ່າທາງຕາມທີ່ນາຍຄູອອກແບບປະກອບເນື້ອໃນບົດເພງ, ບົດຄຳຄ່ອງໄດ້ຖືກຕ້ອງ.
8. ຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.
9. ປອດໄພໃນເວລາສະແດງທ່າທາງ.
10. ອົດທົນໃນເວລາສະແດງທ່າທາງ.
11. ເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.
12. ຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.
13. ກ້າສະແດງອອກໃນເວລາສະແດງທ່າທາງ.
14. ມ່ວນຊື່ນໃນເວລາສະແດງທ່າທາງ.

## ກິດຈະກຳວົງມົນ

1. ບອກຊື່ບ້ານ, ໜ່ວຍ, ເລກທີເຮືອນ, ເມືອງ, ແຂວງຂອງຕົນເອງ ແລະ ບອກສະຖານທີ່ສຳຄັນໃນບ້ານໄດ້ຖືກຕ້ອງ.
2. ມີຄວາມເບີກບານມ່ວນຊື່ນໃນການຮ້ອງເພງ, ຂັບທຸ້ມຫຼວງພະບາງ ແລະ ເລົ່າຄຳຄ່ອງປະກອບທ່າທາງໄດ້ຖືກຕ້ອງ.
3. ເວົ້າເປັນຄຳສັບ, ເປັນປະໂຫຍກຕາມເນື້ອໃນບົດເພງ, ຄຳຄ່ອງ, ນິທານ ແລະ ຮູບພາບໄດ້ຊັດເຈນ.
4. ເວົ້າຄຳທີ່ສຸພາບເວົ້າກັບໝູ່ເພື່ອນ ແລະ ມີມາລະຍາດໃນການຟັງນິທານ.
5. ບອກບຸກຄົນ, ຄວາມສຳຄັນ, ການປະຕິບັດຕົນຕໍ່ການປົກຄອງບ້ານ, ບຸກຄົນພາຍໃນບ້ານ, ໂຮງຮຽນ, ວັດ, ສະຖານທີ່ທ່ອງທ່ຽວ, ສຸກສາລາ, ຕະຫຼາດ ແລະ ເດີ່ນກິລາໄດ້ຖືກຕ້ອງ.
6. ບອກໜ້າທີ່ຂອງນາຍບ້ານ ແລະ ການປະຕິບັດຕົນຕໍ່ບຸກຄົນພາຍໃນບ້ານ.
7. ປະຕິບັດຕົນຕໍ່ບຸກຄົນໃນບ້ານ, ວັດ, ສະຖານທີ່ທ່ອງທ່ຽວ, ໂຮງຮຽນ, ສຸກສາລາ, ຕະຫຼາດ ແລະ ເດີ່ນກິລາ.
8. ອ່ານອອກສຽງຄຳສັບທີ່ປະສົມກັບສະຫຼະ ×ະ, ຄຳສັບທີ່ມີ ແລະ ບໍ່ມີມີວັນນະຍຸດ ×່, ×້ ແລະ ພະຍັນຊະນະຕົ້ນ ຕາມຄຳສັບໄດ້ຊັດເຈນ.
9. ບອກຜົນການປຽບທຽບຈຳນວນເທົ່າກັນບໍ່ເກີນ10 ໄດ້ຖືກຕ້ອງ.
10. ບອກໄລຍະທາງໃກ້-ໄກໄດ້ຖືກຕ້ອງ.
11. ອ່ານຕົວເລກຈາກໃບເງິນ: ໃບ 100 ກີບ, 500 ກີບໄດ້ຖືກຕ້ອງ.
12. ບອກເຄື່ອງນຸ່ງ, ໜ້າທີ່, ຄວາມສຳຄັນຂອງຄູ, ແພດ, ຊາວນາ, ຊາວສວນ, ພໍ່ຄ້າ, ແມ່ຄ້າ, ຕຳຫຼວດ ແລະ ທະຫານ, ກຳມະກອນ ແລະ ຊ່າງ ໄດ້ຖືກຕ້ອງ.
13. ປະຕິບັດຕົນຕໍ່ຊາວນາ, ຊາວສວນ, ພໍ່ຄ້າ, ແມ່ຄ້, ທະຫານ, ຕຳຫຼວດ, ແມ່, ນາຍຄູ, ກຳມະກອນ ແລະ ຊ່າງ.
14. ບອກຜົນການປຽບທຽບໂດຍໃຊ້ຄຳວ່າ: ຕໍ່າກວ່າ, ສູງເທົ່າກັນ, ສັ້ນກວ່າ, ຍາວກວ່າ, ຍາວເທົ່າກັນ ແລະ ຈຳນວນທີ່ນ້ອຍກວ່າບໍ່ເກີນ 10 ໄດ້ຖືກຕ້ອງ.

15. ບອກສິລະປະວັນນະຄະນະດີພື້ນເມືອງຂອງແຕ່ລະພາກໄດ້ຖືກຕ້ອງ.
16. ປະຕິບັດຕົວຈິງໃນການຟ້ອນປະກອບເພງຈຳປາເມືອງລາວ.
17. ອະນຸລັກຮັກສາສິລະປະວັນນະຄະດີ, ເຄື່ອງຫັດຖະກຳ, ເຄື່ອງດົນຕີພື້ນເມືອງລາວ ແລະ ເງິນກີບລາວ.
18. ບອກເຄື່ອງດົນຕີ, ຫັດຖະກຳ ແລະ ແບບຫຼິ້ນພື້ນເມືອງໄດ້ຖືກຕ້ອງ.
19. ນັບຈຳນວນແຕ່ 1-10 ໄດ້ຖືກຕ້ອງ.
20. ບອກຮູບສີ່ແຈ, ວົງມົນຕາມຮູບພາບໄດ້ຖືກຕ້ອງ.
21. ບອກການສະເຫຼີມບຸນເຂົ້າ, ອອກພັນສາ, ບຸນພະເຫວດ, ວັນຊາດ, ວັນແມ່ຍິງ, ວັນຄູ, ວັນກຳມະກອນ, ວັນກອງທັບ, ວັນເດັກນ້ອຍສາກົນ, ແລະ ບຸນປີໃໝ່ລາວໄດ້ຖືກຕ້ອງ.
22. ປະຕິບັດຕົນໃນເວລາໄປສະເຫຼີມສະຫຼອງບຸນເຂົ້າ, ອອກພັນສາ, ບຸນພະເຫວດ ແລະ ບຸນປີໃໝ່ລາວ.
23. ບອກຊື່ເຕັມ, ຊື່ຫຍໍ້ຂອງປະເທດ ແລະ ຊື່ບັນດາແຂວງໃນປະເທດລາວໄດ້ຖືກຕ້ອງ.
24.ມີຄວາມຮັກບ້ານເກີດເມືອງນອນຂອງຕົນເອງ ແລະ ມີຄວາມເຄົາລົບນັບຖືວັນຊາດຂອງລາວ.
25. ບອກສີຂອງທຸງຊາດລາວ ແລະ ບອກບັນດາທຸງຊາດແຕ່ລະປະເທດໃນກຸ່ມອາຊຽນໄດ້ຖືກຕ້ອງ.
26. ປະຕິບັດຕົວຈິງໃນການອວຍພອນແມ່ຍິງ, ນາຍຄູ, ກຳມະກອນ, ທະຫານ ແລະ ແຕ້ມຮູບ.
27. ອ່ານຕົວເລກສັບປ່ຽນບ່ອນແຕ່ 0-5 ໄດ້ຖືກຕ້ອງ.
28. ເວົ້າອອກສຽງຄຳທີ່ຄ້າຍຄືກັນແຕ່ມີຄວາມໝາຍຕ່າງກັນຕາມຮູບພາບໄດ້ຊັດເຈນ.
29. ບອກລຳດັບທີ່ຕັ້ງຂອງເຮືອນຕາມຮູບພາບໄດ້ຖືກຕ້ອງ.
30. ອ່ານຕົວເລກອາຣັບຈາກໃບເງິນກີບໄດ້ຖືກຕ້ອງ.

## ກິດຈະກຳສິລະປະສ້າງສັນ

1. ບອກຂັ້ນຕອນການແຕ້ມຮູບພາບໝູ່ບ້ານ, ຮູບພາບດອກຈຳປາຕາມແບບ, ທາສີຮູບເຄື່ອງນຸ່ງທະຫານ ແລະ ຕຳຫຼວດ, ທາສີຮູບພາບໝາກບານ, ທາສີຮູບພາບຊໍ່ດອກໄມ້ ແລະ ທາສີຮູບພາບທຸງຊາດລາວຕາມແບບໄດ້ຖືກຕ້ອງ.
2. ບອກຂັ້ນຕອນການຂີດຂຽນສະຫຼະ ×ະ ທີ່ມີຢູ່ໃນຄຳສັບ, ຂີດຂຽນຄຳສັບທີ່ປະສົມສະຫຼະ ×ະ ແລະ ຂີດຂຽນຕົວເລກອາຣັບແຕ່ 0-4 ຕາມຮອຍຈ້ຳໄດ້ຖືກຕ້ອງ.
3. ບອກຂັ້ນຕອນການຮ້ອຍໝາກະດຸມມສະຫຼັບສີແດງ, ຟ້າ ແລະ ສີເຫຼືອງ, ຮູບຊົງເລຂາຄະນິດທີ່ມີຮູສະຫຼັບກັນ, ຮ້ອຍດອກໄມ້ເປັນພວງມະໄລ ແລະ ຮ້ອຍໄມ້ປ່ອງ 1-10 ໄດ້ຖືກຕ້ອງ.
4. ບອກຂັ້ນຕອນການພັບເຈ້ຍເປັນຮູບກາແພດ ແລະ ພືຜ້າຮູບສາມແຈເປັນຮູບວົງມົນໄດ້ຖືກຕ້ອງ.
5. ບອກຂັ້ນຕອນການສານລາຍອັດສະຫຼັບສີຂາວ, ແດງ ແລະ ສີຟ້າ, ສານລາຍອັດຕາມແບບໄດ້ຖືກຕ້ອງ.
6. ບອກຂັ້ນຕອນການຕິດເຈ້ຍມຸ່ນໃສ່ຮູບພາບລ້ອນຕີ, ຮູບພາບປູມເປົ້າ ແລະ ຕິດຮູບພາບດອກໄມ້ໃສ່ບັດອວຍພອນ ໄດ້ຖືກຕ້ອງ.
7. ທາສີຮູບພາບຊໍ່ດອກໄມ້ໄດ້ຈົບງາມ , ຮູບພາບຮູບພາບເຄື່ອງນຸ່ງຕຳຫຼວດ ແລະ ທະຫານ ແລະ ຮູບພາບໝາກບານຕາມແບບໄດ້ຈົບງາມ ແລະ ຢູ່ໃນຂອບ.
8. ແຕ້ມຮູບພາບໝູ່ບ້ານ, ແຕ້ມຮູບພາບດອກຈຳປາ, ຮູບພາບທຸງຊາດລາວຕາມແບບຕາມແບບ ແລະ ພັບເຈ້ຍເປັນຮູບກາແພດ, ພືຜ້າຮູບຜ້າຮູບສາມແຈເປັນຮູບວົງມົນໄດ້ຄ້າຍຄື.
9. ຂີດຂຽນຄຳສັບທີ່ປະສົມສະຫຼະ ×ະ, ຂີດຂຽນສະຫຼະ ×ະ ທີ່ມີຢູ່ໃນຄຳສັບ ແລະ ຂີດຂຽນຕົວເລກ 0-4 ຕາມຮອຍຈ້ຳໄດ້ຈົບງາມ.

10. ຮ້ອຍໝາກດຸມສະຫຼັບສີແດງ, ຟ້າ ແລະ ສີເຫຼືອງ, ໝາກດຸມສະຫຼັບສີແດງ, ຟ້າ ແລະ ສີເຫຼືອງ, ຮູບຊົງເລຂາຄະນິດທີ່ມີຮູສະຫຼັບກັນ, ຮ້ອຍໄມ້ປ່ອງ1-10 ໄດ້ຈົບງາມ.
11. ມີຄວາມອົດທົນໃນການຂີດຂຽນສະຫຼະ ×ະ ທີ່ມີຢູ່ໃນຄຳສັບ, ຂີດຂຽນຄຳສັບທີ່ປະສົມສະຫຼະ ×ະ ແລະ ຂີດຂຽນຕົວເລກ 0-4 ຕາມຮອຍຈ້ຳ,
12. ແບ່ງປັນສໍສີໃຫ້ກັບໝູ່ເພື່ອນ.
13. ພີຜ້າແພຮູບສາມແຈເປັນຮູບວົງມົນ, ຮ້ອຍຮູບຊົງເລຂາຄະນິດທີ່ມີຮູສະຫຼັບກັນ,ແຕ້ມຮູບພາບດອກຈຳປາ, ຮ້ອຍໄມ້ປ່ອງໄດ້ 1-10, ສານລາຍອັດ ແລະ ຕິດດອກໄມ້ໃສ່ບັດອວຍພອນ, ສານສະລັບສີຂາວ, ແດງ ແລະ ຟ້າ, ຮ້ອຍດອກໄມ້ເປັນພວງມະໄລ, ຕິເຈ້ຍມຸ່ນໃສ່ຮູບລ້ອນຕີ, ພັບເຈ້ຍເປັນຮູບກາແພດ ແລະ ຕິດເຈ້ຍມຸ່ນໃສ່ຮູບພາບປູມເປົ້າ.
14. ຕິດດອກໄມ້ໃສ່ບັດອວຍພອນ, ຕິດເຈ້ຍມຸ່ນໃສ່ຮູບພາບລ້ອນຕີ ແລະ ຕິດຮູບພາບປູມເປົ້າໄດ້ສະອາດຈົບງາມ.
15. ສານລາຍອັດຕາມແບບ, ສານລາຍອັດສະຫຼັບສີຂາວ, ແດງ ແລະ ຟ້າ ແລະ ຮ້ອຍດອກໄມ້ເປັນພວງມະໄລໄດ້ຈົບງາມ.
16. ຕິດເຈ້ຍມຸ່ນໃສ່ຮູບພາບລ້ອນຕີ ແລະ ຕິດຮູບພາບປູມເປົ້າໄດ້ສະອາດຈົບງາມ.

## ກິດຈະກຳການຫຼິ້ນກາງແຈ້ງ

1. ບອກຂັ້ນຕອນ ແລະ ກະຕິກາ ການຫຼິ້ນແບບຫຼິ້ນແຂ່ງຂັນລຳລຽງສິນຄ້າ, ຫຼິ້ນແບບຫຼິ້ນແຂ່ງຂັນປິດຕາຈັບແບ້, ຫຼິ້ນແບບຫຼິ້ນເຕັ້ນເຂົ້າວົງມົນຕາມສຽງສັນຍານ, ຫຼິ້ນດິນຊາຍ: ຜອງຊາຍໃສ່ກະປອງ, ຫຼິ້ນແບບຫຼິ້ນແຂ່ງຂັນສົ່ງໝາກໄມ້, ຫຼິ້ນແບບຫຼິ້ນໂພງພາງຕາບອດ, ຫຼິ້ນແບບຫຼິ້ນແຂ່ງຂັນເຕັ້ນຂ້າມຫ້ວຍ, ຫຼິ້ນຮ່າຍນ້ຳໃສ່ແກ້ວ ແລະ ປັ້ນຊາຍເປັນຮູບຕ່າງໆ, ຫຼິ້ນແບບຫຼິ້ນຕັ່ງວິເສດ, ຫຼິ້ນແບບຫຼິ້ນແຂ່ງຂັນຍ້າຍບ່ອນຕາມສີຕາມສຽງສັນຍານ, ຫຼິ້ນແບບຫຼິ້ນງູກິນຂຽດ, ຫຼິ້ນນ້ຳ-ຫຼິ້ນຊາຍ: ຜອງນ້ຳ, ຜອງຊາຍ, ຫຼິ້ນແບບຫຼິ້ນຕຳຫຼວດຈັບໂຈນ, ຫຼິ້ນແບບຫຼິ້ນສົ່ງໂອນ້ຳຂ້າມຫົວ, ຫຼິ້ນແບບຫຼິ້ນມັດຕາຕາບອດຊົກມວຍ, ຫຼິ້ນແບບຫຼິ້ນແຂ່ງຂັນຮ່າຍນ້ຳສີຕ່າງໆ, ຫຼິ້ນແບບຫຼິ້ນມັດຕາຈັບປຸມເປົ້າ, ຫຼິ້ນແບບຫຼິ້ນແຂ່ງຂັນຫາມບານ, ຫຼິ້ນນ້ຳ-ຫຼິ້ນຊາຍ: ຖອກນ້ຳໃສ່ພາຊະນະຕ່າງໆ ແລະ ກອງຊາຍ ເປັນຮູບຕ່າງໆຕາມໃຈ.
2. ຫຼິ້ນແບບຫຼິ້ນແຂ່ງຂັນລຳລຽງສິນຄ້າ, ຫຼິ້ນແບບຫຼິ້ນປິດຕາຈັບແບ້, ຫຼິ້ນແບບຫຼິ້ນເຕັ້ນເຂົ້າວົງມົນຕາມສຽງສັນຍານ, ຫຼິ້ນດິນຊາຍ: ຜອງຊາຍໃສ່ກະປອງ, ຫຼິ້ນແບບຫຼິ້ນແຂ່ງຂັນແລ່ນສົ່ງໝາກໄມ້, ຫຼິ້ນແບບຫຼິ້ນໂພງພາງຕາບອດ, ຫຼິ້ນແບບຫຼິ້ນແຂ່ງຂັນເຕັ້ນຂ້າມ, ຫຼິ້ນແບບຫຼິ້ນຕັ່ງວິເສດ,ຫຼິ້ນແບບຫຼິ້ນແຂ່ງຂັນຍ້າຍບ່ອນຕາມສີຕາມສຽງສັນຍານ, ຫຼິ້ນແບບຫຼິ້ນງູກິນຂຽດ, ຫຼິ້ນນ້ຳ-ຫຼິ້ນຊາຍ: ຜອງນ້ຳ, ຜອງຊາຍ, ຫຼິ້ນແບບຫຼິ້ນຕຳຫຼວດຈັບໂຈນ, ຫຼິ້ນແບບຫຼິ້ນສົ່ງໂອນ້ຳຂ້າມຫົວ, ຫຼິ້ນແບບຫຼິ້ນມັດຕາຕາບອດຊົກມວຍ, ຫຼິ້ນແບບຫຼິ້ນແຂ່ງຂັນຮ່າຍນ້ຳສີຕ່າງໆ, ຫຼິ້ນແບບຫຼິ້ນມັດຕາຈັບປຸມເປົ້າ, ການຫຼິ້ນແບບຫຼິ້ນແຂ່ງຂັນຫາມບານ, ຫຼິ້ນນ້ຳ-ຫຼິ້ນຊາຍ: ຖອກນ້ຳໃສ່ ພາຊະນະຕ່າງໆ, ກອງຊາຍ ເປັນຮູບຕ່າງໆຕາມໃຈໄດ້ຖືກຕ້ອງ.
3. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.
4. ອົດທົນໃນເວລາຫຼິ້ນແບບຫຼິ້ນ.
5. ເຝິກກ້າມຊີ້ນມືໃຫ້ມີຄວາມແຂງແຮງໃນການຜອງຊາຍ.
6. ເບີກບານມ່ວນຊື່ນໃນເວລາຫຼິ້ນ.
7. ປອດໄພໃນເວລາຫຼິ້ນແບບຫຼິ້ນ.
8. ມີມາລະຍາດທີ່ດີໃນເວລາຫຼິ້ນ.

## ກິດຈະກຳເກມການສຶກສາ

1. ບອກຊື່ເກມ, ຮູບພາບ, ອອກສຽງຕົວພະຍັນຊະນະຕົ້ນຕາມຮູບພາບ, ອອກສຽງຕົວພະຍັນຊະນະຕາມຮູບພາບທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ຕໍ່ຮູບພາບສຸກສາລາ, , ຕະຫຼາດ ແລະ ເດີ່ນກິລາ, ຊາວນາຊາວສວນ, ເດັກນ້ອຍລຳ.
3. ຈັດໝວດໝູ່ຮູບພາບວັດຕາມສີ, ຕາມປະເພດຮູບພາບເຄື່ອງດົນຕີພື້ນເມືອງລາວໄດ້ຖືກຕ້ອງ.
4. ຈັບຄູ່ທີ່ຄືກັນຮູບພາບສະຖານທີ່ສຳຄັນໃນບ້ານ, ບຸກຄົນທີ່ເຮັດວຽກໃນຫ້ອງການບ້ານ, ບຸກຄົນສຳຄັນພາຍໃນບ້ານ, ເຄື່ອງຫັດຖະກຳພື້ນເມືອງລາວ, ບຸນອອກພັນສາ, ບຸນປີໃໝ່ລາວ, ທຸງຊາດ, ທຸງທິວຕາມສີ, ການສະເຫຼີມສະຫຼອງວັນສ້າງຕັ້ງກອງທັບ, ການສະເຫຼີມສະຫຼອງວັນເດັກນ້ອຍ.
5. ຈັບຄູ່ຮູບພາບກັບຮູບພາບຕາມການອອກສຽງພະຍັນຊະນະຕົ້ນ.
6. ຈັບຄູ່ຮູບພາບກັບຕົວພະຍັນຊະນະ.
7. ຈັບຄູ່ທີ່ຄືກັນຕົວພະຍັນຊະນະ.
8. ລຽນລຳດັບຕົວເລກແຕ່ 0-9.
9. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.
10. ເກັບມ້ຽນແຜ່ນເກມ.
11. ອົດທົນໃນເວລາຫຼິ້ນເກມ.
12. ແບ່ງປັນເກມໃຫ້ໝູ່ເພື່ອນ.
13. ຄວາມສາມັກຄີໃນເວລາຫຼິ້ນເກມ.

## ກິດຈະກຳການຫຼິ້ນຕາມມຸມ

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ສຳຜັດຕໍ່ບຼັອກເປັນຮູບໝູ່ບ້ານ, ເປັນຮູບໂຮງຮຽນ ແລະ ຮົ້ວໂຮງຮຽນຕາມຈິນຕະນາການຫຼິ້ນເຄື່ອງດົນຕີ, ພິມສິ່ງທີ່ມີຮູບຮ່າງມົນ, ສີ່ແຈ, ສາມແຈ, ຈະຕຸລັດໃສ່ອ່າງດິນຊາຍ, ຕໍ່ບຼັອກເປັນຮູບຕ່າງໆຕາມຈິນຕະນາການ, ວາງຮູບເລຂາຄະນິດສະຫຼັບກັນຕາມແບບ, ວາງຮູບເລຂາຄະນິດປະກອບເປັນຮູບຕ່າງໆຢ່າງມ່ວນຊື່ນ.
3. ຂຽນສະຫະ ×ະ ທີ່ມີໃນຄຳສັບ: ກະ, ບະ, ມະ, ລະ, ສະ, ປະ, ແຕ້ມຮູບພາບໝູ່ບ້ານຕາມແບບ, ທາສີຮູບພາບໝາກບານຕາມແບບ, ພັບເຈ້ຍເປັນຮູບກາແພດ, ຂຽນຄຳສັບທີ່ມີສະຫຼະ ×ະ ແລະ ຂຽນຕາມຮອຍຈ້ຳຕົວເລກ 10, ຂຽນຕາມຮອຍຈ້ຳຄຳສັບທີ່ມີສະຫຼະ ×ະ, ຂຽນຕົວເລກ 11 ຕາມຮອຍຈ້ຳ, ທາສີຮູບພາບຮູບເຄື່ອງນຸ່ງຕ່ຳຫູວດ, ທະຫານ ແລະ ຮ້ອຍຮູບຊົງເລຂາຄະນິດທີ່ມີຮູສະຫຼັບ ກັນ, ສານລາຍອັດ, ຮ້ອຍໄມ້ປ່ອງ, ຮ້ອຍດອກໄມ້ເປັນພວງມະໄລ, ແຕ້ມ ແລະ ທາສີຮູບພາບທຸງຊາດລາວ, ຕັດ ແລະ ຕິດເຈ້ຍໃສ່ຮູບປູມເປົ້າໄດ້ຖືກຕ້ອງ.
4. ເວົ້າເປັນປະໂຫຍກຕາມຮູບພາບ: ຄົນເຈັບໄປປິ່ນປົວຢູ່ໂຮງໝໍ, ພໍ່ຄ້າຂາຍຊີ້ນຢູ່ຕະຫຼາດ, ແມ່ຄ້າຂາຍຜັກຢູ່ຕະຫຼາດ, ເດີ່ນກິລາມີຫຍ້າຂຽວງາມ, ກຳມະການເປົ່າໝາກຫວີດຕັດສິນ, ເດັກນ້ອຍສີຊໍ, ເດັກນ້ອຍຕີສິ່ງ, ເດັກນ້ອຍເປົ່າແຄນ, ອ່ານຕາມຮູບພາບໃນປຶ້ມບົດເລື່ອງກ່ຽວກັບໝູ່ບ້ານ, ອ່ານຄຳສັບຕາມຮູບພາບ, ອ່ານຄຳສັບທີ່ມີສະຫຼະ ×ະ, ອ່ານຄຳສັບທີ່ມີສະຫຼະ ×ະ, ×າ, ອ່ານຕາມຮູບພາບໃນປຶ້ມນິທານ ເລື່ອງໜ້າທີ່ຂອງໃຜ, ອ່ານສະຫະ ×ະ ທີ່ມີໃນຄຳສັບ: ກະ, ບະ, ມະ, ລະ, ສະ, ປະ, ນັບຮູບພາບແມງໄມ້ ແລະ ບອກຈຳນວນ 9 10 11 ໂຕ, ເວົ້າເປັນປະໂຫຍກຕາມຮູບພາບ, ອ່ານຮູບພາບຕາມປຶ້ມນິທານເລື່ອງ ສອງສ່ຽວເວນຍາມ, ອ່ານຮູບພາບຕາມປຶ້ມນິທານເລື່ອງ ປີໃໝ່ລາວ, ນັບຮູບພາບໝາກໄມ້ ແລະ ບອກຈຳນວນໝາກໄມ້ 10 12 14 ໜ່ວຍ, ອ່ານປະໂຫຍກທີ່ມີສະຫຼະ ×າ ×ິ ×ີ, ນັບຮູບພາບສັດ ແລະ ບອກຈຳນວນສັດ 10 11 12, ອ່ານຕົວເລກສັບບ່ອນແຕ່ 0-5, ອ່ານຄຳສັບທີ່ມີຕົວສະກົດ: ກ, ນ,ງ, ດ, ບ, ມ ໄດ້ຊັດເຈນ.

5. ຫຼິ້ນບົດບາດສົມມຸດເປັນນາຍບ້ານລົງຢ້ຽມຢາມລູກບ້ານ, ເປັນນັກທ່ອງທ່ຽວໄປທ່ອງທ່ຽວຕາມສະຖານທີ່ຕ່າງໆ, ເປັນນາຍຄູສອນໜັງສືນັກຮຽນ, ເປັນທ່ານໝໍນ້ອຍກວດພະຍາດໃຫ້ຄົນເຈັບ, ເປັນພໍ່ຄ້າ, ແມ່ຄ້າ, ລູກຄ້າຊື້ຂາຍເຄື່ອງ, ເປັນນັກກິລາເຕະບານ, ເປັນນາຍຄູສອນນັກຮຽນຂຽນພະຍັນຊະນະ: ມ, ຈ, ດ, ສ, ຖ, ເປັນນັກກິລາເຕະບານ, ເປັນນາຍຄູສອນນັກຮຽນຂຽນຕົວເລກອາຣັບແຕ່ 0-4 ເປັນຕໍ່າຫຼວດກວດລົດຕາມເສັ້ນທາງ, ເປັນທະຫານຂີ່ເຮືອກວດຍາມ, ຕາມແຄມນໍ້າຢ່າງມ່ວນຊື່ນ.
6. ຈັບຄູ່ຮູບພາບກັບຮູບພາບຕາມການອອກສຽງພະຍັນຊະນະຕົ້ນ; ຈັບຄູ່ທີ່ຄືກັນຕົວພະຍັນຊະນະ, ຈັບຄູ່ຮູບພາບກັບຕົວພະຍັນຊະນະ; ຈັບຄູ່ທີ່ຄືກັນຮູບພາບການສະເຫຼີມສະຫຼອງວັນແມ່ຍິງ; ຈັບຄູ່ທີ່ຄືກັນຮູບພາບບຸກຄົນທີ່ເຮັດວຽກໃນຫ້ອງການບ້ານ, ຈັບຄູ່ທີ່ຄືກັນຮູບພາບສະຖານທີ່ສຳຄັນໃນບ້ານ, ຈັບຄູ່ທີ່ຄືກັນຮູບພາບບຸກຄົນສຳຄັນພາຍໃນບ້ານ, ເຄື່ອງຫັດຖະກຳພື້ນເມືອງລາວ, ບຸນອອກພັນສາ, ບຸນປີໃໝ່ລາວ, ທຸງຊາດ ແລະ ທຸງທິວຕາມສີ, ການສະເຫຼີມສະຫຼອງວັນແມ່ຍິງສາກົນ, ການສະເຫຼີມສະຫຼອງວັນສ້າງຕັ້ງກອງທັບ; ຈັດໝວດໝູ່ຮູບພາບ ວັດຕາມສີ, ຕາມປະເພດນິເຄື່ອງດົນຕີພື້ນເມືອງລາວ; ຕໍ່ຮູບພາບສຸກສາລາ, ໂຮງຮຽນ, ຕໍ່ຮູບພາບຕະຫຼາດ ແລະ ເດີ່ນກິລາ, ເດັກນ້ອຍລຳ.
7. ທົດລອງຊັ່ງນໍ້າໜັກຜັກ, ທົດລອງຊັ່ງນໍ້າໜັກໝາກໄມ້,
8. ເກັບມ້ຽນເຄື່ອງຫຼິ້ນໄວເປັນລະບຽບ ແລະ ຖືກບ່ອນທີ່ກຳນົດໄວ້.
9. ເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.
10. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.
11. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.
12. ມີມາລະຍາດທີ່ດີກັບໝູ່ເພື່ອນໃນເວລາຫຼິ້ນ.

# ຈຸດປະສົງສຳລັບ ອາທິດທີ 1
## ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

ເພື່ອໃຫ້ເດັກນ້ອຍສາມາດ:

1. ປະຕິບັດຄຳສັ່ງຕາມນາຍຄູແນະນຳໄດ້ຖືກຕ້ອງ.
2. ສະແດງທ່າທາງຕາມສຽງສັນຍານ ເປົ່າໝາກຫວີດໄດ້ຖືກຕ້ອງ.
3. ສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດເພງຢ່າງມ່ວນຊື່ນ.
4. ສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມປະກອບເນື້ອໃນບົດເພງໄດ້ຖືກຕ້ອງ.
5. ຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.
6. ຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.
7. ກ້າສະແດງອອກໃນເວລາສະແດງທ່າທາງ.
8. ປອດໄພໃນເວລາສະແດງທ່າທາງ.



## ກິດຈະກຳວົງມົນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ບ້ານ, ໜ່ວຍ, ເລກທີເຮືອນຂອງຕົນເອງ ແລະ ບອກສະຖານທີ່ສຳຄັນໃນບ້ານໄດ້ຖືກຕ້ອງ.
2. ມີຄວາມເບີກບານມ່ວນຊື່ນໃນການຮ້ອງເພງປະກອບທ່າທາງ.
3. ເວົ້າເປັນຄຳສັບ, ເປັນປະໂຫຍກຕາມເນື້ອໃນບົດເພງ ແລະ ຮູບພາບໄດ້ຊັດເຈນ.
4. ເວົ້າຄຳທີ່ສຸພາບເວົ້າກັບໝູ່ເພື່ອນ.
5. ບອກບຸກຄົນ, ຄວາມສຳຄັນ, ການປະຕິບັດຕົນຕໍ່ການປົກຄອງບ້ານ, ບຸກຄົນພາຍໃນບ້ານ, ໂຮງຮຽນ, ວັດ, ສະຖານທີ່ທ່ອງທ່ຽວ, ສຸກສາລາ, ຕະຫຼາດ ແລະ ເດີ່ນກິລາໄດ້ຖືກຕ້ອງ.
6. ບອກໜ້າທີ່ຂອງນາຍບ້ານ ແລະ ການປະຕິບັດຕົນຕໍ່ບຸກຄົນພາຍໃນບ້ານ.
7. ປະຕິບັດຕົນຕໍ່ບຸກຄົນໃນບ້ານ, ວັດ, ສະຖານທີ່ທ່ອງທ່ຽວ, ໂຮງຮຽນ, ສຸກສາລາ, ຕະຫຼາດ ແລະ ເດີ່ນກິລາ.
8. ອ່ານອອກສຽງຄຳສັບທີ່ປະສົມກັບສະຫຼະ ×ະ ແລະ ພະຍັນຊະນະຕົ້ນຕາມຄຳສັບໄດ້ຊັດເຈນ.
9. ບອກຜົນການປຽບທຽບຈຳນວນເທົ່າກັນບໍ່ເກີນ 10 ໄດ້ຖືກຕ້ອງ.
10. ບອກໄລຍະທາງໃກ້-ໄກໄດ້ຖືກຕ້ອງ.
11. ເລົ່າຄຳຄ່ອງປະກອບທ່າທາງໄດ້ຖືກຕ້ອງ.
12. ອ່ານຕົວເລກຈາກໃບເງິນ: ໃບ 100 ກີບ, 500 ກີບໄດ້ຖືກຕ້ອງ.



# ກິດຈະກຳສິລະປະສ້າງສັນ

ເພື່ອໃຫ້ເດັກນ້ອຍສາມາດ

1. ບອກຂັ້ນຕອນການແຕ້ມຮູບພາບໝູ່ບ້ານຕາມແບບໄດ້ຖືກຕ້ອງ, ຂີດຂຽນສະຫຼະ ×ະ ຕາມຄຳສັບ, ຮ້ອຍໝາກດຸມມສະຫຼັບສີແດງ, ຟ້າ ແລະ ສີເຫຼືອງ, ພັບເຈ້ຍເປັນຮູບກາແພດ ແລະ ບອກຂັ້ນຕອນການທາສີຮູບພາບເດີ່ນກິລາໄດ້ຖືກຕ້ອງ.
2. ແຕ້ມຮູບພາບໝູ່ບ້ານຕາມແບບ ແລະ ພັບເຈ້ຍເປັນຮູບກາແພດໄດ້ຄ້າຍຄື.
3. ຂີດຂຽນສະຫຼະ ×ະ ຕາມຄຳສັບໄດ້ຈົບງາມ.
4. ຮ້ອຍໝາກດຸມສະຫຼັບສີແດງ, ຟ້າ ແລະ ສີເຫຼືອງໄດ້ຈົບງາມ.
5. ທາສີຮູບພາບເດີ່ນກິລາໄດ້ຈົບງາມ ແລະ ຢູ່ໃນຂອບ.
6. ມີຄວາມອົດທົນໃນການແຕ້ມຮູບພາບຕາມແບບ, ຂີດຂຽນສະຫຼະ ×ະ ຕາມຄຳສັບ, ຮ້ອຍໝາກດຸມ ສະຫຼັບສີແດງ, ຟ້າ ແລະ ສີເຫຼືອງ ແລະ ພັບເຈ້ຍເປັນຮູບກາແພດ.
7. ແບ່ງປັນສໍສີໃຫ້ກັບໝູ່ເພື່ອນ.



# ກິດຈະກຳການຫຼິ້ນກາງແຈ້ງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາ ການຫຼິ້ນແບບຫຼິ້ນແຂ່ງຂັນລຳລຽງສິນຄ້າ, ຫຼິ້ນແບບຫຼິ້ນແຂ່ງຂັນປິດຕາຈັບແບ້, ຫຼິ້ນແບບຫຼິ້ນເຕັ້ນເຂົ້າວົງມົນຕາມສຽງສັນຍານ, ຫຼິ້ນດິນຊາຍ: ຜອງຊາຍໃສ່ກະປອງ ແລະ ຫຼິ້ນແບບຫຼິ້ນແຂ່ງຂັນສິ່ງພາກໄມ້.
2. ຫຼິ້ນແບບຫຼິ້ນແຂ່ງຂັນລຳລຽງສິນຄ້າ, ຫຼິ້ນແບບຫຼິ້ນປິດຕາຈັບແບ້, ຫຼິ້ນແບບຫຼິ້ນເຕັ້ນເຂົ້າວົງມົນຕາມສຽງສັນຍານ, ຫຼິ້ນດິນຊາຍ: ຜອງຊາຍໃສ່ກະປອງ, ຫຼິ້ນແບບຫຼັ້ນແຂ່ງຂັນສິ່ງພາກໄມ້ໄດ້ຖືກຕ້ອງ.
3. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.
4. ອົດທົນໃນເວລາຫຼິ້ນແບບຫຼິ້ນ.
5. ເຝິກກ້າມຊີ້ນມືໃຫ້ມີຄວາມແຂງແຮງໃນການຜອງຊາຍ.
6. ເບີກບານມ່ວນຊື່ນໃນເວລາຫຼິ້ນ.



## ກິດຈະກຳເກມການສຶກສາ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັນຮູບພາບສະຖານທີ່ສຳຄັນໃນບ້ານ, ບຸກຄົນທີ່ເຮັດວຽກໃນຫ້ອງການບ້ານໄດ້ຖືກຕ້ອງ.
3. ຈັດໝວດໝູ່ຮູບພາບວັດຕາມສີໄດ້ຖືກຕ້ອງ.
4. ຕໍ່ຮູບພາບສຸກສາລາ, ຕະຫຼາດ ແລະ ເດີ່ນກິລາໄດ້ຖືກຕ້ອງ.
5. ເກັບມ້ຽນແຜ່ນເກມ.
6. ຄວາມອົດທົນໃນເວລາຫຼິ້ນເກມ.
7. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

## ກິດຈະກຳການຫຼິ້ນຕາມມຸມ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ສຳຜັດຕໍ່ບັ້ອກເປັນຮູບໝູ່ບ້ານ, ເປັນຮູບໂຮງຮຽນ ແລະ ຮົ້ວໂຮງຮຽນຕາມຈິນຕະນາການຢ່າງມ່ວນຊື່ນ
3. ຂຽນສະຫະ ×ະ ຕາມຄຳສັບ: ກະ, ບະ, ສະ, ປະ, ຈະ, ລະ, ວະ, ມະ, ຂະ ແຕ້ມຮູບພາບໝູ່ບ້ານຕາມແບບ, ທາສີຮູບພາບເດີ່ນກິລາ, ພັບເຈ້ຍເປັນຮູບກາແຜດໄດ້ຖືກຕ້ອງ.
4. ເວົ້າເປັນປະໂຫຍກຕາມຮູບພາບ: ຄົນເຈັບໄປປິ່ນປົວຢູ່ໂຮງໝໍ, ພໍ່ຄ້າຂາຍຊີ້ນຢູ່ຕະຫຼາດ, ແມ່ຄ້າຂາຍຜັກຢູ່ຕະຫຼາດ, ເດີ່ນກິລາມີຫຍ້າຂຽວງາມ, ກຳມະການເປົ່າພາກຫວີດຕັດສິນ, ເດັກນ້ອຍສີຊໍ, ເດັກນ້ອຍຕີສິ່ງ, ເດັກນ້ອຍເປົ່າແຄນ, ອ່ານຕາມຮູບພາບໃນປຶ້ມນິດເລື່ອງກ່ຽວກັບໝູ່ບ້ານ, ອ່ານອອກສຽງພະຍັນຊະນະຕົ້ນຕາມຄຳສັບ: ບ້ານ (ບ), ຕະຫຼາດ (ຕ), ນາຍບ້ານ (ນ), ຊາວສວນ (ຊ), ສຸກສາລາ (ສ), ຮ້ານຂາຍເຄື່ອງ (ຮ), ອ່ານອອກສຽງຄຳສັບທີ່ປະສົມກັບສະຫຼະ: : ກະ, ບະ, ສະ, ປະ, ທະ, ພະ, ມະ, ລະ, ວະ, ງະ ໄດ້ຊັດເຈນ.
5. ຫຼິ້ນບົດບາດສົມມຸດເປັນນາຍບ້ານລົງຢ້ຽມຢາມລູກບ້ານ, ເປັນນັກທ່ອງທ່ຽວໄປທ່ອງທ່ຽວຕາມສະຖານທີ່ຕ່າງໆ, ເປັນນາຍຄູສອນໜັງສືນັກຮຽນ, ເປັນທ່ານໝໍນ້ອຍກວດພະຍາດໃຫ້ຄົນເຈັບ, ເປັນພໍ່ຄ້າ, ແມ່ຄ້າ, ລູກຄ້າຊື້ຂາຍເຄື່ອງ, ເປັນນັກກິລາເຕະບານຢ່າງມ່ວນຊື່ນ.
6. ວາງຮູບວົງມົນ, ສາມແຈ ເປັນຮູບອາຄານຕາມແບບ ແລະ ຕາມຄວາມຄິດຂອງເດັກ, ຈັບຄູ່ຮູບພາບບຸກຄົນພາຍໃນບ້ານທີ່ຄືກັນ: ນາຍບ້ານຍິງ, ນາຍບ້ານຊາຍ, ສະຫະພັນແມ່ຍິງ, ຊາວໜຸ່ມຊາຍ, ຊາວໜຸ່ມຍິງ ແລະ ກອງຫຼອນ, ສຶກສາລາຍລະອຽດບຸກຄົນສຳຄັນໃນໂຮງຮຽນ ແລະ ສຸກສາລາ: ຜູ້ອຳນວຍການໂຮງຮຽນ, ນາຍຄູ, ແມ່ລ້ຽງ, ພະນັກງານອະນາໄມ, ທ່ານໝໍ, ພະຍາບານ ໄດ້ຖືກຕ້ອງ.
7. ເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.
8. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.
9. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກໍາການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວປະຕິບັດຄໍາສັ່ງຕາມນາຍຄູແນະນໍາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ປະຕິບັດຄໍາສັ່ງຕາມນາຍຄູແນະນໍາໄດ້ຖືກຕ້ອງ.
2. ປອດໄພໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການປະຕິບັດຄໍາສັ່ງຕາມນາຍຄູແນະນໍາ: ນັບບາດຍ່າງຖອຍຫຼັງ 10-1.

### III. ສື່ການຮຽນ-ການສອນ

ທ່າຫັດກາຍະບໍລິຫານລໍາຄໍ ແລະ ແຂນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກໍາການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານລໍາຄໍ ແລະ ແຂນ: ທ່າໝູນລໍາຄໍໄປທາງເບື້ອງຊ້າຍ, ເບື້ອງຂວາ ແລະ ທ່າຍົກແຂນຂຶ້ນເທິງຫົວ.
2. ໃຫ້ເດັກນ້ອຍເຕັ້ນຊິກແຊັກໄປເບື້ອງຊ້າຍ-ຂວາໄລຍະຍາວ 3 ແມັດ.
3. ນາຍຄູແນະນໍາ ແລະ ສາທິດການປະຕິບັດຄໍາສັ່ງຕາມນາຍຄູແນະນໍາ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍຢືນວາແຂນຫາຍໃຈເຂົ້າ, ເອົາແຂນລົງຫາຍໃຈອອກ.
6. ໃຫ້ເດັກນ້ອຍປະຕິບັດຄືນການປະຕິບັດຄໍາສັ່ງຕາມນາຍຄູແນະນໍາ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມປອດໄພໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການປະຕິບັດຄໍາສັ່ງຕາມນາຍຄູແນະນໍາ.
2. ຄວາມປອດໄພໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ບ້ານ ແລະ ສະຖານທີ່ສຳຄັນໃນບ້ານ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ບ້ານ, ໜ່ວຍ, ເລກທີເຮືອນຂອງຕົນເອງ ແລະ ບອກສະຖານທີ່ສຳຄັນໃນບ້ານໄດ້ຖືກຕ້ອງ.
2. ເວົ້າຄຳສັບຄາມເນື້ອໃນບົດເພງ ແລະ ເວົ້າປະໂຫຍກຕາມຮູບພາບໄດ້ຊັດເຈນ.
3. ມີຄວາມຮັກບ້ານເກີດເມືອງນອນຂອງຕົນ.

### II. ເນື້ອໃນຕົ້ນຕໍ

1. ຊື່ບ້ານທີ່ຢູ່ຕົນເອງ ແລະ ສະຖານທີ່ສຳຄັນພາຍໃນບ້ານ.
   - ຊື່ບ້ານ...... ໜ່ວຍ..... ເຮືອນເລກທີຂອງຕົນເອງ.
   - ສະຖານທີ່ສຳຄັນພາຍໃນບ້ານປະກອບມີຫ້ອງການປົກຄອງບ້ານ, ວັດ, ສະຖານທີ່ທ່ອງທ່ຽວ, ໂຮງຮຽນ, ສຸກສາລາ, ຕະຫຼາດ ຫຼື ຮ້ານຂາຍເຄື່ອງ ແລະ ເດີ່ນກິລາ.
2. ການຮ້ອງເພງ ບ້ານຂອງຂ້ອຍ, ເວົ້າຄຳສັບຕາມເນື້ອໃນບົດເພງ: ບ້ານ, ວັດ, ສຸກສາລາ, ຕະຫຼາດ, ຮ້ານຄ້າ, ໂຮງຮຽນ, ຫ້ອງການບ້ານ, ເບິ່ງແຍງ, ສາມັກຄີ.
3. ເວົ້າປະໂຫຍກຕາມຮູບພາບ: ຄົນເຈັບໄປປິ່ນປົວຢູ່ໂຮງໝໍ, ແມ່ຄ້າຂາຍຜັກຢູ່ຕະຫຼາດ, ເດັກນ້ອຍ ສີຊໍ, ເດັກນ້ອຍເປົ່າແຄນ.

### III. ສື່ການຮຽນ-ການສອນ

1. ບົດເພງ ບ້ານຂອງຂ້ອຍ.
2. ຮູບພາບ: ວັດ, ສະຖານທີ່ທ່ອງທ່ຽວ, ໂຮງຮຽນ, ສຸກສາລາ, ຮ້ານຂາຍເຄື່ອງ, ເດີ່ນກິລາ, ຄົນເຈັບໄປປິ່ນປົວຢູ່ໂຮງໝໍ, ແມ່ຄ້າຂາຍຜັກຢູ່ຕະຫຼາດ, ເດັກນ້ອຍສີຊໍ, ເດັກນ້ອຍເປົ່າແຄນ.

### IV. ກິດຈະກຳການຮຽນ -ການສອນ

1. ນາຍຄູສົນທະນກັບເດັກນ້ອຍກ່ຽວກັບຊື່ບ້ານທີ່ເດັກນ້ອຍອາໃສຢູ່ຕາມທີ່ເດັກນ້ອຍຮູ້ຈັກ.
2. ໃຫ້ເດັກນ້ອຍຮ້ອງເພງ, ສົນທະນາ, ເວົ້າຄຳສັບຕາມເນື້ອໃນບົດເພງ.
3. ໃຫ້ເດັກນ້ອຍສັງເກດຮູບພາບ, ສົນທະນາກັບເດັກນ້ອຍກ່ຽວກັບຊື່ບ້ານຂອງຕົນເອງ ແລະ ສະຖານທີ່ສຳຄັນພາຍໃນບ້ານ.
4. ໃຫ້ເດັກນ້ອຍເວົ້າເປັນປະໂຫຍກຕາມຮູບພາບ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ບ້ານທີ່ເດັກອາໃສຢູ່ ແລະ ສະຖານທີ່ສຳຄັນພາຍໃນບ້ານ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີຮັກແພງກັນ ແລະ ຮັກບ້ານເກີດເມືອງນອນຂອງຕົນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ບ້ານ, ໜ່ວຍ, ເລກທີເຮືອນຂອງຕົນເອງ ແລະ ບອກສະຖານທີ່ສຳຄັນພາຍໃນບ້ານ.
2. ຄວາມຊັດເຈນໃນການເວົ້າຄຳສັບຕາມເນື້ອໃນບົດເພງ ແລະ ປະໂຫຍກຕາມຮູບພາບ.
3. ມີຄວາມຮັກບ້ານເກີດເມືອງນອນຂອງຕົນ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ແຕ້ມຮູບພາບໝູ່ບ້ານ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການແຕ້ມຮູບພາບໝູ່ບ້ານຕາມແບບໄດ້ຖືກຕ້ອງ.
2. ແຕ້ມຮູບພາບໝູ່ບ້ານຕາມແບບໄດ້ຄ້າຍຄື.
3. ມີຄວາມອົດທົນໃນການແຕ້ມຮູບພາບຕາມແບບ.

### II. ເນື້ອໃນຕົ້ນຕໍ

ການແຕ້ມຮູບພາບໝູ່ບ້ານຕາມແບບ.

### III. ສື່ການຮຽນ-ການສອນ

1. ເຈ້ຍຂາວ, ສໍດຳ, ຢາງລຶບ.
2. ເຈ້ຍຮູບພາບໝູ່ບ້ານທີ່ແຕ້ມແລ້ວ.
3. ບົດເພງ ບ້ານຂອງຂ້ອຍ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ບ້ານຂອງຂ້ອຍ ປະກອບທ່າທາງ
2. ໃຫ້ເດັກນ້ອຍສັງເກດຮູບພາບໝູ່ບ້ານ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການແຕ້ມຮູບພາບ.
3. ນາຍຄູແນະນຳ, ສາທິດວິທີ ແລະ  ຂັ້ນຕອນການແຕ້ມຮູບພາບໝູ່ບ້ານຕາມແບບ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການແຕ້ມຮູບພາບໝູ່ບ້ານຕາມແບບ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນ, ຄວາມສາມັກຄີ ແລະ ເກັບມ້ຽນຜົນໄວ້.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການແຕ້ມຮູບພາບໝູ່ບ້ານຕາມແບບ.
2. ຄວາມຄ້າຍຄືໃນການແຕ້ມຮູບພາບແມ່ນ້ຳຕາມແບບ.
3. ຄວາມອົດທົນໃນການແຕ້ມຮູບພາບແມ່ນ້ຳຕາມແບບ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້ : ແບບຫຼິ້ນແຂ່ງຂັນລຳລຽງສິນຄ້າ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນແຂ່ງຂັນລຳລຽງສິນຄ້າໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນແຂ່ງຂັນລຳລຽງສິນຄ້າໄດ້ຖືກຕ້ອງ.
3. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນແຂ່ງຂັນລຳລຽງສິນຄ້າ.

### III. ສື່ການຮຽນ-ການສອນ

1. ໂຕະນ້ອຍ, ເຄື່ອງຫຼິ້ນ ແລະ ໝາກຫວິດ.
2. ເຄື່ອງຫຼິ້ນ.
3. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).
4. ບົດເພງ ບ້ານຂອງຂ້ອຍ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ບ້ານຂອງຂ້ອຍ ປະກອບທ່າທາງ
2. ນາຍຄູສະເໜີ ແບບຫຼິ້ນ ແລະ ສາທິດວິທີຫຼິ້ນແບບຫຼິ້ນແຂ່ງຂັນລຳລຽງສິນຄ້າ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນແຂ່ງຂັນລຳລຽງສິນຄ້າ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນແຂ່ງຂັນລຳລຽງສິນຄ້າ.
5. ສຶກສາອົບຮົມເດັກນ້ອຍ ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ລະວັງບໍ່ໃຫ້ລົ້ມ, ອົດທົນລໍຖ້າຫຼິ້ນຕາມລຳດັບ, ຫຼິ້ນແລ້ວອະນາໄມຕີນ ແລະ ມືໃຫ້ສະອາດ.
6. ໃຫ້ເດັກນ້ອຍຄ້ຳແອວ ຍືດໂຕຂຶ້ນ ແລະ ນັ່ງລົງ, ຫຼັງຈາກນັ້ນປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນແຂ່ງຂັນລຳລຽງສິນຄ້າ.
3. ການຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັນຮູບພາບສະຖານທີ່ສຳຄັນໃນບ້ານ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັນຮູບພາບສະຖານທີ່ສຳຄັນໃນບ້ານໄດ້ຖືກຕ້ອງ.
3. ເກັບມ້ຽນແຜ່ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັນຮູບພາບສະຖານທີ່ສຳຄັນໃນບ້ານ: ຕະຫຼາດ, ຮ້ານຂາຍເຄື່ອງ, ໂຮງໝໍ, ສຸກສາລາ, ໂຮງຮຽນ, ວັດ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັນຮູບພາບສະຖານທີ່ສຳຄັນໃນບ້ານ: ຕະຫຼາດ, ຮ້ານຂາຍເຄື່ອງ, ໂຮງໝໍ, ສຸກສາລາ, ໂຮງຮຽນ, ວັດ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ຮູບພາບການປະຕິບັດກິດຈະກຳຂອງເດັກນ້ອຍທີ່ຄືກັນ.
3. ບົດເພງ ບ້ານຂອງຂ້ອຍ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ບ້ານຂອງຂ້ອຍ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຈັບທີ່ຄືກັນຮູບພາບສະຖານທີ່ສຳຄັນໃນບ້ານ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການເວົ້າຄຳທີ່ສຸພາບ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັນຮູບພາບສະຖານທີ່ສຳຄັນໃນບ້ານ.
3. ການເກັບມ້ຽນແຜ່ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມອ່ານ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຕໍ່ບູ້ອກເປັນຮູບໝູ່ບ້ານ, ເປັນຮູບໂຮງຮຽນ ແລະ ຮົ້ວໂຮງຮຽນຕາມຈິນຕະນາການຢ່າງມ່ວນຊື່ນ.
3. ເວົ້າປະໂຫຍກຕາມຮູບພາບໄດ້ຊັດເຈນ.
4. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມອ່ານ.
2. ການຕໍ່ບູ້ອກເປັນຮູບໝູ່ບ້ານ, ຮູບໂຮງຮຽນ ແລະ ຮົ້ວໂຮງຮຽນຕາມ ຈິນຕະນາການ.
3. ເວົ້າເປັນປະໂຫຍກຕາມຮູບພາບ: ຄົນເຈັບໄປປິ່ນປົວຢູ່ໂຮງໝໍ, ພໍ່ຄ້າຂາຍຊີ້ນຢູ່ຕະຫຼາດ, ແມ່ຄ້າຂາຍຜັກຢູ່ຕະຫຼາດ, ເດີ່ນກິລາມີຫຍ້າຂຽວງາມ, ກຳມະການເປົ່າໝາກຫວີດຕັດສິນ, ເດັກນ້ອຍສີຊໍ, ເດັກນ້ອຍຕີສິ່ງ, ເດັກນ້ອຍເປົ່າແຄນ.

### III. ສື່ການຮຽນ-ການສອນ

1. ມຸມເຄື່ອງຫຼິ້ນສຳຜັດ: ຊຸດບູ້ອກ.
2. ມຸມອ່ານ: ກະດານສຽບ ຫຼື ຕິດ, ຮູບພາບຄົນເຈັບໄປປິ່ນປົວຢູ່ໂຮງໝໍ, ພໍ່ຄ້າຂາຍຊີ້ນຢູ່ຕະຫຼາດ, ແມ່ຄ້າຂາຍຜັກຢູ່ຕະຫຼາດ, ເດີ່ນກິລາມີຫຍ້າຂຽວງາມ, ກຳມະການເປົ່າໝາກຫວີດຕັດສິນ, ເດັກນ້ອຍສີຊໍ, ເດັກນ້ອຍຕີສິ່ງ, ເດັກນ້ອຍເປົ່າແຄນ.
3. ບົດເພງ ບ້ານຂອງຂ້ອຍ; ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ບ້ານຂອງຂ້ອຍ ປະກອບທ່າທາງຕາມຈິນຕະນາການ.
2. ນາຍຄູສົນທະນາກັບເດັກກ່ຽວກັບເຄື່ອງຫຼິ້ນ ແລະ ແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມອ່ານ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມອ່ານ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມມ່ວນຊື່ນໃນການຕໍ່ບູ້ອກເປັນຮູບໝູ່ບ້ານເປັນຮູບໂຮງຮຽນ ແລະ ຮົ້ວໂຮງຮຽນຕາມຈິນຕະນາການ.
3. ຄວາມຊັດເຈນໃນການເວົ້າເປັນປະໂຫຍກຕາມຮູບພາບ.
4. ການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວປະຕິບັດຄຳສັ່ງຕາມນາຍຄູແນະນຳ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ປະຕິບັດຄຳສັ່ງຕາມນາຍຄູແນະນຳໄດ້ຖືກຕ້ອງ.
2. ຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.

### II. ເນື້ອໃນຕົ້ນຕໍ

ການປະຕິບັດຄຳສັ່ງຕາມນາຍຄູແນະນຳ: ກວາດເດີ່ນ, ຫົດນ້ຳດອກໄມ້.

### III. ສື່ການຮຽນ-ການສອນ

1. ກະແຊັກ.
2. ທ່າຫັດກາຍະບໍລິຫານມື ແລະ ແອວ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານມື ແລະ ແອວ: ຢືນຕົບມືທາງໜ້າ, ຂ້າງຊ້າຍ, ຂ້າງຂວາ ແລະ ທ່າໝູນແອວໄປອ້ອມຮອບ.
2. ໃຫ້ເດັກນ້ອຍໂດດຕົບກະແຊັກສູງ 2 ແມັດ.
3. ນາຍຄູແນະນຳ ແລະ ສາທິດການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງຄູ້ຂາເອົາມືທັງສອງຄົ່ມພື້ນທາງຫຼັງ, ພ້ອມທັງສັ່ນຂາ.
6. ໃຫ້ເດັກນ້ອຍປະຕິບັດຄືນການການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
2. ຄວາມຕັ້ງໃຈໃນການຟັງຄຳສັ່ງຂອງນາຍຄູ.

# ກິດຈະກຳວິງມົນ

## ຫົວຂໍ້: ຫ້ອງການປົກຄອງບ້ານ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກບຸກຄົນ ແລະ ຄວາມສຳຄັນຂອງຫ້ອງການປົກຄອງບ້ານໄດ້ຖືກຕ້ອງ.
2. ບອກໜ້າທີ່ຂອງນາຍບ້ານ ແລະ ການປະຕິບັດຕົນຕໍ່ບຸກຄົນພາຍໃນບ້ານ.
3. ອ່ານອອກສຽງຄຳສັບທີ່ປະສົມກັບສະຫຼະ ×ະ ໄດ້ຊັດເຈນ.
4. ບອກຜົນການປຽບທຽບຈຳນວນເທົ່າກັນບໍ່ເກີນ 10 ໄດ້ຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

1. ຫ້ອງການປົກຄອງບ້ານ, ບຸກຄົນ, ຄວາມສຳຄັນ ແລະ ການປະຕິບັດຕົນ.
   - ບຸກຄົນໃນຫ້ອງການປົກຄອງບ້ານປະກອບມີ: ນາຍບ້ານ, ຮອງນາຍບ້ານ 2 ຄົນ, ອົງການຈັດຕັ້ງແນວໂຮມ, ສະຫະພັນແມ່ຍິງ, ຊາວໜຸ່ມ ແລະ ກອງຫຼອນ; ໜ້າທີ່ຂອງນາຍບ້ານ: ເບິ່ງແຍງປະຊາຊົນພາຍໃນບ້ານ.
   - ຄວາມສຳຄັນຂອງຫ້ອງການປົກຄອງບ້ານ: ເປັນບ່ອນເຕົ້າໂຮມ, ປຶກສາຫາລືວຽກງານຕ່າງໆຂອງປະຊາຊົນພາຍໃນບ້ານ.
   - ການປະຕິບັດຕົນ: ເຄົາລົບນັບຖື, ປະຕິບັດຕາມຄຳແນະນຳທີ່ດີຂອງຜູ້ໃຫຍ່ພາຍໃນບ້ານ.
2. ອ່ານອອກສຽງຄຳສັບທີ່ປະສົມກັບສະຫຼະ ×ະ : ກະ ບະ ສະ ປະ ທະ ພະ ລະ ວະ ມະ ງະ.
3. ປຽບທຽບຈຳນວນເທົ່າກັນບໍ່ເກີນ 10.

### III. ສື່ການຮຽນ-ການສອນ

1. ຮູບພາບ: ນາຍບ້ານ, ແນວໂຮມ, ແມ່ຍິງ, ກອງຫຼອນຈຳນວນ 1-10 ຮູບ.
2. ບັດຄຳສັບ: ກະ ບະ ສະ ປະ ທະ ພະ ລະ ວະ ມະ ງະ.

### IV. ກິດຈະກຳການຮຽນ-ການສອນ.

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບສະຖານທີ່ສຳຄັນພາຍໃນບ້ານ.
2. ໃຫ້ເດັກນ້ອຍສັງເກດຮູບພາບ ຫ້ອງການປົກຄອງບ້ານ, ນາຍບ້ານ, ແນວໂຮມ, ແມ່ຍິງ, ກອງຫຼອນ, ສົນທະນາ ແລະ ບອກກ່ຽວກັບຄວາມສຳຄັນຂອງຫ້ອງການປົກຄອງບ້ານ, ບຸກຄົນສຳຄັນພາຍໃນບ້ານ, ໜ້າທີ່ຂອງ ນາຍບ້ານ ແລະ ການປະຕິບັດຕົນຕໍ່ບຸກຄົນສຳຄັນໃນບ້ານ.
3. ໃຫ້ເດັກນ້ອຍສັງເກດຈຳນວນຮູບພາບແລ້ວປຽບທຽບຈຳນວນເທົ່າກັນ 1-10.
4. ໃຫ້ເດັກນ້ອຍອ່ານອອກສຽງຄຳສັບທີ່ປະສົມກັບສະຫຼະ ×ະ.
5. ໃຫ້ເດັກນ້ອຍເວົ້າຄືນໜ້າທີ່ຂອງນາຍບ້ານ ແລະ ການປະຕິບັດຕົນຕໍ່ບຸກຄົນໃນບ້ານ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການປະຕິບັດຕົນຕໍ່ບຸກຄົນໃນບ້ານ.

### V. ການວັດ ແລະ ປະເມີນຜົນ.

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກບຸກຄົນ ແລະ ຄວາມສຳຄັນຂອງຫ້ອງການປົກຄອງບ້ານ.
2. ຄວາມຖືກຕ້ອງໃນການບອກໜ້າທີ່ຂອງນາຍບ້ານ ແລະ ການປະຕິບັດຕົນຕໍ່ບຸກຄົນພາຍໃນບ້ານ.
3. ຄວາມຊັດເຈນໃນການອ່ານອອກສຽງຄຳສັບທີ່ປະສົມກັບສະຫຼະ ×ະ.
4. ການປຽບທຽບຈຳນວນເທົ່າກັນບໍ່ເກີນ 10.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຂີດຂຽນສະຫຼະ ×ະ ຕາມຄຳສັບ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການຂີດຂຽນສະຫຼະ ×ະ ຕາມຄຳສັບໄດ້ຖືກຕ້ອງ.
2. ຂີດຂຽນສະຫຼະ ×ະ ຕາມຄຳສັບໄດ້ຈົບງາມ.
3. ມີຄວາມອົດທົນໃນການຂີດຂຽນສະຫຼະ ×ະ ຕາມຄຳສັບ.

### II. ເນື້ອໃນຕົ້ນຕໍ

ການຂີດຂຽນສະຫຼະ ×ະ ທີ່ມີຢູ່ໃນຄຳສັບ: ມະ, ລະ, ສະ, ປະ ຕາມຮອຍຈ້ຳ.

### III. ສື່ການຮຽນ-ການສອນ

1. ສໍດຳ.ຢາງລຶບ.ປຶ້ມແບບເຝິກຫັດພາສາລາວເຫຼັ້ມທີ 1 (ໜ້າ 29) ຫຼື ເຈ້ຍແບບຂຽນສະຫຼະ ×ະ ຕາມຄຳສັບ: ກະ, ບະ, ສະ, ປະ, ຈະ, ລະ, ວະ, ມະ, ຂະ.
3. ເຈ້ຍສະຫຼະ ×ະ ຕາມຄຳສັບ: ກະ, ບະ, ສະ, ປະ, ຈະ, ລະ, ວະ, ມະ, ຂະ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍແອບນິ້ວໄປທາງຫຼັງ, ກຳມືເຂົ້າ ແລະ ແບມືອອກ.
2. ໃຫ້ເດັກນ້ອຍສັງເກດສະຫຼະ ×ະ ແລ້ວອ່ານຄຳສັບ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການຂີດຂຽນສະຫຼະ ×ະ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການຂີດຂຽນສະຫຼະ ×າ ຕາມຄຳສັບ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການຂີດຂຽນສະຫຼະ ×ະ ຕາມຄຳສັບ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນ, ຄວາມສາມັກຄີ ແລະ ເກັບມ້ຽນຜົນໄວ້.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການຂີດຂຽນສະຫຼະ ×ະ ຕາມຄຳສັບ.
2. ຄວາມຈົບງາມໃນການຂີດຂຽນສະຫຼະ ×ະ ຕາມຄຳສັບ.
3. ຄວາມອົດທົນໃນການຂີດຂຽນສະຫຼະ ×ີ ຕາມຄຳສັບ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນປິດຕາຈັບແບ້

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນແຂ່ງຂັນປິດຕາຈັບແບ້ໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນ ປິດຕາຈັບແບ້ໄດ້ຖືກຕ້ອງ.
3. ອົດທົນໃນເວລາຫຼິ້ນແບບຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນແຂ່ງຂັນປິດຕາຈັບແບ້.

### III. ສື່ການຮຽນ-ການສອນ

1. ຜ້າ ແລະ ກອງ.
2. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍນັບເລກປາກເປົ່າປະກອບການຕົບມື.
2. ນາຍຄູສະເໜີແບບຫຼິ້ນ ແລະ ສາທິດວິທີຫຼິ້ນແບບຫຼິ້ນແຂ່ງຂັນປິດຕາຈັບແບ້; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນແຂ່ງຂັນປິດຕາຈັບແບ້, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນແຂ່ງຂັນປິດຕາຈັບແບ້.
5. ສຶກສາອົບຮົມເດັກນ້ອຍ ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ລະວັງຕົວບໍ່ຕຳກັນລົ້ມ ແລະ ອົດທົນລໍຖ້າຫຼິ້ນຕາມລຳດັບ.
6. ໃຫ້ເດັກນ້ອຍຄ້ຳແອວແລ້ວນັ່ງລົງ ແລະ ລຸກຂຶ້ນຊ້າໆ, ຫຼັງຈາກນັ້ນປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນປິດຕາຈັບແບ້.
3. ຄວາມອົດທົນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັນຮູບພາບບຸກຄົນທີ່ເຮັດວຽກໃນຫ້ອງການບ້ານ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັນຮູບພາບບຸກຄົນທີ່ເຮັດວຽກໃນຫ້ອງການບ້ານໄດ້ຖືກຕ້ອງ.
3. ອົດທົນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັນຮູບພາບບຸກຄົນທີ່ເຮັດວຽກໃນຫ້ອງການບ້ານ: ນາຍບ້ານຍິງ, ນາຍບ້ານຊາຍ, ສະຫະພັນແມ່ຍິງ, ຊາວໜຸ່ມຍິງ, ຊາວໜຸ່ມຊາຍ ແລະ ກອງຫຼອນ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັນຮູບພາບບຸກຄົນທີ່ເຮັດວຽກໃນຫ້ອງການບ້ານ: ນາຍບ້ານຍິງ, ນາຍບ້ານຊາຍ, ສະຫະພັນແມ່ຍິງ, ຊາວໜຸ່ມຍິງ, ຊາວໜຸ່ມຊາຍ ແລະ ກອງຫຼອນ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ຈັບຄູ່ທີ່ຄືກັນຮູບພາບສະຖານທີ່ສຳຄັນໃນບ້ານ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບບຸກຄົນໃນບ້ານ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຈັບຄູ່ທີ່ຄືກັນຮູບພາບບຸກຄົນທີ່ເຮັດວຽກໃນຫ້ອງການບ້ານ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຄວາມອົດທົນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັນຮູບພາບບຸກຄົນທີ່ເຮັດວຽກໃນຫ້ອງການບ້ານ.
3. ຄວາມອົດທົນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ

### I. ຈຸດປະສົງ

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຫຼິ້ນບົດບາດສົມມຸດເປັນນາຍບ້ານ ແລະ ນັກທ່ອງທ່ຽວຢ່າງມ່ວນຊື່ນ.
3. ຂຽນສະຫຼະ ×ະ ຕາມຄຳສັບ ແລະ ແຕ້ມຮູບພາບຕາມແບບໄດ້ຖືກຕ້ອງ.
4. ເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ.
2. ການຫຼິ້ນບົດບາດສົມມຸດເປັນນາຍບ້ານລົງຢັ້ງຢາມລູກບ້ານ, ເປັນນັກທ່ອງທ່ຽວໄປທ່ຽວຕາມສະຖານທີ່ຕ່າງໆໃນບ້ານ: ຫ້ອງການປົກຄອງບ້ານ, ວັດ, ສະຖານທີ່ທ່ອງທ່ຽວ, ໂຮງຮຽນ, ຕະຫຼາດ, ຮ້ານຂາຍເຄື່ອງ, ສຸກສາລາ ຫຼື ໂຮງໝໍ.
3. ສັງເກດ ແລະ ຂຽນສະຫຼະ ×ະ ຕາມຄຳສັບ: ກະ, ບະ, ສະ, ປະ, ຈະ, ລະ, ວະ, ມະ, ຂະ, ແຕ້ມຮູບພາບໝູ່ບ້ານຕາມແບບ.

### III. ສື່ການຮຽນ-ການສອນ

1. ມຸມບົດບາດສົມມຸດ: ສະຖານທີ່ທ່ອງທ່ຽວຈຳລອງຫ້ອງການປົກຄອງບ້ານ, ວັດ, ສະຖານທີ່ທ່ອງທ່ຽວ, ໂຮງຮຽນ, ຕະຫຼາດ, ຮ້ານຂາຍເຄື່ອງ, ສຸກສາລາ ຫຼື ໂຮງໝໍ.
2. ມຸມສິລະປະສ້າງສັນ: ສໍດຳ, ສໍສີໄມ້ ຫຼື ສີທຽນ, ເຈ້ຍຂາວ, ປຶ້ມບົດເຝິກຫັດພາສາລາວເຫຼັ້ມ 1 (ໜ້າ 29) ຫຼື ເຈ້ຍແບບຂຽນສະຫຼະ ×ະ ຕາມຄຳສັບ: ກະ, ບະ, ສະ, ປະ, ຈະ, ລະ, ວະ, ມະ, ຂະ; ແບບຮູບພາບໝູ່ບ້ານ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບເຄື່ອງຫຼິ້ນຕາມມຸມ.
2. ນາຍຄູແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມມ່ວນຊື່ນໃນການຫຼິ້ນບົດບາດສົມມຸດເປັນນາຍບ້ານ ແລະ ນັກທ່ອງທ່ຽວ.
3. ຄວາມຖືກຕ້ອງໃນການຂຽນສະຫຼະ ×ະ ຕາມຄຳສັບ ແລະ ແຕ້ມຮູບພາບຕາມແບບ.
4. ການເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມສຽງສັນຍານ ເປົ່າໝາກຫວີດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມສຽງສັນຍານ ເປົ່າໝາກຫວີດໄດ້ຖືກຕ້ອງ.
2. ຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມສຽງສັນຍານ ເປົ່າໝາກຫວີດ:

- ເປົ່າໝາກຫວີດ 1 ເທື່ອ ແມ່ຍິງສະແດງທ່າທາງນຸ່ງສິ້ນ, ຜູ້ຊາຍນຸ່ງໂສ້ງ.
- ເປົ່າໝາກຫວີດ 2 ເທື່ອ ສະແດງທ່າທາງນົບຜູ້ໃຫຍ່.

### III. ສື່ການຮຽນ-ການສອນ

1. ໝາກຫວີດ.
2. ທ່າຫັດກາຍະບໍລິຫານລຳຄໍ ແລະ ຂາ (ເບິ່ງປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານລຳຄໍ ແລະ ຂາ: ທ່າຫງ່ຽງລຳຄໍໄປເບື້ອງຊ້າຍ-ຂວາ ແລະ ທ່າໂຢ່ງໂຢະຂາລົງ.
2. ໃຫ້ເດັກນ້ອຍແລ່ນຊິກແຊັກ ໄລຍະ 10 ແມັດ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມສຽງສັນຍານ ເປົ່າໝາກຫວີດ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍຢືນຍົກແຂນວາອອກຫາຍໃຈເຂົ້າ-ອອກ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມສຽງສັນຍານ ເປົ່າໝາກຫວີດ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຕາມສຽງສັນຍານ ເປົ່າໝາກຫວີດ.
2. ການຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ວັດ, ສະຖານທີ່ທ່ອງທ່ຽວ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກບຸກຄົນ, ຄວາມສຳຄັນ, ການປະຕິບັດຕົນໃນວັດ ແລະ ສະຖານທີ່ທ່ອງທ່ຽວໄດ້ຖືກຕ້ອງ.
2. ອ່ານອອກສຽງພະຍັນຊະນະຕົ້ນຕາມຄຳສັບໄດ້ຊັດເຈນ.
3. ບອກໄລະຍທາງໃກ້-ໄກໄດ້ຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

1. ວັດ, ສະຖານທີ່ທ່ອງທ່ຽວ, ບຸກຄົນ, ຄວາມສຳຄັນ ແລະ ການປະຕິບັດຕົນ.

- ວັດ: ບຸກຄົນໃນວັດປະກອບມີ ເຈົ້າອະທິການວັດ (ຍາພໍ່ໃຫຍ່), ຄູບາ, ຈົວ, ແມ່ຂາວ ແລະ ສັງຄະລີ; ຄວາມສຳຄັນຂອງວັດ: ວັດເປັນບ່ອນເຄົາລົບນັບຖືທາງສາສະໜາ; ການປະຕິບັດຕົນ: ເຄົາລົບນັບຖື, ປະຕິບັດຕາມຄຳແນະນຳທີ່ດີຂອງບຸກຄົນຢູ່ໃນວັດ, ເວລາເຂົ້າວັດແມ່ຍິງຄວນນຸ່ງສິ້ນ, ບໍ່ໄປຫຼິ້ນບິນແຊວ ແລະ ຊ່ວຍກັນຮັກສາຄວາມສະອາດ.
- ສະຖານທີ່ທ່ອງທ່ຽວ: ບຸກຄົນໃນສະຖານທີ່ທ່ອງທ່ຽວ: ຜູ້ນຳທ່ຽວ, ນັກທ່ອງທ່ຽວ, ຜູ້ບໍລິຫານສະຖານທີ່ທ່ອງທ່ຽວ; ຄວາມສຳຄັນຂອງສະຖານທີ່ທ່ອງທ່ຽວ: ສະຖານທີ່ທ່ອງທ່ຽວເປັນບ່ອນຄົນໄປພັກຜ່ອນ ແລະ ຊົມທຳມະຊາດ; ການປະຕິບັດຕົນ: ເຄົາລົບນັບຖືບຸກຄົນ ໃນສະຖານທີ່ນັ້ນ, ລຽນແຖວຊື້ປີ້, ປະຕິບັດຕາມກົດລະບຽບຂອງການເຂົ້າຊົມ ແລະ ຂໍ້ຫ້າມ; ຊ່ວຍກັນຮັກສາຄວາມສະອາດ.

2. ການອ່ານພະຍັນຊະນະຕົ້ນຕາມຄຳສັບ: ບ້ານຂ້ອຍ(ບ), ວັດ (ວ), ຕະຫຼາດ (ຕ), ນາຍບ້ານ (ນ), ຊາວສວນ (ຊ), ສຸກສາລາ (ສ), ຮ້ານຂາຍເຄື່ອງ (ຮ).
3. ໄລຍະທາງ: ໃກ້, ໄກ.

### III. ສື່ການຮຽນ-ການສອນ

1. ຮູບພາບ: ວັດ, ຄູບາ, ຈົວ, ແມ່ຂາວ, ຕາດກວາງຊີ, ຄອນພະເພັງ, ວັດພູຈຳປາສັກ; ຮູບພາບຫຼັກທຸງໃກ້ໂຮງຮຽນ ແລະ ວັດໄກໂຮງຮຽນ.
2. ບັດຄຳສັບ: ບ້ານ ຂ້ອຍ(ບ), ວັດ (ວ), ຕະຫຼາດ (ຕ), ນາຍບ້ານ (ນ), ຊາວສວນ (ຊ), ສຸກສາລາ (ສ), ຮ້ານຂາຍເຄື່ອງ (ຮ).

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບສະຖານທີ່ສຳຄັນພາຍໃນບ້ານວັດ ແລະ ສະຖານທີ່ທ່ອງທ່ຽວ.
2. ໃຫ້ເດັກນ້ອຍສັງເກດຮູບພາບວັດ ແລະ ສະຖານທີ່ທ່ອງທ່ຽວ, ສົນທະນາກ່ຽວກັບບຸກຄົນ, ຄວາມສຳຄັນ ແລະ ການປະຕິບັດຕົນພາຍໃນວັດ ແລະ ສະຖານທີ່ທ່ອງທ່ຽວ.
3. ໃຫ້ເດັກນ້ອຍອ່ານອອກສຽງພະຍັນຊະນະຕົ້ນຕາມຄຳສັບ.
4. ໃຫ້ເດັກນ້ອຍສັງເກດຮູບພາບຫຼັກທຸງ ແລະ ວັດກັບໂຮງຮຽນແລ້ວບອກໄລະຍະທາງໃກ້, ໄກ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບບຸກຄົນ, ຄວາມສຳຄັນ, ການປະຕິບັດຕົນຕໍ່ບຸກຄົນໃນວັດ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການປະຕິບັດຕົນຕໍ່ບຸກຄົນພາຍໃນວັດ ແລະ ສະຖານທີ່ທ່ອງທ່ຽວ.

### V. ການວັດ ແລະ ປະເມີນຜົນ.

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກບຸກຄົນ, ຄວາມສຳຄັນ, ການປະຕິບັດຕົນໃນວັດ ແລະ ສະຖານທີ່ທ່ອງທ່ຽວ
2. ຄວາມຊັດເຈນໃນການອ່ານອອກສຽງພະຍັນຊະນະຕົ້ນຕາມຄຳສັບ.
3. ຄວາມຖືກຕ້ອງໃນການບອກໄລະຍະທາງໃກ້-ໄກ.

# ກິດຈະກຳສີລະປະສ້າງສັນ

## ຫົວຂໍ້: ຮ້ອຍກະດຸມ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ.

1. ບອກຂັ້ນຕອນການຮ້ອຍກະດຸມມສະຫຼັບສີແດງ, ຟ້າ ແລະ ສີເຫຼືອງໄດ້ຖືກຕ້ອງ.
2. ຮ້ອຍກະດຸມສະຫຼັບສີແດງ, ຟ້າ ແລະ ສີເຫຼືອງໄດ້ຈົບງາມ.
3. ມີຄວາມອົດທົນໃນການຮ້ອຍກະດຸມສະຫຼັບສີແດງ, ຟ້າ ແລະ ສີເຫຼືອງ.

### II. ເນື້ອໃນຕົ້ນຕໍ

ການຮ້ອຍກະດຸມສະຫຼັບສີ: ແດງ, ຟ້າ ແລະ ສີເຫຼືອງ.

### III. ສື່ການຮຽນ-ການສອນ

1. ກະດຸມສີແດງ, ຟ້າ ແລະ ສີເຫຼືອງ.
2. ກະດຸມທີ່ຮ້ອຍສະຫຼັບສີແລ້ວ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເຮັດທ່າທາງກຳມື, ແບມື.
2. ໃຫ້ເດັກນ້ອຍສັງເກດກະດຸມທີ່ຮ້ອຍສະຫຼັບສີແລ້ວ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການຮ້ອຍກະດຸມສະຫຼັບສີ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການຮ້ອຍສະຫຼັບສີແດງ, ຟ້າ ແລະ ສີເຫຼືອງ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການຮ້ອຍກະດຸມສະຫຼັບສີແດງ, ຟ້າ ແລະ ສີເຫຼືອງ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນ, ຄວາມສາມັກຄີ ແລະ ເກັບມ້ຽນຜົນງານໄວ້.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການຮ້ອຍກະດຸມມສະຫຼັບສີແດງ, ຟ້າ ແລະ ສີເຫຼືອງ.
2. ຄວາມຈົບງາມໃນການຮ້ອຍກະດຸມສະຫຼັບສີແດງ, ຟ້າ ແລະ ສີເຫຼືອງ.
3. ຄວາມອົດທົນໃນການຮ້ອຍກະດຸມສະຫຼັບສີແດງ, ຟ້າ ແລະ ສີເຫຼືອງ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນເຕັ້ນເຂົ້າວົງຕາມ ສຽງສັນຍານ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາໃນການຫຼິ້ນແບບຫຼິ້ນເຕັ້ນເຂົ້າວົງມົນຕາມສຽງສັນຍານໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນເຕັ້ນເຂົ້າວົງມົນຕາມສຽງສັນຍານໄດ້ຖືກຕ້ອງ.
3. ຊ່ວຍເຫຼືອເຊິ່ງກັນ ແລະ ກັນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນເຕັ້ນເຂົ້າວົງມົນຕາມສຽງສັນຍານ.

### III. ສື່ການຮຽນ-ການສອນ

1. ສໍຂາວ, ປູນຂາວ, ສະກັອດສີ ແລະ ໝາກຫວິດ.
2. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍອົບອຸ່ນຮ່າງກາຍ ສັ່ນຂໍ້ມື, ໝູນເອິ່ງ ແລະ ເບັດແອວ.
2. ນາຍຄູສະເໜີແບບຫຼິ້ນ ແລະ ສາທິດວິທີຫຼິ້ນແບບຫຼິ້ນເຕັ້ນເຂົ້າວົງມົນຕາມສຽງສັນຍານ; ໃຫ້ເດັກບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນເຕັ້ນເຂົ້າວົງມົນຕາມສຽງສັນຍານ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນເຕັ້ນເຂົ້າວົງມົນຕາມສຽງສັນຍານ.
5. ສຶກສາອົບຮົມເດັກນ້ອຍ ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ ແລະ ຕັ້ງໃຈຟັງ.
6. ໃຫ້ເດັກນ້ອຍເຮັດທ່າທາງເປັນແມງກະເບື້ອບິນຊ້າໆ, ຫຼັງຈາກນັ້ນປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມຖືກຕ້ອງໃນການເຕັ້ນເຂົ້າວົງມົນຕາມສຽງສັນຍານ.
3. ການຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັດໝວດໝູ່ຮູບພາບວັດຕາມສີ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ຈັດໝວດໝູ່ຮູບພາບວັດຕາມສີໄດ້ຖືກຕ້ອງ.
3. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັດໝວດໝູ່ຮູບພາບວັດຕາມສີ: ສີຟ້າ, ສີເຫຼືອງ, ສີບົວ, ສີນ້ຳໝາກກ້ຽງ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັດໝວດໝູ່ຮູບພາບວັດຕາມສີ: ສີຟ້າ, ສີເຫຼືອງ, ສີບົວ, ສີນ້ຳໝາກກ້ຽງ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ເກມເກົ່າ ເກມຈັບຄູ່ທີ່ຄືກັນຮູບພາບສະຖານທີ່ສຳຄັນໃນບ້ານ: ນາຍບ້ານຍິງ, ນາຍບ້ານຊາຍ, ສະຫະພັນແມ່ຍິງ, ຊາວໜຸ່ມຍິງ, ຊາວໜຸ່ມຊາຍ ແລະ ກອງຫຼອນ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຮູບເລຂາຄະນິດ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມເກມຈັດໝວດໝູ່ຮູບພາບວັດຕາມສີ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການຊ່ວຍເຫຼືອໝູ່ເພື່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
2. ຄວາມຖືກຕ້ອງໃນການເກມຈັດໝວດໝູ່ຮູບພາບວັດຕາມສີ.
3. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມອ່ານ ແລະ ມຸມເກມການສຶກສາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ອ່ານອອກສຽງພະຍັນຊະນະຕົ້ນຕາມຄຳສັບ ແລະ ອ່ານອອກສຽງຄຳສັບທີ່ປະສົມກັບສະຫຼະ ×ະ ໄດ້ຊັດເຈນ.
3. ຈັດໝວດໝູ່ຮູບພາບວັດຕາມສີ ແລະ ຈັບຄູ່ທີ່ຄືກັນຮູບພາບບຸກຄົນທີ່ເຮັດວຽກໃນຫ້ອງການບ້ານໄດ້ຖືກຕ້ອງ.
4. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມອ່ານ ແລະ ມຸມເກມການສຶກສາ.
2. ການອ່ານອອກສຽງພະຍັນຊະນະຕົ້ນຕາມຄຳສັບ: ບ້ານ (ບ), ວັດ (ວ), ຕະຫຼາດ (ຕ), ນາຍບ້ານ (ນ), ຊາວສວນ (ຊ), ສຸກ ສາລາ (ສ), ຮ້ານຂາຍເຄື່ອງ (ຮ), ອ່ານອອກສຽງຄຳສັບທີ່ປະສົມກັບສະຫຼະ ×ະ: ກະ ບະ ສະ ປະ ທະ ພະ ລະ ວະ ມະ ງະ.
3. ການຈັດໝວດໝູ່ຮູບພາບວັດຕາມສີ: ສີຟ້າ, ສີເຫຼືອງ, ສີບົວ, ສີນ້ຳພາກກ້ຽງ ແລະ ການຈັບຄູ່ທີ່ຄືກັນຮູບພາບບຸກຄົນທີ່ເຮັດວຽກໃນຫ້ອງການບ້ານ: ນາຍບ້ານຍິງ, ນາຍບ້ານຊາຍ, ສະຫະພັນແມ່ຍິງ, ຊາວໜຸ່ມຍິງ, ຊາວໜຸ່ມຊາຍ ແລະ ກອງຫຼອນ.

### III. ສື່ການຮຽນ-ການສອນ

1. ມຸມອ່ານ: ກະດານສຽບ ຫຼື ຕິດ, ບັດຄຳສັບ: ບ້ານ (ບ), ວັດ (ວ), ຕະຫຼາດ (ຕ), ນາຍບ້ານ (ນ), ຊາວສວນ (ຊ), ສຸກສາລາ (ສ), ຮ້ານຂາຍເຄື່ອງ (ຮ), ກະ ບະ ສະ ປະ ທະ ພະ ລະ ວະ ມະ ງະ.
2. ມຸມເກມການສຶກສາ: ແຜ່ນເກມຈັດໝວດໝູ່ຮູບພາບວັດຕາມສີ: ສີຟ້າ, ສີເຫຼືອງ, ສີບົວ, ສີນ້ຳພາກກ້ຽງ ແລະ ແຜ່ນເກມຈັບຄູ່ທີ່ຄືກັນຮູບພາບບຸກຄົນທີ່ເຮັດວຽກໃນຫ້ອງການບ້ານ: ນາຍບ້ານຍິງ, ນາຍບ້ານຊາຍ, ສະຫະພັນແມ່ຍິງ, ຊາວໜຸ່ມຍິງ, ຊາວໜຸ່ມຊາຍ ແລະ ກອງຫຼອນ; ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບເຄື່ອງຫຼິ້ນຕາມມຸມ.
2. ນາຍຄູແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມອ່ານ ແລະ ມຸມເກມການສຶກສາ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມອ່ານ ແລະ ມຸມເກມການສຶກສາ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຊັດເຈນໃນການອ່ານອອກສຽງພະຍັນຊະນະຕົ້ນ ຕາມຄຳສັບ ແລະ ອ່ານອອກສຽງຄຳສັບທີ່ປະສົມກັບສະຫຼະ ×ະ.
3. ຄວາມຖືກຕ້ອງໃນການຫຼິ້ນເກມຈັດໝວດໝູ່ຮູບພາບວັດຕາມສີ ແລະ ຈັບຄູ່ທີ່ຄືກັນຮູບພາບບຸກຄົນທີ່ເຮັດວຽກໃນຫ້ອງການບ້ານ.
4. ການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມຈິນຕະນາການປະກອບບົດເພງ ບ້ານຂອງຂ້ອຍ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດເພງຢ່າງມ່ວນຊື່ນ.
2. ກ້າສະແດງອອກໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດເພງ ບ້ານຂອງຂ້ອຍ.

### III. ສື່ການຮຽນ-ການສອນ

1. ກອງ.
2. ບົດເພງ ບ້ານຂອງຂ້ອຍ.
3. ທ່າຫັດກາຍະບໍລິຫານແຂນ ແລະ ຂາ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານແຂນ ແລະ ຂາ: ທ່າວາແຂນອອກພຽງບ່າໄຫຼ່, ເອົາແຂນທັງສອງເບື້ອງໄຂ່ວກັນຢູ່ທາງໜ້າ ແລະ ທ່າຢຽດຂາໄປທາງໜ້າ, ຫຼັງ.
2. ໃຫ້ເດັກນ້ອຍເຕັ້ນທ່າເຕັ້ນຈ່າງຂາ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດເພງ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນອນຫງາຍຫຼັບຕາວາແຂນອອກ, ພ້ອມທັງຈ່າງຂາ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດເພງ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການກ້າສະແດງອອກໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນໃນການສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດເພງ.
2. ການກ້າສະແດງອອກໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ໂຮງຮຽນ ແລະ ສຸກສາລາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກບຸກຄົນ, ຄວາມສຳຄັນ, ການປະຕິບັດຕົນໃນໂຮງຮຽນ ແລະ ສຸກສາລາໄດ້ຖືກຕ້ອງ.
2. ເລົ່າຄຳຄ່ອງປະກອບທ່າທາງໄດ້ຖືກຕ້ອງ.
4. ເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບໄດ້ຊັດເຈນ.

### II. ເນື້ອໃນຕົ້ນຕໍ

1. ໂຮງຮຽນ, ສຸກສາລາ, ບຸກຄົນ, ຄວາມສຳຄັນ ແລະ ການປະຕິບັດຕົນ.
- ໂຮງຮຽນ: ບຸກຄົນໃນໂຮງຮຽນປະກອບມີ: ຜູ້ອຳນວຍການໂຮງຮຽນ, ຄູສອນ, ແມ່ລ້ຽງ, ພະນັກງານອະນາໄມ, ຄວາມສຳຄັນຂອງໂຮງຮຽນ: ໂຮງຮຽນເປັນບ່ອນສອນຄົນໃຫ້ມີຄວາມຮູ້, ຄວາມສາມາດ (ເປັນຄົນດີ, ເກັ່ງ ແລະ ສະຫຼາດ); ການປະຕິບັດຕົນ: ເຄົາລົບນັບຖືບຸກຄົນໃນໂຮງຮຽນ; ບໍ່ໄປຫຼິ້ນບົນແຊວ ແລະ ຊ່ວຍກັນຮັກສາຄວາມສະອາດ.
- ສຸກສາລາ: ບຸກຄົນໃນສຸກສາລາປະກອບມີ: ທ່ານໝໍ, ແພດ, ພະຍາບານ ແລະ ພະນັກງານອະນາໄມ; ຄວາມສຳຄັນຂອງສຸກສາລາ: ເປັນບ່ອນປິ່ນປົວຜູ້ເຈັບປ່ວຍ; ການປະຕິບັດຕົນ: ເວລາໄປກວດສຸຂະພາບໃນສຸກສາລາຕ້ອງນັ່ງລໍຖ້າເຂົ້າກວດຕາມລຳດັບ; ບໍ່ວິ່ນແຊວ, ຊ່ວຍກັນຮັກສາຄວາມສະອາດ.
2. ການເລົ່າຄຳຄ່ອງ: ໂຮງຮຽນ ແລະ ສຸກສາລາ ປະກອບທ່າທາງ.
3. ການເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບ:
- ຄຳສັບ: ຄູສອນ, ແມ່ລ້ຽງ, ພະນັກງານອະນາໄມ, ທ່ານໝໍ, ນາງພະຍາບານ.
- ປະໂຫຍກ: ນາຍຄູສອນໜັງສື, ທ່ານໝໍກວດຄົນເຈັບ, ພະນັກງານອະນາໄມກວາດຫ້ອງຮຽນ.

### III. ສື່ການຮຽນ-ການສອນ.

1. ໂຮງຮຽນ, ຮູບພາບ: ສຸກສາລາ, ທ່ານໝໍ, ພະຍາບານ, ພະນັກງານອະນາໄມ, ຄູສອນ, ແມ່ລ້ຽງ.
3. ບົດຄຳຄ່ອງ ໂຮງຮຽນ ແລະ ສຸກສາລາ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບການສະຖານທີ່ສຳຄັນພາຍໃນບ້ານໂຮງຮຽນ ແລະ ສຸກສາລາ.
2. ໃຫ້ເດັກນ້ອຍເລົ່າຄຳຄ່ອງປະກອບທ່າທາງ.
3. ໃຫ້ເດັກນ້ອຍສັງເກດໂຮງຮຽນ, ຮູບພາບສຸກສາລາ, ສົນທະນາກ່ຽວກັບບຸກຄົນ, ຄວາມສຳຄັນ ແລະ ການປະຕິບັດຕົນພາຍໃນໂຮງຮຽນ ແລະ ສຸກສາລາ.
4. ໃຫ້ເດັກນ້ອຍສັງເກດຮູບພາບ, ເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມຮູບພາບ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການປະຕິບັດຕົນຕໍ່ບຸກຄົນໃນໂຮງຮຽນ ແລະ ສຸກສາລາ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີຮັກແພງກັນ ແລະ ການປະຕິບັດຕົນຕໍ່ໂຮງຮຽນ ແລະ ສຸກສາລາ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກບຸກຄົນ, ຄວາມສຳຄັນ, ການປະຕິບັດຕົນໃນໂຮງ ຮຽນ ແລະ ສຸກສາລາ.
2. ຄວາມຖືກຕ້ອງໃນການເລົ່າຄຳຄ່ອງ ປະກອບທ່າທາງ.
3. ຄວາມຊັດເຈນໃນການເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ພັບເຈ້ຍ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການພັບເຈ້ຍເປັນຮູບກາແພດໄດ້ຖືກຕ້ອງ.
2. ພັບເຈ້ຍເປັນຮູບກາແພດໄດ້ຄ້າຍຄື.
3. ຄາມອົດທົນໃນການພັບເຈ້ຍເປັນຮູບກາແພດ.

### II. ເນື້ອໃນຕົ້ນຕໍ

ການພັບເຈ້ຍເປັນຮູບກາແພດ.

### III. ສື່ການຮຽນ-ການສອນ

1. ເຈ້ຍເປັນຮູບຈະຕຸລັດ.
2. ເຈ້ຍກາແພດທີ່ພັບແລ້ວ.
3. ບົດຄຳຄ່ອງ ໂຮງຮຽນ ແລະ ສຸກສາລາ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ໂຮງຮຽນ ແລະ ສຸກສາລາ ປະກອບທ່າທາງ.
2. ໃຫ້ເດັກນ້ອຍສັງເກດຮູບກາແພດທີ່ພັບແລ້ວ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການພັບເຈ້ຍ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການພັບກາແພດ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການພັບເຈ້ຍເປັນຮູບກາແພດ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນ, ຄວາມສາມັກຄີ ແລະ ເກັບມ້ຽນຜົນງານໄວ້.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການພັບເຈ້ຍເປັນຮູບກາແພດ.
2. ຄວາມຄ້າຍຄືໃນການພັບເຈ້ຍເປັນຮູບກາແພດ.
3. ຄວາມອົດທົນໃນການພັບກາແພດ.

# ກິດຈະກໍາການຫຼິ້ນກາງແຈ້ງ

## ຫົວຂໍ້: ຫຼິ້ນຜອງຊາຍໃສ່ກະປ໋ອງ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນຜອງຊາຍໄດ້ຖືກຕ້ອງ.
2. ເຝິກກ້າມຊີ້ນມືໃຫ້ມີຄວາມແຂງແຮງໃນການຜອງຊາຍ.
3. ເບີກບານມ່ວນຊື່ນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນດິນຊາຍ ຫຼິ້ນຜອງຊາຍໃສ່ກະປ໋ອງ.

### III. ສື່ການຮຽນ-ການສອນ

1. ຄໍາຄ່ອງ ໂຮງຮຽນ ແລະ ສຸກສາລາ.
2. ຄຸນໍ້າສະອາດ, ໂອ, ຊາມ, ຜ້າເຊັດມື, ກະປ໋ອງ, ອ່າງດິນຊາຍ, ຂຸມຊາຍ ແລະ ຊວ້ານນ້ອຍ.
3. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກໍາການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄໍາຄ່ອງ ໂຮງຮຽນ ແລະ ສຸກສາລາປະກອບທ່າທາງ.
2. ນາຍຄູສະເໜີ ແບບຫຼິ້ນ ແລະ ສາທິດວິທີຫຼິ້ນຜອງຊາຍໃສ່ກະປ໋ອງ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນຜອງຊາຍໃສ່ກະປ໋ອງ, ນາຍຄູຕິດຕາມ ແລະ ຊ່ວຍແນະນໍາ.
4. ໃຫ້ເດັກນ້ອຍເວົ້າຄືນ ກ່ຽວກັບການຫຼິ້ນຜອງຊາຍໃສ່ກະປ໋ອງ.
5. ສຶກສາອົບຮົມ ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ລະວັງບໍ່ໃຫ້ດິນເຂົ້າຕາກັນ, ອົດທົນລໍຖ້າ, ຫຼິ້ນແລ້ວອະນາໄມຕີນ ແລະ ມືໃຫ້ສະອາດ.
6. ໃຫ້ເດັກນ້ອຍຄໍ້າແອວເບັດໄປຂ້າງຊ້າຍ ແລະ ຂ້າງຂວາ, ຫຼັງຈາກນັ້ນປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມແຂງແຮງຂອງກ້າມຊີ້ນມືໃນເວລາຫຼິ້ນ.
3. ຄວາມເບີກບານມ່ວນຊື່ນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບສຸກສາລາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ຕໍ່ຮູບພາບສຸກສາລາໄດ້ຖືກຕ້ອງ.
3. ອົດທົນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຕໍ່ຮູບພາບສຸກສາລາ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຕໍ່ຮູບພາບສຸກສາລາ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັດໝວດໝູ່ຮູບພາບວັດຕາມສີ.
3. ບົດຄຳຄ່ອງ ໂຮງຮຽນ ແລະ ສຸກສາລາ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ໂຮງຮຽນ ແລະ ສຸກສາລາ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຕໍ່ຮູບພາບສຸກສາລາ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຄວາມອົດທົນໃນເວລາຫຼິ້ນເກມ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ
2. ຄວາມຖືກຕ້ອງໃນການຕໍ່ຮູບພາບສຸກສາລາ.
3. ຄວາມອົດທົນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມບົດບາດສົມມຸດ ແລະ ມຸມເກມການສຶກສາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຫຼິ້ນສົມມຸດເປັນນາຍຄູ, ນັກຮຽນ ແລະ ເປັນທ່ານໝໍນ້ອຍຢ່າງມ່ວນຊື່ນ.
3. ຕໍ່ຮູບພາບສຸກສາລາ ແລະ ຈັດໝວດໝູ່ຮູບພາບວັດຕາມສີໄດ້ຖືກຕ້ອງ.
4. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມເກມການສຶກສາ.
2. ການຫຼິ້ນບົດບາດສົມມຸດເປັນນາຍຄູສອນ, ເປັນນັກຮຽນ, ເປັນທ່ານໝໍນ້ອຍກວດພະຍາດໃຫ້ຄົນເຈັບ.
3. ການຕໍ່ຮູບພາບສຸກສາລາ ແລະ ຈັດໝວດໝູ່ຮູບພາບວັດຕາມສີ: ສີຟ້າ, ສີເຫຼືອງ, ສີບົວ, ສີນ້ຳໝາກກ້ຽງ.

### III. ສື່ການຮຽນ-ການສອນ

1. ມຸມບົດບາດສົມມຸດ: ປຶ້ມ, ສໍດຳ, ສໍສີໄມ້, ໂຕະ, ຕັ່ງ, ເຄື່ອງມືແພດຈຳລອງ, ຊຸດແພດ.
2. ມຸມເກມການສຶກສາ: ກະດານສຽບ ຫຼື ຕິດ, ແຜ່ນເກມຕໍ່ຮູບພາບສຸກສາລາ ແລະ ແຜ່ນເກມຈັດໝວດໝູ່ຮູບພາບວັດຕາມສີ: ສີຟ້າ, ສີເຫຼືອງ, ສີບົວ, ສີນ້ຳ ໝາກກ້ຽງ.
3. ບົດຄຳຄ່ອງ ໂຮງຮຽນ ແລະ ສຸກສາລາ; ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ໂຮງຮຽນ ແລະ ສຸກສາລາ ປະກອບທ່າທາງຕາມຈິນຕະນາການ.
2. ນາຍຄູສົນທະນາກັບເດັກກ່ຽວກັບເຄື່ອງຫຼິ້ນ ແລະ ແນະນຳວິທີຫຼິ້ນ; ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມເກມການສຶກສາ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມເກມການສຶກສາ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມມ່ວນຊື່ນໃນການຫຼິ້ນສົມມຸດເປັນນາຍຄູ, ນັກຮຽນ ແລະ ເປັນທ່ານໝໍນ້ອຍ.
3. ຄວາມຖືກຕ້ອງໃນການຕໍ່ຮູບພາບສຸກສາລາ ແລະ ການຈັດໝວດໝູ່ຮູບພາບວັດຕາມສີ.
4. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມນາຍຄູອອກແບບປະກອບບົດເພງ ສຽງດົນຕີ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດເພງໄດ້ຖືກຕ້ອງ.
2. ປອດໄພໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດເພງ ສຽງດົນຕີ.

### III. ສື່ການຮຽນ-ການສອນ

1. ກະແຊັກ.
2. ບົດເພງ ສຽງດົນຕີ.
3. ທ່າຫັດກາຍະບໍລິຫານແຂນ ແລະ ຕີນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານແຂນ ແລະ ຕີນ: ທ່າໝູນຫົວເຂົ່າ ແລະ ທ່າໝູນຂໍ້ຕີນ.
2. ໃຫ້ເດັກນ້ອຍໂດດຢຽບເສັ້ນເຊືອກໄລຍະຫ່າງ 20-50 ຊມ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດເພງ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງຄູ້ຂາ, ເອົາມືທັງສອງຄິ່ມພື້ນທາງຫຼັງ, ພ້ອມທັງສັ່ນຂາ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດເພງ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມປອດໄພໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດເພງ.
2. ຄວາມປອດໄພໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ຕະຫຼາດ ແລະ ເດີ່ນກິລາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກບຸກຄົນ, ຄວາມສຳຄັນ, ການປະຕິບັດຕົນໃນຕະຫຼາດ ແລະ ເດີ່ນກິລາໄດ້ຖືກຕ້ອງ.
2. ເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບໄດ້ຊັດເຈນ.
3. ອ່ານຕົວເລກຈາກໃບເງິນ: ໃບ 100 ກີບ, 500 ກີບໄດ້ຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

1. ຕະຫຼາດ, ເດີ່ນກິລາ, ບຸກຄົນ, ຄວາມສຳຄັນ ແລະ ການປະຕິບັດຕົນ.

- ຕະຫຼາດ: ບຸກຄົນໃນຕະຫຼາດປະກອບມີ: ພໍ່ຄ້າ, ແມ່ຄ້າ ແລະ ລູກຄ້າ (ຜູ້ຊື້); ຄວາມສຳຄັນຂອງຕະຫຼາດ: ເປັນບ່ອນຊື້ ແລະ ຂາຍສິນຄ້າ; ການປະຕິບັດຕົນໃນຕະຫຼາດ: ເຄົາລົບນັບຖືບຸກຄົນໃນສະຖານທີ່ນັ້ນ, ເລືອກວັດຖຸສິ່ງຂອງຕ່າງໆບໍ່ບີບແຮງ, ຊື້ເຄື່ອງຕ້ອງຈ່າຍເງິນຕາມລາຄາເຄື່ອງ ແລະ ຊ່ວຍກັນຮັກສາຄວາມສະອາດ.
- ເດີ່ນກິລາ: ບຸກຄົນໃນເດີ່ນກິລາປະກອບມີຄະນະກຳມະການຈັດການແຂ່ງຂັນ, ກຳມະການຕັດສິນ, ນັກກິລາ ແລະ ຜູ້ຊົມ; ຄວາມສຳຄັນຂອງເດີ່ນກິລາ: ເດີ່ນກິລາເປັນບ່ອນຫຼິ້ນ ແລະ ແຂ່ງຂັນກິລາປະເພດຕ່າງໆ; ການປະຕິບັດຕົນໃນເດີ່ນກິລາ: ເຄົາລົບນັບຖືບຸກຄົນໃນສະຖານທີ່ນັ້ນ, ນັ່ງຖືກບ່ອນ, ຖ່າຍຖືກບ່ອນ ແລະ ຊ່ວຍກັນຮັກສາຄວາມສະອາດ.

2. ການເວົ້າຄຳສັບ ແລະ ໂຫຍກຕາມຮູບພາບ:

- ຄຳສັບ: ພໍ່ຄ້າ, ແມ່ຄ້າ, ກຳມະການຕັດສິນ, ນັກກິລາ ແລະ ຜູ້ຊົມ.
- ປະໂຫຍກ: ແມ່ຄ້າຂາຍເຄື່ອງ, ເດີ່ນກິລາມີຫຍ້າຂຽວງາມ, ນັກກິລາເຕະບານຢູ່ໃນເດີ່ນ, ກຳມະການເປົ່າໝາກຫວີດຕັດສິນ.

3. ອ່ານຕົວເລກຈາກໃບເງິນ: ໃບ 100 ກີບ, 500 ກີບ.

### III. ສື່ການຮຽນ-ການສອນ

- ເງິນກີບໃບ 100ກີບ, ໃບ 500ກີບ.
- ຮູບພາບ: ຕະຫຼາດ, ແມ່ຄ້າ, ລູກຄ້າ; ເດີ່ນກິລາ, ກຳມະການ, ນັກກິລາ ແລະ ຜູ້ຊົມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບການໄປຕະຫຼາດ.
2. ໃຫ້ເດັກນ້ອຍສັງເກດຮູບພາບຕະຫຼາດ, ເດີ່ນກິລາ, ສົນທະນາ ແລະ ບອກກ່ຽວກັບບຸກຄົນ, ຄວາມສຳຄັນ ແລະ ການປະຕິບັດຕົນໃນຕະຫຼາດ ແລະ ເດີ່ນກິລາ.
3. ໃຫ້ເດັກນ້ອຍສັງເກດຮູບພາບ, ເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມຮູບພາບ.
4. ໃຫ້ເດັກນ້ອຍສັງເກດຕົວເລກໃນໃບເງິນ, ອ່ານຕົວເລກຈາກເງິນໃບ 100 ກີບ ແລະ 500 ກີບ.
5. ໃຫ້ເດັກນ້ອຍເວົ້າຄືນບຸກຄົນໃນຕະຫຼາດ, ໃນເດີ່ນກິລາ, ຄວາມສຳຄັນ, ການປະຕິບັດຕົນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການປະຕິບັດຕົນຕໍ່ບຸກຄົນໃນຕະຫຼາດ ແລະ ເດີ່ນກິລາ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກບຸກຄົນ, ຄວາມສຳຄັນ, ການປະຕິບັດຕົນໃນຕະ ຫຼາດ ແລະ ເດີ່ນກິລາ.
2. ຄວາມຊັດເຈນໃນການເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບ.
3. ຄວາມຖືກຕ້ອງໃນການອ່ານຕົວເລກຈາກເງິນໃບ 100ກີບ, ໃບ 500 ກີບ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ທາສີຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການທາສີຮູບພາບເດີ່ນກິລາໄດ້ຖືກຕ້ອງ.
2. ທາສີຮູບພາບເດີ່ນກິລາຕາມແບບໄດ້ຈົບງາມ ແລະ ຢູ່ໃນຂອບ.
3. ແບ່ງປັນສໍສີໃຫ້ກັບໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການທາສີຮູບພາບເດີ່ນກິລາ.

### III. ສື່ການຮຽນ-ການສອນ

1. ສໍສີທຽນ ຫຼື ສໍສີໄມ້.
2. ປຶ້ມບົດເຝິກຫັດໜ່ວຍບ້ານຂອງຂ້ອຍ (ໜ້າ 10).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເຮັດທ່າທາງສັ່ນຄໍ່ມື.
2. ໃຫ້ເດັກນ້ອຍສັງເກດຮູບພາບພາກບານທີ່ທາສີແລ້ວ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການທາສີຮູບພາບ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການທາສີຮູບພາບເດີ່ນກິລາ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມ, ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານການທາສີຮູບພາບເດີ່ນກິລາ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນ, ຄວາມສາມັກຄີ ແລະ ເກັບມ້ຽນຜົນໄວ້.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການທາສີຮູບພາບເດີ່ນກິລາ.
2. ຄວາມຈົບງາມທາສີຮູບພາບພາກເດີ່ນກິລາ.
3. ການແບ່ງປັນສໍສີໃຫ້ກັບໝູ່ເພື່ອນ.

# ກິດຈະກໍາການຫຼິ້ນກາງແຈ້ງ

## ຫົວຂໍ້: ຫຼິ້ນແຂ່ງຂັນແລ່ນສົ່ງໝາກໄມ້

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍກສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນແຂ່ງຂັນສົ່ງໝາກໄມ້ໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນແຂ່ງຂັນແລ່ນສົ່ງໝາກໄມ້.
3. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນແຂ່ງຂັນແລ່ນສົ່ງໝາກໄມ້.

### III. ສື່ການຮຽນ-ການສອນ

1. ໝາກໄມ້ 2 ໜ່ວຍ.
2. ໝາກຫວິດ.
3. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກໍາການຮຽນ-ການສອນ

1. ໃຫ້ເດັກນ້ອຍຍໍ່າເທົ້າກັບທີ່, ແກວ່ງແຂນໄປຂ້າງຊ້າຍ ແລະ ຂ້າງຂວາ.
2. ນາຍຄູສະເໜີ ແລະ ສາທິດວິທີຫຼິ້ນແບບຫຼິ້ນແຂ່ງຂັນແລ່ນສົ່ງໝາກໄມ້; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນແຂ່ງຂັນແລ່ນສົ່ງໝາກໄມ້, ນາຍຄູຕິດຕາມ ແລະ ຊ່ວຍແນະນໍາ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນແຂ່ງຂັນແລ່ນສົ່ງໝາກໄມ້.
5. ສຶກສາອົບຮົມເດັກນ້ອຍຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ຫຼິ້ນແລ້ວຊ່ວຍກັນເກັບມ້ຽນເຄື່ອງຫຼິ້ນ, ອະນາໄມຕີນ ແລະ ມືໃຫ້ສະອາດ.
6. ໃຫ້ເດັກນ້ອຍຄໍ້າແອວແຢ່ງຢື້ຂຶ້ນ, ລົງ ຫຼັງຈາກນັ້ນປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນແຂ່ງຂັນແລ່ນສົ່ງໝາກໄມ້.
3. ການຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບຕະຫຼາດ ແລະ ເດີ່ນກິລາ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ຕໍ່ຮູບພາບຕະຫຼາດ ແລະ ເດີ່ນກິລາໄດ້ຖືກຕ້ອງ
3. ອົດທົນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຕໍ່ຮູບພາບຕະຫຼາດ ແລະ ເດີ່ນກິລາ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຕໍ່ຮູບພາບຕະຫຼາດ ແລະ ເດີ່ນກິລາ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຕໍ່ຮູບພາບສຸກສາລາ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບບຸກຄົນໃນຕະຫຼາດ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຊື່ເກມ, ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຕໍ່ຮູບພາບຕະຫຼາດ ແລະ ເດີ່ນກິລາ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຄວາມອົດທົນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຕໍ່ຮູບພາບຕະຫຼາດ ແລະ ເດີ່ນກິລາ.
3. ຄວາມອົດທົນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຫຼິ້ນບົດບາດສົມມຸດເປັນພໍ່ຄ້າ, ແມ່ຄ້າ, ລູກຄ້າ ແລະ ເປັນນັກກິລາຢ່າງມ່ວນຊື່ນ.
3. ທາສີຮູບພາບເດີ່ນກິລາຕາມແບບ ແລະ ພັບເຈ້ຍເປັນຮູບກາແພດໄດ້ຖືກຕ້ອງ.
4. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ.
2. ການຫຼິ້ນບົດບາດສົມມຸດເປັນພໍ່ຄ້າ, ແມ່ຄ້າ ແລະ ລູກຄ້າຊື້ເຄື່ອງ, ເປັນນັກກິລາເຕະບານ.
3. ການທາສີຮູບເດີ່ນກິລາ ແລະ ພັບເຈ້ຍເປັນຮູບກາແພດ.

### III. ສື່ການຮຽນ-ການສອນ

1. ມຸມບົດບາດສົມມຸດ: ເຈ້ຍບັດເງິນ, ເຄື່ອງນຸ່ງຈິງ ຫຼື ຈຳລອງ, ປ໋ອງແປ້ງເປົ່າ, ກ່ອງນົມເປົ່າ.
2. ມຸມສິລະປະສ້າງສັນ: ເຈ້ຍສຳລັບພັບ, ສໍສີໄມ້ ຫຼື ສີທຽນ, ປຶ້ມບົດເຝິກຫັດໜ່ວຍບ້ານຂອງຂ້ອຍ (ໜ້າ 10).
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບເຄື່ອງຫຼິ້ນຕາມມຸມ.
2. ນາຍຄູແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມມ່ວນຊື່ນໃນການຫຼິ້ນບົດບາດສົມມຸດເປັນພໍ່ຄ້າ, ແມ່ຄ້າ, ລູກຄ້າ ແລະ ເປັນນັກກິລາ.
3. ຄວາມຖືກຕ້ອງໃນການທາສີຮູບພາບເດີ່ນກິລາ ແລະ ພັບເຈ້ຍ.
4. ການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

## ຈຸດປະສົງສຳລັບ ອາທິດທີ 2

## ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດຄຳຄ່ອງຢ່າງມ່ວນຊື່ນ.
2. ສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມຈິນຕະນາການຢ່າງມ່ວນຊື່ນ.
3. ປະຕິບັດຄຳສັ່ງຕາມນາຍຄູແນະນຳໄດ້ຖືກຕ້ອງ.
4. ສະແດງທ່າທາງຕາມທີ່ນາຍຄູອອກແບບປະກອບເນື້ອໃນບົດເພງໄດ້ຖືກຕ້ອງ.
5. ສະແດງທ່າທາງຕາມສຽງສັນຍານເຄາະໄດ້ຖືກຕ້ອງ.
6. ເວົ້າຄຳສຸພາບກັບໝູ່ເພື່ອນ.
7. ຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.
8. ຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.
9. ປອດໄພໃນເວລາສະແດງທ່າທາງ.
10. ມ່ວນຊື່ນໃນເວລາສະແດງທ່າທາງ.

## ກິດຈະກຳວົງມົນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກເຄື່ອງນຸ່ງ, ໜ້າທີ່, ຄວາມສຳຄັນຂອງຄູ, ແພດ, ຊາວນາ, ຊາວສວນ, ພໍ່ຄ້າ, ແມ່ຄ້າ, ຕຳຫຼວດ ແລະ ທະຫານ, ກຳມະກອນ ແລະ ຊ່າງ ໄດ້ຖືກຕ້ອງ.
2. ມີຄວາມມ່ວນຊື່ນໃນການຂັບທຸ້ມຫຼວງພະບາງ ແລະ ມີມາລະຍາດໃນການຟັງນິທານ.
3. ເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມຮູບພາບໄດຊັດເຈນ.
4. ອ່ານຄຳສັບທີ່ມີ ແລະ ບໍ່ມີມືວັນນະຍຸດ x່, x້ ໄດ້ຊັດເຈນ.
5. ປະຕິບັດຕົນຕໍ່ຊາວນາ, ຊາວສວນ, ພໍ່ຄ້າ, ແມ່ຄ້າ, ທະຫານ, ຕຳຫຼວດ, ກຳມະກອນ ແລະ ຊ່າງ.
6. ບອກຜົນການປຽບທຽບໂດຍໃຊ້ຄຳວ່າ: ຕໍ່າກວ່າ, ສູງເທົ່າກັນ ໄດ້ຖືກຕ້ອງ.

## ກິດຈະກຳສິລະປະສ້າງສັນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການຂີດຂຽນຕົວເລກ 11 ຕາມຮອຍຈ້ຳ, ຂີດຂຽນຄຳສັບທີ່ປະສົມສະຫຼະ xະ, ຕິດພະຍັນຊະນະຕົວ ຟ ມ ຢ ຣ ລ ວ ຫ ອ ຮ, ທາສີຮູບເຄື່ອງນຸ່ງຕຳຫຼວດ ແລະ ທະຫານ ແລະ ບອກຂັ້ນຕອນການຮ້ອຍສະຫຼັບຮູບຊົງຕາມແບບໄດ້ຖືກຕ້ອງ.
2. ຂີດຂຽນຕົວເລກ 11 ຕາມຮອຍຈ້ຳໄດ້ຈົບງາມ.
3. ຕິດພະຍັນຊະນະຕົວ ຟ ມ ຢ ຣ ລ ວ ຫ ອ ຮ ໄດ້ຄ້າຍຄື.
4. ທາສີຮູບພາບຮູບພາບເຄື່ອງນຸ່ງຕຳຫຼວດ ແລະ ທະຫານໄດ້ຈົບງາມ ແລະ ຢູ່ໃນຂອບ.
5. ຮ້ອຍສະຫຼັບຮູບຊົງຕາມແບບໄດ້ຈົບງາມ.
6. ມີຄວາມອົດທົນໃນການຂຽນຕົວເລກ 11 ຕາມຮອຍຈ້ຳ, ຂີດຂຽນຄຳສັບທີ່ປະສົມສະຫຼະ xະ, ຕິດພະຍັນຊະນະຕົວ ຟ ມ ຢ ຣ ລ ວ ຫ ອ ຮ ແລະ ຮ້ອຍສະຫຼັບຮູບຊົງຕາມແບບ.
7. ແບ່ງປັນສໍສີໃຫ້ກັບໝູ່ເພື່ອນ.

## ກິດຈະກຳການຫຼິ້ນກາງແຈ້ງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນໂພງພາງຕາບອດ, ຫຼິ້ນແບບຫຼິ້ນແຂ່ງຂັນເຕັ້ນຂ້າມຫ້ວຍ, ຫຼິ້ນແບບຫຼິ້ນແຂ່ງຂັນເຕັ້ນຂ້າມຫ້ວຍ, ຫຼິ້ນແບບຫຼິ້ນຕັ່ງວິເສດ ແລະ ຫຼິ້ນແບບຫຼິ້ນແຂ່ງຂັນຍ້າຍບ່ອນຕາມສີຕາມສຽງສັນຍານ.
2. ຫຼິ້ນແບບຫຼິ້ນໂພງພາງຕາບອດ, ຫຼິ້ນແບບຫຼິ້ນແຂ່ງຂັນເຕັ້ນຂ້າມຫ້ວຍ, ຫຼິ້ນຮ່າຍນ້ຳໃສ່ແກ້ວ ແລະ ປັ້ນຊາຍເປັນຮູບຕ່າງໆ, ຫຼິ້ນແບບຫຼິ້ນຕັ່ງວິເສດ, ຫຼິ້ນແບບຫຼິ້ນແຂ່ງຂັນຍ້າຍບ່ອນຕາມສີ ຕາມສຽງສັນຍານໄດ້ຖືກຕ້ອງ.
3. ເບີກບານມ່ວນໃນເວລາຫຼິ້ນຊື່ນ.
4. ປອດໄພໃນເວລາຫຼິ້ນແບບຫຼິ້ນ.
5. ເຝິກກ້າມຊີ້ນມືໃຫ້ມີຄວາມແຂງແຮງ.
6. ມີມາລະຍາດທີ່ດີໃນເວລາຫຼິ້ນ.

## ກິດຈະກຳເກມການສຶກສາ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບ, ອອກສຽງຕົວພະຍັນຊະນະຕົ້ນຕາມຮູບພາບ, ອອກສຽງຕົວພະຍັນຊະນະຕາມຮູບພາບ, ອອກສຽງຕົວພະຍັນຊະນະທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັນຮູບພາບບຸກຄົນສຳຄັນພາຍໃນບ້ານໃຫ້ຖືກຕ້ອງ.
3. ຕໍ່ຮູບພາບຊາວນາ ແລະ ຊາວສວນໄດ້ຖືກຕ້ອງ.
4. ຈັບຄູ່ຮູບພາບກັບຮູບພາບຕາມການອອກສຽງພະຍັນຊະນະຕົ້ນໄດ້ຖືກຕ້ອງ.
5. ຈັບຄູ່ທີ່ຄືກັນຕົວພະຍັນຊະນະໄດ້ຖືກຕ້ອງ.
6. ຈັບຄູ່ຮູບພາບກັບຕົວພະຍັນຊະນະໄດ້ຖືກຕ້ອງ.
7. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.
8. ແບ່ງປັນເກມໃຫ້ໝູ່ເພື່ອນ.
9. ຄວາມສາມັກຄີໃນເວລາຫຼິ້ນເກມ.

## ກິດຈະກຳການຫຼິ້ນຕາມມຸມ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຂຽນຕົວເລກ 11 ຕາມຮອຍຈ້ຳ, ຂີດຂຽນຄຳສັບທີ່ປະສົມສະຫຼະ ×ະ, ທາສີຮູບພາບເດີ່ນກິລາ, ທາສີຮູບພາບຮູບເຄື່ອງນຸ່ງຕຳຫຼວດ, ທະຫານ ແລະ ຮ້ອຍສະຫຼັບຮູບຊົງຕາມແບບໄດ້ຖືກຕ້ອງ.
3. ອ່ານຄຳສັບທີ່ມີ ແລະ ບໍ່ມີວັນນະຍຸດ ×່, ×້: ກະຕ່າ, ກະບະ, ປ້າມາລາ, ອ່ານຕາມຮູບພາບໃນປຶ້ມນິທານເລື່ອງ ໜ້າທີ່ຂອງໃຜ, ອ່ານສະຫະ ×ະ ທີ່ມີໃນຄຳສັບ: ກະ, ບະ, ມະ, ລະ, ສະ, ປະໄດ້ຊັດເຈນ.
4. ຫຼິ້ນບົດບາດສົມມຸດເປັນນາຍຄູສອນນັກຮຽນຂຽນພະຍັນຊະນະ: ມ, ຈ, ດ, ສ, ຖ, ເປັນທ່ານໝໍນ້ອຍກວດພະຍາດໃຫ້ຄົນເຈັບ, ເປັນພໍ່ຄ້າ, ແມ່ຄ້າ, ລູກຄ້າຊື້ຂາຍເຄື່ອງ, ເປັນນັກກິລາເຕະບານ, ເປັນນາຍຄູສອນນັກຮຽນຂຽນຕົວເລກ 11, ເປັນຕຳຫຼວດກວດລົດຕາມເສັ້ນທາງ, ເປັນທະຫານຂີ່ເຮືອກວດຍາມ, ຕາມແຄມນ້ຳຢ່າງມ່ວນຊື່ນ.
5. ຈັບຄູ່ຮູບພາບກັບຮູບພາບຕາມການອອກສຽງພະຍັນຊະນະຕົ້ນ, ຈັບຄູ່ທີ່ຄືກັນຕົວພະຍັນຊະນະ, ຈັບຄູ່ຮູບພາບກັບຕົວພະຍັນຊະນະໄດ້ຖືກຕ້ອງ.
6. ທົດລອງຊັ່ງນ້ຳໜັກຜັກ, ທົດລອງຊັ່ງນ້ຳໜັກໝາກໄມ້,
7. ເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.
8. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.
9. ເກັບມ້ຽນເຄື່ອງໃຫ້ຖືກບ່ອນທີ່ກຳນົດໄວ້.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມຈິນຕະນາການປະກອບບົດຄຳຄ່ອງ ໂຮງຮຽນ ແລະ ສຸກສາລາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດຄຳຄ່ອງຢ່າງມ່ວນຊື່ນ.
2. ເວົ້າຄຳສຸພາບກັບໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດຄຳຄ່ອງ ໂຮງຮຽນ ແລະ ສຸກສາລາ.

### III. ສື່ການຮຽນ-ການສອນ

1. ບົດຄຳຄ່ອງ ໂຮງຮຽນ ແລະ ສຸກສາລາ.
2. ທ່າຫັດກາຍະບໍລິຫານຂາ ແລະ ແອວ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານຂາ ແລະ ແອວ: ທ່າໝູນຫົວເຂົ່າ ແລະ ທ່າເບັດແອວໄປເບື້ອງຊ້າຍ-ເບື້ອງຂວາ.
2. ໃຫ້ເດັກນ້ອຍຍ່າງເຢ່ງເຢ້ເປັນ 2 ແຖວ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດຄຳຄ່ອງ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງຂັດສະໝາດຫຼັບຕາສະມາທິ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດຄຳຄ່ອງ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບກ່ຽວກັບເວົ້າຄຳສຸພາບກັບໝູ່ເພື່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນໃນການສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດຄຳຄ່ອງ.
2. ການເວົ້າຄຳສຸພາບກັບໝູ່ເພື່ອນ.

# ກິດຈະກຳວົງມົນ

## ຫົວຂໍ້: ອາຊີບນາຍຄູ ແລະ ແພດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກເຄື່ອງນຸ່ງ, ໜ້າທີ່, ຄວາມສຳຄັນຂອງຄູ ແລະ ແພດໄດ້ຖືກຕ້ອງ.
2. ມີຄວາມມ່ວນຊື່ນ ແລະ ມີມາລະຍາດໃນການຟັງນິທານ.
3. ເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບໄດ້ຊັດເຈນ.

### II. ເນື້ອໃນຕົ້ນຕໍ

1. ອາຊີບ, ເຄື່ອງນຸ່ງ, ໜ້າທີ່, ຄວາມສຳຄັນຂອງຄູ ແລະ ແພດ.
- ອາຊີບຄູ: ເຄື່ອງນຸ່ງມີຊຸດສີກາກີ ແລະ ມີກາທຳມະຈັກຕິດໃສ່ຄໍເສື້ອ; ໜ້າທີ່ຂອງຄູ: ສອນໜັງສື, ເບິ່ງແຍງເດັກ ແລະ ນຳພາເດັກປະຕິບັດກິດຈະກຳການຮຽນ-ການສອນຕ່າງໆ; ຄວາມສຳຄັນຂອງຄູ: ເປັນຜູ້ສອນໃຫ້ເດັກມີຄວາມຮູ້ຄວາມສາມາດເປັນຄົນດີ, ເກັ່ງ ແລະ ສະຫຼາດ, ປະກອບສ່ວນວຽກງານຕ່າງໆພາຍໃນບ້ານ.
- ອາຊີບແພດ: ເຄື່ອງນຸ່ງມີຊຸດສີຂາວ, ໝວກສີຂາວ ແລະ ມີກາໂຮງໝໍສີແດງຕິດໃສ່ໝວກ; ໜ້າທີ່ຂອງແພດ: ກວດສຸຂະພາບ ແລະ ປິ່ນປົວຄົນເຈັບ; ຄວາມສຳຄັນຂອງແພດ: ເປັນຜູ້ກວດ ແລະ ປິ່ນປົວຄົນເຈັບໃຫ້ດີ.

2. ການເລົ່ານິທານເລື່ອງ ໜ້າທີ່ຂອງໃຜ.
3. ການເວົ້າເປັນຄຳສັບ ແລະ ປະໂຫຍກຕາມຮູບພາບ:
- ຄຳສັບ: ຊຸດຄູ, ກາທຳມະຈັກ, ແພດ, ຄົນເຈັບ, ກາແດງ.
- ປະໂຫຍກ: ທ່ານໝໍປົວຄົນເຈັບ, ສຸກສາລາມີທ່ານໝໍ, ຂ້ອຍຮັກໂຮງຮຽນ, ນາຍຄູສອນໃຫ້ເຮົາມີຄວາມຮູ້, ໂຮງຮຽນມີນາຍຄູ ແລະ ນັກຮຽນ.

### III. ສື່ການຮຽນ-ການສອນ

1. ເຄື່ອງນຸ່ງຄູ ແລະ ແພດ; ຮູບພາບ: ຄູສອນໜັງສື, ແພດກວດຄົນເຈັບ.
2. ບົດນິທານເລື່ອງ ໜ້າທີ່ຂອງໃຜ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບການຮຽນໜັງສື.
2. ນາຍຄູເລົ່ານິທານ, ສົນທະນາກ່ຽວກັບເນື້ອໃນບົດນິທານ.
3. ໃຫ້ເດັກນ້ອຍສັງເກດເຄື່ອງນຸ່ງຄູ, ແພດ, ສົນທະນາ ແລະ ບອກກ່ຽວກັບເຄື່ອງນຸ່ງ, ໜ້າທີ່, ຄວາມສຳຄັນຂອງຄູ ແລະ ແພດ.
4. ໃຫ້ເດັກນ້ອຍເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຄວາມສຳຄັນຂອງຄູ, ແພດ, ເຄື່ອງນຸ່ງ, ໜ້າທີ່, ຄວາມສຳຄັນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີຮັກແພງກັນ ແລະ ການປະຕິບັດກົດລະບຽບຂອງໂຮງຮຽນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກເຄື່ອງນຸ່ງ, ໜ້າທີ່, ຄວາມສຳຄັນຂອງຄູ ແລະ ແພດ.
2. ຄວາມມ່ວນຊື່ນ ແລະ ມາລະຍາດໃນການຟັງນິທານ.
3. ຄວາມຊັດເຈນໃນການເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຂີດຂຽນຕົວເລກ 11 ຕາມຮອຍຈ້ຳ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການຂີດຂຽນຕົວເລກ 11 ຕາມຮອຍຈ້ຳໄດ້ຖືກຕ້ອງ.
2. ຂີດຂຽນຕົວເລກ 11 ຕາມຮອຍຈ້ຳໄດ້ຈົບງາມ.
3. ມີຄວາມອົດທົນໃນການຂຽນຕົວເລກ 11 ຕາມຮອຍຈ້ຳ.

### II. ເນື້ອໃນຕົ້ນຕໍ

ການຂີດຂຽນຕົວເລກ 11 ຕາມຮອຍຈ້ຳ.

### III. ສື່ການຮຽນ-ການສອນ

1. ຢາງລຶບ ແລະ ປຶ້ມບົດເຝິກຫັດຄະນິດສາດເຫຼັ້ມທີ 1 (ໜ້າ 6) ຫຼື ເຈ້ຍແບບຕົວເລກ 11 ທີ່ມີຮອຍຈ້ຳ.
2. ເຈ້ຍຕົວເລກ 11 ທີ່ຂຽນແລ້ວ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເຮັດທ່າທາງເອົາມືປະສານກັນເຂົ້າແລ້ວພູນຄໍ່ມືຊ້າຍ-ຂວາ.
2. ໃຫ້ເດັກນ້ອຍສັງເກດຕົວເລກ 11 ແລ້ວອ່ານ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການຂີດຂຽນຕົວເລກ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການຂີກຂຽນຕົວເລກ 11 ຕາມຮອຍຈ້ຳ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການຕົວເລກ 11 ຕາມຮອຍຈ້ຳ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນ, ຄວາມສາມັກຄີ ແລະ ການເກັບມ້ຽນອຸປະກອນໄວ້.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການຂີດຂຽນຕົວເລກ 11 ຕາມຮອຍຈ້ຳ.
2. ຄວາມຈົບງາມໃນການຂີດຂຽນຕົວເລກ 11 ຕາມຮອຍຈ້ຳ.
3. ຄວາມອົດທົນໃນການຂີດຂຽນຕົວເລກ 11 ຕາມຮອຍຈ້ຳ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນໂພງພາງຕາບອດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການ ຫຼິ້ນແບບຫຼິ້ນໂພງພາງຕາບອດໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນໂພງພາງຕາບອດ ໄດ້ຖືກຕ້ອງ.
3. ເບີກບານມ່ວນໃນເວລາຫຼິ້ນຊື່ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນ ໂພງພາງຕາບອດ.

### III. ສື່ການຮຽນ-ການສອນ

1. ໝາກຫວິດ ແລະ ກອງ.
2. ບົດຄຳຄ່ອງ ໂພງພາງຕາບອດ.
3. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ອາຊີບຕ່າງໆ ປະກອບທ່າທາງ.
2. ນາຍຄູສະເໜີແບບຫຼິ້ນ ແລະ ສາທິດວິທີຫຼິ້ນແບບຫຼິ້ນໂພງພາງຕາບອດ; ໃຫ້ເດັກນ້ອຍບອກຂັ້ນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນໂພງພາງຕາບອດ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກນ້ອຍເວົ້າຄືນ ກ່ຽວກັບການຫຼິ້ນແບບຫຼິ້ນໂພງພາງຕາບອດ.
5. ສຶກສາອົບຮົມເດັກນ້ອຍ ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ຕັ້ງໃຈຟັງ ແລະ ລະວັງບໍ່ແລ່ນຕຳກັນລົ້ມ, ຫຼິ້ນແລ້ວອະນາໄມຕີນ ແລະ ມືໃຫ້ສະອາດ.
6. ໃຫ້ເດັກນ້ອຍເຮັດທ່າທາງນົກບິນ, ຫຼັງຈາກນັ້ນປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນໂພງພາງຕາບອດ.
3. ຄວາມເບີກບານມ່ວນຊື່ນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັນຮູບພາບບຸກຄົນສຳຄັນພາຍໃນບ້ານ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັນຮູບພາບບຸກຄົນສຳຄັນພາຍໃນບ້ານໄດ້ຖືກຕ້ອງ.
3. ສາມັກຄີໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັນຮູບພາບບຸກຄົນສຳຄັນພາຍໃນບ້ານ: ຊາວນາ, ຊາວສວນ, ນາຍຄູ, ແພດ, ທະຫານ, ຕຳຫຼວດ, ແມ່ຄ້າ, ພໍ່ຄ້າ, ນາຍບ້ານ, ຄູບາ ແລະ ກຳມະກອນ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັນຮູບພາບບຸກຄົນສຳຄັນພາຍໃນບ້ານ: ຊາວນາ, ຊາວສວນ, ນາຍຄູ, ແພດ, ທະຫານ, ຕຳຫຼວດ, ແມ່ຄ້າ, ພໍ່ຄ້າ, ນາຍບ້ານ, ຄູບາ ແລະ ກຳມະກອນ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຕໍ່ຮູບພາບຕະຫຼາດ ແລະ ເດີ່ນກິລາ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບໜ້າທີ່, ຄວາມສຳຄັນຂອງຄູ ແລະ ແພດ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນຈັບຄູ່ທີ່ຄືກັນຮູບພາບບຸກຄົນສຳຄັນພາຍໃນບ້ານ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຄວາມສາມັກຄີໃນເວລາຫຼິ້ນເກມ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັນຮູບພາບບຸກຄົນສຳຄັນພາຍໃນບ້ານ.
3. ຄວາມສາມັກຄີໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຫຼິ້ນບົດບາດສົມມຸດເປັນທ່ານໝໍ, ຄົນເຈັບ ແລະ ເປັນນາຍຄູ, ນັກຮຽນຢ່າງມ່ວນຊື່ນ.
3. ຂຽນຄຳສັບທີ່ມີສະຫຼະ ×ະ ແລະ ຂຽນຕົວເລກ 11 ຕາມຮອຍຈ້ຳໄດ້ຖືກຕ້ອງ.
4. ເວົ້າຄຳທີ່ສຸພາບ ແລະ ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ.
2. ການຫຼິ້ນບົດບາດສົມມຸດເປັນທ່ານໝໍນ້ອຍກວດແອ້ວໃຫ້ຄົນເຈັບ, ເປັນນາຍຄູສອນ, ເປັນນັກຮຽນ.
3. ການຂຽນຄຳສັບທີ່ມີສະຫຼະ ×ະ: ກະ ບະ ມະ ລະ ສະ ປະ  ແລະ ຂຽນຕົວເລກ 11 ຕາມຮອຍຈ້ຳ.

### III. ສື່ການຮຽນ-ການສອນ

1. ມຸມບົດບາດສົມມຸດ: ເຄື່ອງມືແພດຈຳລອງ.
2. ມຸມສິລະປະສ້າງສັນ: ສໍດຳ. ຢາງລຶບ, ສໍສີໄມ້ ຫຼື ສີທຽນ, ປື້ມບົດເຝິກຫັດຄະນິດສາດ (ໜ້າ 6) ຫຼື ເຈ້ຍເລກ 11, ປື້ມບົດເຝິກຫັດພາສາລາວ (ໜ້າ 30), ເຈ້ຍຄຳສັບ: ກະ ບະ ມະ ລະ ສະ ປະ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບເຄື່ອງຫຼິ້ນຕາມມຸມ.
2. ນາຍຄູແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການເວົ້າຄຳທີ່ສຸພາບ ແລະ ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມມ່ວນຊື່ນໃນການຫຼິ້ນບົດບາດສົມມຸມດ.
3. ຄວາມຖືກຕ້ອງໃນການຂຽນຄຳສັບທີ່ມີສະຫຼະ ×ະ ແລະ ຂຽນຕົວເລກ 11 ຕາມຮອຍຈ້ຳ.
4. ການເວົ້າຄຳທີ່ສຸພາບ ແລະ ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມຈິນຕະນາການ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມຈິນຕະນາການຢ່າງມ່ວນຊື່ນ.
2. ຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມຈິນຕະນາການ: ຊາວນາປູກເຂົ້າ, ກ່ຽວເຂົ້າ ແລະ ຊາວສວນປູກຜັກ.

### III. ສື່ການຮຽນ-ການສອນ

ທ່າຫັດກາຍະບໍລິຫານລຳຕົວ ແລະ ຂາ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານລຳຕົວ ແລະ ຂາ: ທ່າຫງ່ຽງລຳຕົວໄປເບື້ອງຊ້າຍ-ເບື້ອງຂວາ ແລະ ທ່າ ຢືນຂາດຽວຍົກຂາຊ້າຍຂຶ້ນທາງໜ້າພ້ອມທັງເອົາມືຈັບໄວ້ (ຜັດປ່ຽນເບື້ອງ).
2. ໃຫ້ເດັກນ້ອຍຍ່າງໄປທາງໜ້າ-ຖອຍຫຼັງ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມຈິນຕະນາການ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງຢຽດຂາໄປທາງໜ້າ, ຈ່າງຂາອອກ, ກົ້ມລົງເອົາມືທັງສອງຈັບປາຍຕີນ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມຈິນຕະນາການ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນໃນການສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມຈິນຕະນາການ.
2. ການຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ອາຊີບຊາວນາ ແລະ ຊາວສວນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກເຄື່ອງນຸ່ງ, ໜ້າທີ່, ຄວາມສຳຄັນຂອງຊາວນາ ແລະ ຊາວສວນໄດ້ຖືກຕ້ອງ.
2. ອ່ານຄຳສັບທີ່ມີ ແລະ ບໍ່ມີມີວັນນະຍຸດ ່, ້ ໄດ້ຊັດເຈນ.
3. ປະຕິບັດຕົນຕໍ່ຊາວນາ ແລະ ຊາວສວນ.

### II. ເນື້ອໃນຕົ້ນຕໍ

1. ເຄື່ອງນຸ່ງ, ໜ້າທີ່, ຄວາມສຳຄັນຂອງຊາວນາ ແລະ ຊາວສວນ.

- ອາຊີບຂອງຊາວນາ: ເຄື່ອງນຸ່ງ: ໂສ້ງຂາຍາວ, ເສື້ອແຂນຍາວ, ໃສ່ກຸບ ຫຼື ໝວກ; ໜ້າທີ່ຂອງຊາວນາ: ປູກເຂົ້າ ແລະ ເກັບກ່ຽວເຂົ້າ; ຄວາມສຳຄັນຂອງຊາວນາ: ເປັນຜູ້ປູກເຂົ້າໃຫ້ເຮົາກິນ.
- ອາຊີບຂອງຊາວສວນ: ເຄື່ອງນຸ່ງ: ໂສ້ງຂາຍາວ, ເສື້ອແຂນຍາວ, ໃສ່ກຸບ ຫຼື ໝວກ; ໜ້າທີ່ຂອງຊາວສວນ: ເປັນຜູ້ປູກຜັກ, ໝາກໄມ້ຊະນິດຕ່າງໆ ແລະ ບົວລະບັດຮັກສາເຄື່ອງປູກ; ຄວາມສຳຄັນຂອງຊາວສວນ: ປູກຜັກ ແລະ ໝາກໄມ້ໃຫ້ເຮົາກິນ.

2. ການອ່ານອອກສຽງຄຳສັບທີ່ມີ ແລະ ບໍ່ມີມີວັນນະຍຸດ ່, ້: ກະຕ່າ, ກະບະ, ປ້າມາລາ.

### III. ສື່ການຮຽນ-ການສອນ.

1. ຮູບພາບ: ຊາວນາ, ຊາວສວນ.
2. ບັດຄຳສັບ: ກະຕ່າ, ກະບະ, ປ້າມາລາ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບທີ່ມາຂອງເຂົ້າ, ຜັກ ແລະ ໝາກໄມ້ທີ່ເດັກນ້ອຍໄດ້ກິນ.
2. ໃຫ້ເດັກນ້ອຍສັງເກດຮູບຊາວນາ, ຊາວສວນ, ສົນທະນາ ແລະ ບອກກ່ຽວກັບເຄື່ອງນຸ່ງ, ໜ້າທີ່, ຄວາມສຳຄັນຂອງຊາວນາ ແລະ ຊາວສວນ.
3. ໃຫ້ເດັກນ້ອຍອ່ານອອກສຽງຄຳທີ່ມີ ແລະ ບໍ່ມີວັນນະຍຸດ ່, ້.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຄວາມສຳຄັນຂອງຊາວນາ, ຊາວສວນ, ເຄື່ອງນຸ່ງ, ໜ້າທີ່.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການປະຢັດ, ການປະຕິບັດຕົນຕໍ່ຊາວນາ ແລະ ຊາວສວນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກເຄື່ອງນຸ່ງ, ໜ້າທີ່, ຄວາມສຳຄັນຂອງຊາວນາ ແລະ ຊາວສວນ.
2. ຄວາມຊັດເຈນໃນການອ່ານຄຳສັບທີ່ມີ ແລະ ບໍ່ມີມີວັນນະຍຸດ ່, ້.
3. ການປະຕິບັດຕົນຕໍ່ຊາວນາ ແລະ ຊາວສວນ.

# ກິດຈະກຳສີລະປະສ້າງສັນ

## ຫົວຂໍ້: ຂີດຂຽນຄຳສັບທີ່ປະສົມສະຫຼະ ×ະ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການຂີດຂຽນຄຳສັບທີ່ປະສົມສະຫຼະ ×ະ.
2. ຂີດຂຽນຄຳສັບທີ່ປະສົມສະຫຼະ ×ະ ໄດ້ຖືກຕ້ອງ.
3. ມີຄວາມອົດທົນໃນການຂີດຂຽນ.

### II. ເນື້ອໃນຕົ້ນຕໍ

ການຂີດຂຽນຄຳສັບທີ່ປະສົມສະຫຼະ ×ະ: ກະດານ, ທະຫານ, ສະບູ, ປະຕູ, ກະປູ.

### III. ສື່ການຮຽນ-ການສອນ

1. ສໍດຳ, ຢາງລຶບ ແລະ ປຶ້ມບົດເຝິກຫັດພາສາລາວເຫຼັ້ມທີ 1 (ໜ້າ 33) ຫຼື ເຈ້ຍຄຳສັບ: ກະດານ, ທະຫານ, ສະບູ, ປະຕູ, ກະປູ.
2. ເຈ້ຍຄຳສັບທີ່ປະສົມສະຫຼະ ×ະ: ກະດານ, ທະຫານ, ສະບູ, ປະຕູ, ກະປູ. ທີ່ຂຽນແລ້ວ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເຮັດທ່າທາງແອບຝ່າມືໄລ່ນິ້ວມືແຕ່ນິ້ວໂປ້ຫານິ້ວກ້ອຍ.
2. ໃຫ້ເດັກນ້ອຍສັງເກດສະຫຼະ ×ະ ແລ້ວອ່ານ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການຂີດຂຽນຄຳສັບທີ່ປະສົມສະຫຼະ ×ະ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການຂີດຂຽນຄຳສັບທີ່ປະສົມສະຫຼະ ×ະ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານການຂຽນສະຫຼະ ×ະ ຕາມຄຳສັບ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນ, ຄວາມສາມັກຄີ ແລະ ການເກັບມ້ຽນອຸປະກອນໄວ້.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການຂີດຂຽນສະຫຼະ ×ະ ທີ່ມີຢູ່ໃນຄຳສັບຕາມຮອຍຈ້ຳ.
2. ຄວາມຖືກຕ້ອງໃນການຂີດຂຽນຄຳສັບທີ່ປະສົມສະຫຼະ ×ະ.
3. ຄວາມອົດທົນໃນການຂີດຂຽນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ການຫຼິ້ນແບບຫຼິ້ນແຂ່ງອັນເຕັ້ນຂ້າມຫ້ວຍ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນແຂ່ງອັນເຕັ້ນຂ້າມຫ້ວຍໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນແຂ່ງອັນເຕັ້ນຂ້າມຫ້ວຍໄດ້ຖືກຕ້ອງ.
3. ປອດໄພໃນເວລາຫຼິ້ນແບບຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນແຂ່ງອັນເຕັ້ນຂ້າມຫ້ວຍ.

### III. ສື່ການຮຽນ-ການສອນ

1. ເຊືອກຟາງ ແລະ ໝາກຫວິດ.
2. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍບິດແອວ, ດຶດນິ້ວມື ແລະ ຍ່າງຢ່ຳເທົ້າ.
2. ນາຍຄູສະເໜີແບບຫຼິ້ນ ແລະ ສາທິດວິທີຫຼິ້ນແບບຫຼິ້ນແຂ່ງອັນເຕັ້ນຂ້າມຫ້ວຍ, ໃຫ້ເດັກນ້ອຍບອກຂັ້ນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນແຂ່ງອັນເຕັ້ນຂ້າມຫ້ວຍ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນແຂ່ງອັນເຕັ້ນຂ້າມຫ້ວຍ.
5. ສຶກສາອົບຮົມເດັກນ້ອຍຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ລະວັງບໍ່ໃຫ້ລົ້ມ, ຫຼິ້ນແລ້ວລ້າງອະນາໄມຕີນ ແລະ ມືໃຫ້ສະອາດ.
6. ໃຫ້ເດັກນ້ອຍເຮັດທ່າທາງກຳມື, ແບມື, ຫຼັງຈາກນັ້ນປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນແຂ່ງອັນເຕັ້ນຂ້າມຫ້ວຍ.
3. ຄວາມປອດໄພໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບຊາວນາ ແລະ ຊາວສວນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ຕໍ່ຮູບພາບຊາວນາ ແລະ ຊາວສວນໄດ້ຖືກຕ້ອງ
3. ອົດທົນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຕໍ່ຮູບພາບຊາວນາ ແລະ ຊາວສວນ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຕໍ່ຮູບພາບຊາວນາ ແລະ ຊາວສວນ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັນຮູບພາບບຸກຄົນສຳຄັນພາຍໃນບ້ານ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບສະຫຼະ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຕໍ່ຮູບພາບຊາວນາ ແລະ ຊາວສວນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຄວາມອົດທົນໃນເວລາຫຼິ້ນເກມ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຕໍ່ຮູບພາບຊາວນາ ແລະ ຊາວສວນ.
3. ຄວາມອົດທົນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມອ່ານ ແລະ ມຸມສິລະປະສ້າງສັນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ອ່ານຄຳສັບທີ່ມີ ແລະ ບໍ່ມີວັນນະຍຸດ; ອ່ານຕາມຮູບພາບໃນປຶ້ມນິທານໄດ້ຊັດເຈນ.
3. ຂຽນຄຳສັບທີ່ປະສົມສະຫຼະ ×ະ ແລະ ຂຽນຕົວເລກ 11 ຕາມຮອຍຈ້ຳໄດ້ຖືກຕ້ອງ.
4. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມອ່ານ ແລະ ມຸມສິລະປະສ້າງສັນ.
2. ອ່ານຄຳສັບທີ່ມີ ແລະ ບໍ່ມີວັນນະຍຸດ ×່, ×້: ກະຕ່າ, ກະບະ, ປ້າມາລາ, ອ່ານຕາມຮູບພາບໃນປຶ້ມນິທານ ເລື່ອງໜ້າທີ່ຂອງໃຜ.
3. ການສັງເກດຂຽນຄຳສັບທີ່ປະສົມສະຫຼະ ×ະ: ກະດານ, ທະຫານ, ສະບູ, ປະຕູ, ກະປູ ແລະ ຂີດຂຽນຕົວເລກ 11 ຕາມຮອຍຈ້ຳ.

### III. ສື່ການຮຽນ-ການສອນ

1. ມຸມອ່ານ: ກະດານສຽບ ຫຼື ຕິດ, ບັດຄຳສັບທີ່ມີ ແລະ ບໍ່ມີວັນນະຍຸດ ×່, ×້: ກະຕ່າ, ກະບະ, ປ້າມາລາ, ປຶ້ມນິທານເລື່ອງໜ້າທີ່ຂອງໃຜ.
2. ມຸມສິລະປະສ້າງສັນ: ສໍດຳ, ສໍສີໄມ້ ຫຼື ສີທຽນ, ຢາງລຶບ, ເຈ້ຍຂາວ, ປຶ້ມບົດເຝິກຫັດພາສາລາວເຫຼັ້ມ (ໜ້າ 33) ຫຼື ເຈ້ຍຄຳສັບທີ່ປະສົມສະຫຼະ ×ະ: ກະດານ, ທະຫານ, ສະບູ, ປະຕູ, ກະປູ ແລະ ປຶ້ມບົດເຝິກຫັດຄະນິດສາດເຫຼັ້ມ 1 (ໜ້າ 6) ຫຼື ເຈ້ຍຕົວເລກ 11 ຕາມຮອຍຈ້ຳ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບເຄື່ອງຫຼິ້ນຕາມມຸມ.
2. ນາຍຄູແນະນຳວິທີຫຼິ້ນ,ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມອ່ານ ແລະ ມຸມສິລະປະສ້າງສັນ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມອ່ານ ແລະ ມຸມສິລະປະສ້າງສັນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຊັດເຈນໃນການອ່ານຄຳສັບທີ່ມີ ແລະ ບໍ່ມີວັນນະຍຸດ, ອ່ານຕາມຮູບພາບໃນປຶ້ມນິທານ.
3. ຄວາມຖືກຕ້ອງໃນການຂຽນຄຳສັບທີ່ປະສົມສະຫຼະ ×ະ ແລະ ຂີດຂຽນຕົວເລກ 11 ຕາມຮອຍຈ້ຳ.
4. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວປະຕິບັດຄຳສັ່ງຕາມນາຍຄູແນະນຳ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ປະຕິບັດຄຳສັ່ງຕາມນາຍຄູແນະນຳໄດ້ຖືກຕ້ອງ.
2. ຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.

### II. ເນື້ອໃນຕົ້ນຕໍ

ການປະຕິບັດຄຳສັ່ງຕາມນາຍຄູແນະນຳ: ພໍ່ຄ້າ, ແມ່ຄ້າຂາຍເຄື່ອງ, ລູກຄ້າຊື້ເຄື່ອງ ແລະ ຈ່າຍເງິນ.

### III. ສື່ການຮຽນ-ການສອນ

ທ່າຫັດກາຍະບໍລິຫານລຳຕົວ ແລະ ຂາ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານລຳຕົວ ແລະ ຂາ: ທ່າຫງ່ຽງລຳຕົວໄປເບື້ອງຊ້າຍ, ຂວາ ແລະ ທ່າຢືນຂາດຽວຍົກຂາຊ້າຍຄູ້ເຂົ້າຫາງຫຼັງພ້ອມທັງເອົາມືຈັບໄວ້ (ຜັດປ່ຽນເບື້ອງ)
2. ໃຫ້ເດັກນ້ອຍນອນຫງາຍຫຼັບຕາແຂນອອກ, ພ້ອມທັງຈ່າງຂາ.
3. ນາຍຄູແນະນຳ ແລະ ສາທິດການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນອນຫງາຍວາແຂນອອກ, ຫຼັບຕາ.
6. ໃຫ້ເດັກນ້ອຍປະຕິບັດຄືນການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
2. ຄວາມຕັ້ງໃຈໃນການຟັງຄຳສັ່ງຂອງນາຍຄູ.

# ກິດຈະກຳວົງມົນ

## ຫົວຂໍ້: ອາຊີບພໍ່ຄ້າ ແລະ ແມ່ຄ້າ

### I. ຈຸດປະສົງ

1. ບອກເຄື່ອງນຸ່ງ, ໜ້າທີ່, ຄວາມສຳຄັນຂອງພໍ່ຄ້າ ແລະ ແມ່ຄ້າໄດ້ຖືກຕ້ອງ.
2. ມີຄວາມມ່ວນຊື່ນໃນການຂັບທຸ້ມ.
3. ເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບໄດ້ຊັດເຈນ.
4. ປະຕິບັດຕົນຕໍ່ພໍ່ຄ້າ ແລະ ແມ່ຄ້າ.

### II. ເນື້ອໃນຕົ້ນຕໍ

1. ເຄື່ອງນຸ່ງ, ໜ້າທີ່, ຄວາມສຳຄັນຂອງພໍ່ຄ້າ ແລະ ແມ່ຄ້າ.
- ເຄື່ອງນຸ່ງ: ນຸ່ງເຄື່ອງທຳມະດາທົ່ວໄປ, ມັດຜ້າກັນເປື້ອນ; ໜ້າທີ່ຂອງພໍ່ຄ້າ ແລະ ແມ່ຄ້າ: ຂາຍເຄື່ອງກິນ, ເຄື່ອງໃຊ້, ເຄື່ອງນຸ່ງ, ເຄື່ອງຮຽນ.
- ຄວາມສຳຄັນຂອງພໍ່ຄ້າ ແລະ ແມ່ຄ້າ: ເປັນຜູ້ຊອກຫາສິ່ງຂອງ, ເຄື່ອງໃຊ້ມາຂາຍ.
2. ຂັບທຸ້ມ  ຮ້ານຄ້າບ້ານຂ້ອຍ.
3. ການເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບ:
- ຄຳສັບ: ຮ້ານຄ້າ, ພໍ່ຄ້າ, ແມ່ຄ້າ, ຕະຫຼາດ.
- ປະໂຫຍກ: ພໍ່ຄ້າຂາຍຊີ້ນຢູ່ຕະຫຼາດ, ແມ່ຄ້າຂາຍຜັກຢູ່ຕະຫຼາດ, ລູກຄ້າຊື້ຊີ້ນນຳພໍ່ຄ້າຢູ່ຕະຫຼາດ.

### III. ສື່ການຮຽນ-ການສອນ

1. ຮູບພາບ: ແມ່ຄ້າ, ພໍ່ຄ້າ. ພໍ່ຄ້າຂາຍຊີ້ນຢູ່ຕະຫຼາດ, ແມ່ຄ້າຂາຍຜັກຢູ່ຕະຫຼາດ, ລູກຄ້າຊື້ຊີ້ນນຳພໍ່ຄ້າຢູ່ຕະຫຼາດ.
2. ບົດຂັບທຸ້ມ ຮ້ານຄ້າບ້ານຂ້ອຍ ເບິ່ງປື້ມຄູ່ມືຄູ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບບຸກຄົນໃນຕະຫຼາດ.
2. ໃຫ້ເດັກນ້ອຍຂັບທຸ້ມ, ສົນທະນາກ່ຽວກັບເນື້ອໃນບົດຂັບທຸ້ມ.
3. ໃຫ້ເດັກນ້ອຍສັງເກດຮູບພາບພໍ່ຄ້າ, ແມ່ຄ້າ, ສົນທະນາ ແລະ ບອກກ່ຽວກັບເຄື່ອງນຸ່ງ, ໜ້າທີ່, ຄວາມສຳຄັນຂອງພໍ່ຄ້າ ແລະ ແມ່ຄ້າ.
4. ໃຫ້ເດັກນ້ອຍສັງເກດຮູບພາບ, ເວົ້າຄຳສັບ ແລະ ເປັນປະໂຫຍກຕາມຮູບພາບ.
5. ນາຍຄູໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຄວາມສຳຄັນຂອງແມ່ຄ້າ, ພໍ່ຄ້າ, ໜ້າທີ່, ເຄື່ອງນຸ່ງ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີຮັກແພງກັນ, ການປະຕິບັດຕົນຕໍ່ພໍ່ຄ້າ ແລະ ແມ່ຄ້າ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກເຄື່ອງນຸ່ງ, ໜ້າທີ່, ຄວາມສຳຄັນຂອງພໍ່ຄ້າ ແລະ ແມ່ຄ້າ.
2. ຄວາມມ່ວນຊື່ນໃນການຂັບທຸ້ມ.
3. ຄວາມຊັດເຈນໃນການເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບ.
4. ການປະຕິບັດຕົນຕໍ່ພໍ່ຄ້າ ແລະ ແມ່ຄ້າ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຕິດພະຍັນຊະນະ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການຕິດພະຍັນຊະນະໄດ້ຖືກຕ້ອງ.
2. ຕິດພະຍັນຊະນະໄດ້ຄ້າຍຄື.
3. ມີຄວາມອົດທົນໃນການຕິດພະຍັນຊະນະ.

### II. ເນື້ອໃນຕົ້ນຕໍ

ການຕິດພະຍັນຊະນະຕົວ ຟ ມ ຢ ຣ ລ ວ ຫ ອ ຮ.

### III. ສື່ການຮຽນ-ການສອນ

ເຈ້ຍຂາວ, ກາວ, ເຈ້ຍແບບຕົວພະຍັນຊະນະຕົວ ຟ ມ ຢ ຣ ລ ວ ຫ ອ ຮ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເຮັດທ່າທາງດີດນິ້ວມືເປັນຈັງຫວະ.
2. ໃຫ້ເດັກນ້ອຍສັງເກດພະຍັນຊະນະ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການພະຍັນຊະນະ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການຕິດພະຍັນຊະນະຕົວ ຟ ມ ຢ ຣ ລ ວ ຫ ອ ຮ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການຕິດພະຍັນຊະນະຕົວ ຟ ມ ຢ ຣ ລ ວ ຫ ອ ຮ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນ, ຄວາມສາມັກຄີ ແລະ ການເກັບມ້ຽນອຸປະກອນໄວ້.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການຕິດພະຍັນຊະນະຕົວ ຟ ມ ຢ ຣ ລ ວ ຫ ອ ຮ.
2. ຄວາມຄ້າຍຄືໃນການຕິດພະຍັນຊະນະຕົວ ຟ ມ ຢ ຣ ລ ວ ຫ ອ ຮ.
3. ຄວາມອົດທົນໃນການຕິດພະຍັນຊະນະຕົວ ຟ ມ ຢ ຣ ລ ວ ຫ ອ ຮ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ຫຼິ້ນນ້ຳ-ຫຼິ້ນດິນຊາຍ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນຣ່າຍນ້ຳໃສ່ແກ້ວ ແລະ ປັ້ນຊາຍເປັນຮູບຕ່າງໆໄດ້ຖືກຕ້ອງ.
2. ເຝິກກ້າມຊີ້ນມືໃຫ້ມີຄວາມແຂງແຮງ.
3. ມີມາລະຍາດທີ່ດີໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນນ້ຳ-ຫຼິ້ນດິນຊາຍ: ຣ່າຍນ້ຳໃສ່ແກ້ວ ແລະ ປັ້ນຊາຍເປັນຮູບຕ່າງໆ.

### III. ສື່ການຮຽນ-ການສອນ

1. ຄຸນ້ຳສີແດງ, ສີຂຽວ, ຈວາຍ, ກະປອງໃຫ່ຍ, ແກ້ວ, ສາຍຢາງ, ຄຸນ້ຳ, ບົວນ້ອຍ, ແຜ່ນຜ້າຢາງ ແລະ ຜ້າກັນເປື້ອນ.
2. ວິທີຫຼິ້ນ (ເບິ່ງປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຂັບຫຸ້ມ ຮ້ານຄ້າບ້ານຂ້ອຍ.
2. ນາຍຄູສະເໜີ ແບບຫຼິ້ນ ແລະ ສາທິດວິທີຫຼິ້ນນ້ຳ-ຫຼິ້ນດິນຊາຍ ຫຼິ້ນຣ່າຍນ້ຳໃສ່ແກ້ວ ແລະ ປັ້ນຊາຍເປັນຮູບຕ່າງໆ; ໃຫ້ເດັກນ້ອຍບອກຂັ້ນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນນ້ຳ-ຫຼິ້ນດິນຊາຍ: ຫຼິ້ນຣ່າຍນ້ຳໃສ່ແກ້ວ ແລະ ປັ້ນຊາຍເປັນຮູບຕ່າງໆ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນນ້ຳ-ຫຼິ້ນດິນຊາຍ: ຫຼິ້ນຣ່າຍນ້ຳໃສ່ແກ້ວ ແລະ ປັ້ນຊາຍເປັນຮູບຕ່າງໆ.
5. ສຶກສາອົບຮົມເດັກນ້ອຍ ລະວັງບໍ່ໃຫ້ເຄື່ອງປຽກ, ລະວັງບໍ່ໃຫ້ລົ້ມ, ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີຫຼິ້ນແລ້ວລ້າງມື, ລ້າງຕີນ ແລະ ເກັບມ້ຽນອຸປະກອນ.
6. ໃຫ້ເດັກນ້ອຍເຮັດທ່າທາງນົກບິນຊ້າໆ, ຫຼັງຈາກນັ້ນປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມແຂງແຮງຂອງກ້າມຊີ້ນມືໃນເວລາຫຼິ້ນ.
3. ມາລະຍາດທີ່ດີໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ຮູບພາບກັບຮູບພາບຕາມການອອກສຽງຕົວພະຍັນຊະນະຕົ້ນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ອອກສຽງຕົວພະຍັນຊະນະຕົ້ນຕາມຮູບພາບທີ່ມີໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ຮູບພາບກັບຮູບພາບຕາມການອອກສຽງຕົວພະຍັນຊະນະຕົ້ນໄດ້ຖືກຕ້ອງ.
3. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ຮູບພາບກັບຮູບພາບຕາມການອອກສຽງຕົວພະຍັນຊະນະຕົ້ນ: ງ(ງົວ), ຍ(ຍຸງ), ທ(ທຸງ), ນ(ນົກ), ພ(ພູ), ຟ(ໄຟ), ມ(ແມວ), ລ(ລີງ), ຣ(ຣາດາ), ວ(ວີ), ຮ(ເຮືອນ).

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ຮູບພາບກັບຮູບພາບຕາມການອອກສຽງຕົວພະຍັນຊະນະຕົ້ນ: ງ(ງົວ), ຍ(ຍຸງ), ທ(ທຸງ), ນ(ນົກ), ພ(ພູ), ຟ(ໄຟ), ມ(ແມວ), ລ(ລີງ), ຣ(ຣາດາ), ວ(ວີ), ຮ(ເຮືອນ). (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຕໍ່ຮູບພາບຊາວນາ ແລະ ຊາວສວນ.
3. ບົດຂັບທຸ້ມ ຮ້ານຄ້າບ້ານຂ້ອຍ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຂັບທຸ້ມ ຮ້ານຄ້າບ້ານຂ້ອຍ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຕົວພະຍັນຊະນະ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຕົວພະຍັນຊະນະ, ຮູບພາບ ແລະ ການຫຼິ້ນເກມຈັບຄູ່ຮູບພາບກັບຮູບພາບຕາມການອອກສຽງຕົວພະຍັນຊະນະຕົ້ນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການອອກສຽງຕົວພະຍັນຊະນະຕົ້ນຕາມຮູບພາບທີ່ມີໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ຮູບພາບກັບຮູບພາບຕາມການອອກສຽງຕົວພະຍັນຊະນະຕົ້ນ.
3. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມບົດບາດສົມມຸດ, ມຸມວິທະຍາສາດ ແລະ ທຳມະຊາດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຫຼິ້ນບົດບາດສົມມຸດເປັນພໍ່ຄ້າ, ແມ່ຄ້າ, ລູກຄ້າ, ນາຍຄູ, ນັກຮຽນຢ່າງມ່ວນຊື່ນ.
3. ທົດລອງຊັ່ງນ້ຳໜັກຜັກ ແລະ ໝາກໄມ້ໄດ້ຖືກຕ້ອງ.
4. ເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມບົດບາດສົມມຸດ, ມຸມວິທະຍາສາດ ແລະ ທຳມະຊາດ.
2. ການຫຼິ້ນບົດບາດສົມມຸດເປັນພໍ່ຄ້າ, ແມ່ຄ້າຂາຍເຄື່ອງກິນ, ເຄື່ອງໃຊ້, ເຄື່ອງນຸ່ງ ແລະ ເຄື່ອງຮຽນ, ເປັນນາຍຄູເປັນນັກຮຽນ.
3. ການສັງເກດ ແລະ ທົດລອງຊັ່ງນ້ຳໜັກຜັກ ແລະ ໝາກໄມ້.

### III. ສື່ການຮຽນ-ການສອນ

1. ມຸມບົດບາດສົມມຸດ: ເຄື່ອງຈິງ ຫຼື ຈຳລອງ ອາຫານ, ກະເປົ໋າ, ເກີບ, ໂສ້ງ, ເສື້ອ, ສິ້ນ ປຶ້ມ, ສໍດຳ, ສໍສີ ແລະ ອື່ນໆ; ໂຕະ, ຕັ່ງ, ສໍດຳ, ຢາງລຶບ, ເຈ້ຍຂາວ.
2. ມຸມວິທະຍາສາດ ແລະ ທຳມະຊາດ: ຜັກ, ໝາກໄມ້ຈິງ ຫຼື ຈຳລອງ, ຊິງຊັ່ງ.
3. ບົດອັບຫຸ້ມ ຮ້ານຄ້າບ້ານຂ້ອຍ; ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍອັບຫຸ້ມ ຮ້ານຄ້າບ້ານຂ້ອຍ ປະກອບທ່າທາງຕາມຈິນຕະນາການ.
2. ນາຍຄູສົນທະນາກັບເດັກກ່ຽວກັບເຄື່ອງຫຼິ້ນ ແລະ ແນະນຳວິທີຫຼິ້ນ; ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມບົດບາດສົມມຸດ, ມຸມວິທະຍາສາດ ແລະ ທຳມະຊາດ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມບົດບາດສົມມຸດ, ມຸມວິທະຍາສາດ ແລະ ທຳມະຊາດ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມມ່ວນຊື່ນໃນການຫຼິ້ນບົດບາດສົມມຸດເປັນພໍ່ຄ້າ, ແມ່ຄ້າ, ລູກຄ້າ, ນາຍຄູ, ນັກຮຽນ.
3. ຄວາມຖືກຕ້ອງໃນການທົດລອງຊັ່ງນ້ຳໜັກຜັກ ແລະ ໝາກໄມ້.
4. ການເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມທີ່ນາຍຄູອອກແບບປະກອບບົດເພງ ຮ້ານຄ້າບ້ານຂອງຂ້ອຍ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມທີ່ນາຍຄູອອກແບບປະກອບເນື້ອໃນບົດເພງໄດ້ຖືກຕ້ອງ.
2. ປອດໄພໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມທີ່ນາຍຄູອອກແບບປະກອບເນື້ອໃນບົດເພງ ຮ້ານຄ້າບ້ານຂ້ອຍ.

### III. ສື່ການຮຽນ-ການສອນ

1. ກອງ.
2. ບົດເພງ ຮ້ານຄ້າບ້ານຂ້ອຍ.
3. ທ່າຫັດກາຍະບໍລິຫານຂາ ແລະ ທ້ອງ-ຫຼັງ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານຂາ ແລະ ທ້ອງຫຼັງ: ທ່າໝູນຫົວເຂົ່າ ແລະ ທ່າທ້ອງ-ຫຼັງ ກົ້ມຕົວລົງທາງໜ້າ, ເງີຍຂຶ້ນ, ແອນຕົວໄປທາງຫຼັງ.
2. ໃຫ້ເດັກນ້ອຍເຕັ້ນຈ່າງຂາ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມທີ່ນາຍຄູອອກແບບປະກອບເນື້ອໃນບົດເພງ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງຢຽດຂາໄປທາງໜ້າ, ຈ່າງຂາອອກ, ກົ້ມລົງເອົາມືທັງສອງຈັບປາຍຕີນ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມທີ່ນາຍຄູອອກແບບປະກອບເນື້ອໃນບົດເພງ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມປອດໄພໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຕາມທີ່ນາຍຄູອອກແບບປະກອບເນື້ອໃນບົດເພງ.
2. ຄວາມປອດໄພໃນເວລາສະແດງທ່າທາງ.

# ກິດຈະກຳການວົງມົນ

## ຫົວຂໍ້: ອາຊີບທະຫານ ແລະ ຕຳຫຼວດ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກເຄື່ອງນຸ່ງ, ໜ້າທີ່, ຄວາມສຳຄັນຂອງຕຳຫຼວດ ແລະ ທະຫານໄດ້ຖືກຕ້ອງ.
2. ມີຄວາມມ່ວນຊື່ນ ແລະ ມີມາລະຍາດໃນການຟັງນິທານ, ປະຕິບັດຕົນຕໍ່ທະຫານ ແລະ ຕຳຫຼວດ.
3. ເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບໄດ້ຊັດເຈນ.

## II. ເນື້ອໃນຕົ້ນຕໍ

1. ໜ້າທີ່, ຄວາມສຳຄັນຂອງຕຳຫຼວດ ແລະ ທະຫານ.

- ອາຊີບຕຳຫຼວດ: ເຄື່ອງນຸ່ງ: ຕຳຫຼວດຈະລາຈອນໃສ່ຊຸດສີກາກີ, ມີສາຍອຳນາດຢູ່ແຂນເສື້ອ, ມີໝາກຫວີດ, ແລະ ບາແລດບ່າ (ທະນູບ່າ); ໜ້າທີ່ຂອງຕຳຫຼວດ: ປ້ອງກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງບ້ານເມືອງ ແລະ ອຳນວຍຄວາມສະດວກໃນການຈະລາຈອນ; ຄວາມສຳຄັນຂອງຕຳຫຼວດ: ເປັນຜູ້ປ້ອງກັນຄວາມສະຫງົບຂອງບ້ານເມືອງ, ຖ້າບໍ່ມີຕຳຫຼວດຈະລາຈອນກໍຈະພົບຄວາມຫຍຸ້ງຍາກ, ບ້ານເມືອງກໍຈະບໍ່ມີຄວາມສະຫງົບ.
- ອາຊີບທະຫານ: ເຄື່ອງນຸ່ງສີຂຽວ ຫຼື ລາຍມີບາແລດບ່າ (ທະນູບ່າ); ໜ້າທີ່ຂອງທະຫານບົກ: ປົກປັກຮັກສາຊາຍແດນ, ພູຜາປ່າໄມ້ຂອງປະເທດຊາດ, ປ້ອງກັນປະເທດຊາດບໍ່ໃຫ້ສັດຕູເຂົ້າມາທຳລາຍ; ທະຫານອາກາດ: ປົກປັກຮັກສານ່ານຟ້າ, ປ້ອງກັນປະເທດຊາດບໍ່ໃຫ້ສັດຕູເຂົ້າມາທຳລາຍ; ທະຫານເຮືອ: ປົກປັກຮັກສານ່ານນ້ຳບໍ່ໃຫ້ສັດຕູເຂົ້າມາທຳລາຍ; ຄວາມສຳຄັນຂອງທະຫານ: ເປັນຜູ້ປ້ອງກັນປະເທດຊາດບໍ່ໃຫ້ສັດຕູເຂົ້າມາທຳລາຍ, ຖ້າ ບໍ່ມີທະຫານສັດຕູ ກໍຈະເຂົ້າມາຮຸກຮານໄດ້ງ່າຍ.

2. ການຟັງນິທານເລື່ອງ ໜ້າທີ່ຂອງທະຫານ ແລະ ຕຳຫຼວດ.
3. ຄຳສັບຕາມຮູບພາບ ແລະ ປະໂຫຍກ: ຄຳສັບ: ຕຳຫວດ, ທະຫານ, ໝາກຫວີດ, ບາແລດບ່າ (ທະນູບ່າ); ປະໂຫຍກ: ຕຳຫຼວດຈະລາຈອນເປົ່າໝາກຫວີດ, ຕຳຫຼວດປ້ອງກັນຄວາມສະຫງົບ, ທະຫານບົກປ້ອງກັນຊາຍແດນ, ທະຫານເຮືອປ້ອງກັນນ່ານນ້ຳ, ທະຫານອາກາດປົກປ້ອງນ່ານຟ້າ.

## III. ສື່ການຮຽນ-ການສອນ

1. ຮູບພາບ: ຕຳຫຼວດ, ທະຫານ.
2. ປຶ້ມນິທານ ແລະ ຮູບພາບປະກອບນິທານເລື່ອງ ໜ້າທີ່ຂອງທະຫານ ແລະ ຕຳຫຼວດ.

## IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບການບຸກຄົນທີ່ຮັກສາຄວາມສະຫງົບ.
2. ນາຍຄູເລົ່ານິທານ, ສົນທະນາກ່ຽວກັບເນື້ອໃນບົດນິທານ.
3. ໃຫ້ເດັກນ້ອຍສັງເກດຮູບພາບຕຳຫຼວດ, ທະຫານສົນທະນາ ແລະ ບອກກ່ຽວກັບໜ້າທີ່, ເຄື່ອງນຸ່ງ, ຄວາມສຳຄັນຂອງຕຳຫຼວດ, ທະຫານ.
4. ໃຫ້ເດັກນ້ອຍສັງເກດຮູບພາບ, ເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຄວາມສຳຄັນຂອງທະຫານ ແລະ ຕຳຫຼວດ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີ ແລະ ການປະຕິບັດຕົນຕໍ່ທະຫານ ແລະ ຕຳຫຼວດ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກເຄື່ອງນຸ່ງ, ໜ້າທີ່, ຄວາມສຳຄັນຂອງຕຳຫຼວດ ແລະ ທະຫານ.
2. ຄວາມມ່ວນຊື່ນ ແລະ ມາລະຍາດໃນການຟັງນິທານ, ການປະຕິບັດຕົນຕໍ່ທະຫານ ແລະ ຕຳຫຼວດ.
3. ຄວາມຊັດເຈນໃນການເວົ້າຄຳສັບຕາມຮູບພາບ ແລະ ປະໂຫຍກ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ທາສີຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການທາສີຮູບເຄື່ອງນຸ່ງຕຳຫຼວດ ແລະ ທະຫານໄດ້ຖືກຕ້ອງ.
2. ທາສີຮູບພາບຮູບພາບເຄື່ອງນຸ່ງຕຳຫຼວດ ແລະ ທະຫານໄດ້ຈົບງາມ ແລະ ຢູ່ໃນຂອບ.
3. ແບ່ງປັນສໍສີໃຫ້ກັບໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການທາສີຮູບພາບເຄື່ອງນຸ່ງຕຳຫຼວດ ແລະ ທະຫານ.

### III. ສື່ການຮຽນ-ການສອນ

1. ສໍສີທຽນ ຫຼື ສໍສີໄມ້.
2. ປຶ້ມບົດເຝິກຫັດໜ່ວຍບ້ານຂອງຂ້ອຍ (ໜ້າ 17-18).

### IV. ກິດຈະກຳການຮຽນ-ການສອນ

1. ຫ້ເດັກນ້ອຍເຮັດທ່າທາງຈູ່ມປາຍນິ້ວມືເຂົ້າ ແລະ ແບອອກ.
2. ໃຫ້ເດັກນ້ອຍສັງເກດຮູບພາບເຄື່ອງນຸ່ງຕຳຫຼວດ, ທະຫານ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການທາສີຮູບພາບ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການທາສີ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການທາສີຮູບພາບເຄື່ອງນຸ່ງຕຳຫຼວດ ແລະ ທະຫານ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນ, ຄວາມສາມັກຄີ ແລະ ການເກັບມ້ຽນອຸປະກອນໄວ້.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການທາສີຮູບເຄື່ອງນຸ່ງຕຳຫຼວດ ແລະ ທະຫານ.
2. ຄວາມຈົບງາມ ແລະ ຢູ່ໃນຂອບໃນການທາສີຮູບພາບເຄື່ອງນຸ່ງຕຳຫຼວດ ແລະ ທະຫານ.
3. ການແບ່ງປັນສໍສີໃຫ້ກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນແບບຫຼິ້ນຕັ່ງວິເສດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນຕັ່ງວິເສດໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນຕັ່ງວິເສດໄດ້ຖືກຕ້ອງ.
3. ປອດໄພໃນເວລາຫຼິ້ນແບບຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນ ຕັ່ງວິເສດ.

### III. ສື່ການຮຽນ-ການສອນ

1. ບົດເພງ, ຕັ່ງ, ບັດຄຳ ແລະ ກອງ.
2. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເຕັ້ນກັບທີ່ ແລະ ແລ່ນຊ້າໆເປັນວົງມົນ.
2. ນາຍຄູສະເໜີແບບຫຼິ້ນ ແລະ ສາທິດວິທີຫຼິ້ນແບບຫຼິ້ນຕັ່ງວິເສດ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນຕັ່ງວິເສດ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນຕັ່ງວິເສດ.
5. ສຶກສາອົບຮົມເດັກ ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ອົດທົນລໍຖ້າ, ຫຼິ້ນແລ້ວອະນາໄມຕົນ ແລະ ມື ໃຫ້ສະອາດ.
6. ໃຫ້ເດັກນ້ອຍຄ້ຳແອວເບັດໄປຂ້າງຊ້າຍ ແລະ ຂ້າງຂວາ, ຫຼັງຈາກນັ້ນປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນຕັ່ງວິເສດ.
3. ຄວາມປອດໄພໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັນຕົວພະຍັນຊະນະ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ອອກສຽງຕົວພະຍັນຊະນະໃນແຜ່ນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັນຕົວພະຍັນຊະນະໄດ້ຖືກຕ້ອງ.
3. ອົດທົນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັນຕົວພະຍັນຊະນະ: ງ, ຍ, ທ, ນ, ພ, ຟ, ມ, ລ, ຮ, ວ, ຣ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັນຕົວພະຍັນຊະນະ: ງ, ຍ, ທ, ນ, ພ, ຟ, ມ, ລ, ຮ, ວ, ຣ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ຮູບພາບກັບຮູບພາບຕາມການອອກສຽງຕົວພະຍັນຊະນະຕົ້ນ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບໜ້າທີ່, ຄວາມສຳຄັນຂອງຕຳຫຼວດ ແລະ ທະຫານ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຕົວພະຍັນຊະນະທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຕົວພະຍັນຊະນະ ແລະ ການຫຼິ້ນເກມຈັບຄູ່ທີ່ຄືກັນຕົວພະຍັນຊະນະ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຄວາມອົດທົນໃນເວລາຫຼິ້ນເກມ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັນຕົວພະຍັນຊະນະ.
3. ຄວາມອົດທົນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມບົດບາດສົມມຸດ ແລະ ມຸມເກມການສຶກສາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຫຼິ້ນບົດບາດສົມມຸດເປັນຕຳຫຼວດ ແລະ ທະຫານຢ່າງມ່ວນຊື່ນ.
3. ຈັບຄູ່ທີ່ຄືກັນຕົວພະຍັນຊະນະ ແລະ ເກມຈັບຄູ່ຮູບພາບກັບຕົວພະຍັນຊະນະຕົ້ນຕາມການອອກສຽງໄດ້ຖືກຕ້ອງ.
4. ເກັບມ້ຽນເຄື່ອງຫຼິ້ນຖືກບ່ອນທີ່ກຳນົດໄວ້.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມເກມການສຶກສາ.
2. ການຫຼິ້ນບົດບາດສົມມຸດເປັນຕຳຫຼວດກວດລົດຕາມເສັ້ນທາງ, ເປັນທະຫານຂີ່ເຮືອກວດຍາມຕາມແຄມນ້ຳ.
3. ການຈັບຄູ່ທີ່ຄືກັນຕົວພະຍັນຊະນະ: ງ, ຍ, ທ, ນ, ພ, ຟ, ມ, ລ, ຣ, ວ, ຮ ແລະ ການຈັບຄູ່ຮູບພາບກັບຕົວພະຍັນຊະນະຕົ້ນຕາມການອອກສຽງ: ງ(ງົວ), ຍ(ຍຸງ), ທ(ທຸງ), ນ(ນົກ), ພ(ພູ), ຟ(ໄຟ), ມ(ແມວ), ລ(ລິງ), ຣ(ຣາດາ), ວ(ວີ), ຮ(ເຮືອ).

### III. ສື່ການຮຽນ-ການສອນ

1. ມຸມບົດບາດສົມມຸດ: ຊຸດເຄື່ອງນຸ່ງຕຳຫຼວດ, ທະຫານຈຳລອງ, ເຮືອ ແລະ ແມ່ນ້ຳຈຳລອງ.
2. ມຸມເກມການສຶກສາ: ກະດານສຽບ ຫຼື ຕິດ, ແຜ່ນເກມຈັບຄູ່ທີ່ຄືກັນຕົວພະຍັນຊະນະ: ງ, ຍ, ທ, ນ, ພ, ຟ, ມ, ລ, ຣ, ວ, ຮ ແລະ ແຜ່ນເກມຈັບຄູ່ຮູບພາບກັບຕົວພະຍັນຊະນະຕົ້ນຕາມການອອກສຽງ: ງ(ງົວ), ຍ(ຍຸງ), ທ(ທຸງ), ນ(ນົກ), ພ(ພູ), ຟ(ໄຟ), ມ(ແມວ), ລ(ລິງ), ຣ(ຣາດາ), ວ(ວີ), ຮ(ເຮືອ).
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບເຄື່ອງຫຼິ້ນຕາມມຸມ.
2. ນາຍຄູແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມເກມການສຶກສາ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມເກມການສຶກສາ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເຄື່ອງຫຼິ້ນຖືກບ່ອນທີ່ກຳນົດໄວ້.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມມ່ວນຊື່ນໃນການຫຼິ້ນບົດບາດສົມມຸດເປັນຕຳຫຼວດ ແລະ ທະຫານ.
3. ຈັບຄູ່ທີ່ຄືກັນຕົວພະຍັນຊະນະ ແລະ ຈັບຄູ່ຮູບພາບກັບຕົວພະຍັນຊະນະຕົ້ນຕາມການອອກສຽງ.
4. ການເກັບມ້ຽນເຄື່ອງຫຼິ້ນຖືກບ່ອນທີ່ກຳນົດໄວ້.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມສຽງສັນຍານເຄາະ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມສຽງສັນຍານເຄາະໄດ້ຖືກຕ້ອງ.
2. ມ່ວນຊື່ນໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມສຽງສັນຍານເຄາະ:

- ເຄາະ 1 ບາດຍ່າງຕົບມືໄປທາງໜ້າ.
- ເຄາະ 2 ບາດຍ່າງຕົບມືໄປຖອຍຫຼັງ.

### III. ສື່ການຮຽນ-ການສອນ

1. ໄມ້ 2 ອັນ.
2. ທ່າຫັດກາຍະບໍລິຫານທ້ອງ-ຫຼັງ ແລະ ຕີນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານທ້ອງຫຼັງ ແລະ ຕີນ: ທ່າກົ້ມຕົວລົງທາງໜ້າ, ເງີຍຂຶ້ນ, ແອນຕົວໄປທາງຫຼັງ ແລະ ທ່າເຢ່ງເຢ້.
2. ໃຫ້ເດັກນ້ອຍຍ່າງໂຍ່ງໂຍະ ເປັນ 2 ແຖວ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມສຽງສັນຍານເຄາະ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍຢືນເອົາມືກອດເອິກຫຼັບຕາຫາຍໃຈເຂົ້າ-ອອກ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມສຽງສັນຍານເຄາະ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມມ່ວນຊື່ນໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຕາມສຽງສັນຍານເຄາະ.
2. ຄວາມມ່ວນຊື່ນໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ອາຊີບກຳມະກອນ ແລະ ນາຍຊ່າງ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກເຄື່ອງນຸ່ງ, ໜ້າທີ່, ຄວາມສຳຄັນຂອງກຳມະກອນ ແລະ ຊ່າງໄດ້ຖືກຕ້ອງ.
2. ບອກຜົນການປຽບທຽບໂດຍໃຊ້ຄຳວ່າ: ຕໍ່າກວ່າ, ສູງກວ່າ, ສູງເທົ່າກັນ ໄດ້ຖືກຕ້ອງ.
3. ປະຕິບັດຕົນຕໍ່ກຳມະກອນ ແລະ ຊ່າງ.

### II. ເນື້ອໃນຕົ້ນຕໍ

1. ເຄື່ອງນຸ່ງ, ໜ້າທີ່, ຄວາມສຳຄັນຂອງກຳມະກອນ ແລະ ຊ່າງ.

- ອາຊີບກຳມະກອນ: ເຄື່ອງນຸ່ງ: ສີຟ້າ, ໂສ້ງຂາຍາວ, ເສື້ອແຂນຍາວ; ໜ້າທີ່ຂອງກຳມະກອນ: ປຸກສ້າງ ແລະ ສ້ອມແປງບ້ານເຮືອນ; ສ້ອມແປງຖະໜົນຫົນທາງ ແລະ ຜະລິດເຄື່ອງໃຊ້ອື່ນໆ; ຄວາມສຳຄັນຂອງກຳມະກອນ: ຖ້າບໍ່ມີກຳມະກອນກໍຈະບໍ່ມີຜູ້ປຸກສ້າງ, ສ້ອມແປງເຮືອນ, ຖະໜົນຫົນທາງ ແລະ ຜະລິດເຄື່ອງໃຊ້ອື່ນໆ.
- ອາຊີບນາຍຊ່າງ: ຊ່າງເສີມສວຍ, ຊ່າງຕັດເຄື່ອງ, ຊ່າງແປງລົດ, ຊ່າງແປງເຄື່ອງໄຟຟ້າ; ໜ້າທີ່ຂອງຊ່າງເສີມສວຍ: ຕັດຜົມ, ສອຍຜົມ, ສະຜົມ, ແຕ່ງໜ້າ, ຕັດເລັບຕີນ, ເລັບມື; ຄວາມສຳຂອງຊ່າງເສີມສວຍ: ຊ່າງເສີມສວຍຊ່ວຍແຕ່ງໃຫ້ຄົນສວຍງາມ; ໜ້າທີ່ຂອງຊ່າງຕັດເຄື່ອງ: ຕັດສິ້ນ, ໂສ້ງ, ເສື້ອ; ຄວາມສຳຄັນຂອງຊ່າງຕັດເຄື່ອງ: ຊ່າງຕັດເຄື່ອງຊ່ວຍອອກແບບ ແລະ ຕັດເຄື່ອງນຸ່ງຫົ່ມໃຫ້ຄົນເຮົາໄດ້ນຸ່ງໃຫ້ສວຍງາມ; ໜ້າທີ່ຂອງຊ່າງແປງລົດ: ແປງລົດຖີບ, ຈັກ ແລະ ລົດໃຫຍ່; ຄວາມສຳຄັນຂອງຊ່າງແປງລົດ: ຊ່າງແປງລົດຊ່ວຍສ້ອມແປງລົດທີ່ເປ່ເພ ແລະ ກວດກາຄຸນນະພາບຂອງລົດ; ໜ້າທີ່ຂອງຊ່າງແປງເຄື່ອງໄຟຟ້າ: ສ້ອມແປງໂທລະທັດ, ພັດລົມ, ວິທະຍຸ, ຕູ້ເຢັນ; ຄວາມສຳຄັນຂອງຊ່າງແປງເຄື່ອງໄຟຟ້າ: ສ້ອມແປງເຄື່ອງໄຟຟ້າທີ່ເປ່ເພໃຫ້ດີ ແລະ ເອົາມາໃຊ້ໄດ້ຄືເກົ່າ.

2. ການປຽບທຽບໂດຍໃຊ້ຄຳວ່າ: ຕໍ່າກວ່າ, ສູງກວ່າ, ສູງເທົ່າກັນ.

### III. ສື່ການຮຽນ-ການສອນ

1. ຮູບພາບ: ກຳມະກອນ, ຊ່າງເສີມສວຍ, ຊ່າງຕັດເຄື່ອງ, ຊ່າງແປງລົດ, ຊ່າງແປງເຄື່ອງໄຟຟ້າ.
2. ຮູບພາບຕູ້ເຢັນສູງກວ່າ, ຕໍ່າກວ່າ, ສູງເທົ່າກັນ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບບຸກຄົນທີ່ສ້ອມແປງເຄື່ອງໃຊ້ຕ່າງໆ.
2. ໃຫ້ເດັກນ້ອຍສັງເກດຮູບພາບ: ກຳມະກອນ, ຊ່າງເສີມສວຍ, ຊ່າງຕັດເຄື່ອງ, ຊ່າງແປງລົດ, ຊ່າງແປງເຄື່ອງໄຟຟ້າ, ສົນທະນາ ແລະ ບອກກ່ຽວກັບເຄື່ອງນຸ່ງ, ໜ້າທີ່, ຄວາມສຳຄັນຂອງກຳມະກອນ, ຊ່າງ.
3. ໃຫ້ເດັກນ້ອຍສັງເກດຮູບພາບຕູ້ເຢັນ, ປຽບທຽບໂດຍໃຊ້ຄຳວ່າ: ສູງກວ່າ, ຕໍ່າກວ່າ ແລະ ສູງເທົ່າກັນ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຄວາມສຳຄັນ, ເຄື່ອງນຸ່ງ, ໜ້າທີ່ຂອງກຳມະກອນ ແລະ ຊ່າງສ້ອມແປງລົດ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີກັນ ແລະ ປະຕິບັດຕົນຕໍ່ກຳມະກອນ ແລະ ນາຍຊ່າງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກເຄື່ອງນຸ່ງ, ໜ້າທີ່, ຄວາມສຳຄັນຂອງກຳມະກອນ ແລະ ຊ່າງ.
2. ຄວາມຖືກຕ້ອງໃນການບອກຜົນການ ປຽບທຽບໂດຍໃຊ້ຄຳວ່າ: ຕໍ່າກວ່າ, ສູງກວ່າ, ສູງເທົ່າກັນ.
3. ການປະຕິບັດຕົນຕໍ່ກຳມະກອນ ແລະ ນາຍຊ່າງ.

# ກິດຈະກໍາສິລະປະສ້າງສັນ

## ຫົວຂໍ້: ຮ້ອຍສະຫຼັບຮູບຊົງຕາມແບບ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການຮ້ອຍສະຫຼັບຮູບຊົງຕາມແບບໄດ້ຖືກຕ້ອງ.
2. ຮ້ອຍສະຫຼັບຮູບຊົງຕາມແບບໄດ້ຈົບງາມ.
3. ມີຄວາມອົດທົນໃນການຮ້ອຍສະຫຼັບຮູບຊົງຕາມແບບ.

### II. ເນື້ອໃນຕົ້ນຕໍ

ການຮ້ອຍສະຫຼັບຮູບຊົງຕາມແບບ.

### III. ສື່ການຮຽນ-ການສອນ

1. ເຊືອກຟາງ ຫຼື ເສັ້ນດ້າຍ.
2. ບູ້ອກຮ້ອຍຮູບໜ່ວຍມົນ, ກ້ອນສາມແຈ, ກ້ອນຈະຕຸລັດ, ກ້ອນສີ່ແຈ.
3. ແບບຮ້ອຍຮູບຊົງ.

### IV. ກິດຈະກໍາການຮຽນ-ການສອນ

1. ໃຫ້ເດັກນ້ອຍເຮັດທ່າທາງເອົານິ້ວມືສານກັນແອນຫຼັງມືເຂົ້າຫາກັນ.
2. ໃຫ້ເດັກນ້ອຍສັງເກດຮູບເລຂາຄະນິດທີ່ຮ້ອຍສະຫຼັບກັນແລ້ວ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການຮ້ອຍ.
3. ນາຍຄູແນະນໍາ, ສາທິດວິທີ ແລະ ຂັ້ນຕອນການຮ້ອຍຮູບໜ່ວຍມົນ, ກ້ອນສາມແຈ, ກ້ອນຈະຕຸລັດ, ກ້ອນສີ່ແຈ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນໍາເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການຮ້ອຍສະຫຼັບຮູບຊົງຕາມແບບ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນ, ຄວາມສາມັກຄີ ແລະ ການເກັບມ້ຽນອຸປະກອນໄວ້.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການຮ້ອຍສະຫຼັບຮູບຊົງຕາມແບບ.
2. ຄວາມຈົບງາມໃນການຮ້ອຍສະຫຼັບຮູບຊົງຕາມແບບ.
3. ຄວາມອົດທົນໃນການຮ້ອຍສະຫຼັບຮູບຊົງຕາມແບບ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນແຂ່ງຂັນຍ້າຍບ່ອນຕາມສີຕາມສຽງສັນຍານ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນແຂ່ງຂັນຍ້າຍບ່ອນຕາມສີຕາມສຽງສັນຍານ.
2. ຫຼິ້ນແບບຫຼິ້ນແຂ່ງຂັນຍ້າຍບ່ອນຕາມສີ.
3. ປອດໄພໃນເວລາຫຼິ້ນແບບຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນແຂ່ງຂັນຍ້າຍບ່ອນຕາມສີຕາມສຽງສັນຍານໄດ້ຖືກຕ້ອງ.

### III. ສື່ການຮຽນ-ການສອນ

1. ເຊືອກສີແດງ, ສີເຫຼືອງ, ສີຟ້າ ແລະ ໝາກຫວີດ.
2. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍໝູນເອິ້ງ, ເບັດແອວ ແລະ ແກວ່ງແຂນໄປມາ.
2. ນາຍຄູສະເໜີ ແລະ ສາທິດວິທີຫຼິ້ນແບບຫຼິ້ນແຂ່ງຂັນຍ້າຍບ່ອນຕາມສີຕາມສຽງສັນຍານ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນແຂ່ງຂັນຍ້າຍບ່ອນຕາມສີ ຕາມສຽງສັນຍານ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນແຂ່ງຂັນຍ້າຍບ່ອນຕາມສີຕາມສຽງສັນຍານ.
5. ສຶກສາອົບຮົມເດັກນ້ອຍຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ຕັ້ງໃຈຟັງ, ເຄື່ອນໄຫວຮ່າງກາຍວ່ອງໄວ, ຫຼິ້ນແລ້ວອະນາໄມຕີນ ແລະ ມືໃຫ້ສະອາດ.
6. ໃຫ້ເດັກນ້ອຍໃຊ້ສອງມືຄ້ຳແອວຍືດຕົນຕົວຂຶ້ນ-ລົງ, ຫຼັງຈາກນັ້ນປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### I. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນແຂ່ງຂັນຍ້າຍບ່ອນຕາມສີ.
3. ຄວາມປອດໄພໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ຮູບພາບກັບຕົວພະຍັນຊະນະ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ອອກສຽງຕົວພະຍັນຊະນະຕາມຮູບພາບໃນແຜ່ນເກມໄດ້ຖືກຕ້ອງ.
3. ຈັບຄູ່ຮູບພາບກັບຕົວພະຍັນຊະນະໄດ້ຖືກຕ້ອງ.
4. ອົດທົນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ຮູບພາບກັບຕົວພະຍັນຊະນະ: ຮູບພາບງົວ, ຍຸງ, ທຸງ, ນົກ, ພູ, ໄຟ, ແມວ, ລີງ, ຣາດາ, ວີ, ເຮືອນ; ຕົວພະຍັນຊະນະ: ງ, ຍ, ທ, ນ, ພ, ຟ, ມ, ລ, ຣ, ວ, ຮ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ຮູບພາບກັບຕົວພະຍັນຊະນະ: ຮູບພາບງົວ, ຍຸງ, ທຸງ, ນົກ, ພູ, ໄຟ, ແມວ, ລີງ, ຣາດາ, ວີ, ເຮືອນ; ຕົວພະຍັນຊະນະ: ງ, ຍ, ທ, ນ, ພ, ຟ, ມ, ລ, ຣ, ວ, ຮ. (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັນຕົວພະຍັນຊະນະ: ງ, ຍ, ທ, ນ, ພ, ຟ, ມ, ລ, ຣ, ວ, ຮ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາເດັກນ້ອຍກ່ຽວກັບເຄື່ອງໃຊ້.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຕົວພະຍັນຊະນະ ແລະ ຮູບພາບໃນແຜ່ນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຕົວພະຍັນຊະນະ, ຮູບພາບ ແລະ ການຫຼິ້ນເກມຈັບຄູ່ຮູບພາບກັບຕົວພະຍັນຊະນະ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຄວາມອົດທົນໃນເວລາຫຼິ້ນເກມ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການອອກສຽງຕົວພະຍັນຊະນະຕາມຮູບພາບໃນແຜ່ນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ຮູບພາບກັບຕົວພະຍັນຊະນະ.
3. ຄວາມອົດທົນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເກມການສຶກສາ ແລະ ມຸມສິລະປະສ້າງສັນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຈັບຄູ່ຮູບພາບກັບຕົວພະຍັນຊະນະຕົ້ນຕາມການອອກສຽງ ແລະ ຈັບຄູ່ທີ່ຄືກັນຕົວພະຍັນຊະນະໄດ້ຖືກຕ້ອງ.
3. ຮ້ອຍບັ້ອກສະຫຼັບຮູບຊົງຕາມແບບ ແລະ ທາສີຮູບພາບໄດ້ຖືກຕ້ອງ.
4. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມເກມການສຶກສາ ແລະ ມຸມສິລະປະສ້າງສັນ.
2. ການຈັບຄູ່ຮູບພາບກັບຕົວພະຍັນຊະນະຕາມການອອກສຽງ: ຮູບພາບງົວ, ຍຸງ, ທຸງ, ນົກ, ພູ, ໄຟ, ແມວ, ລີງ, ຣາດາ, ວີ, ເຮືອນ ແລະ ຈັບຄູ່ທີ່ຄືກັນຕົວພະຍັນຊະນະ: ງ, ຍ, ທ, ນ, ພ, ຟ, ມ, ລ, ຣ, ວ, ຮ.
3. ການທາສີຮູບພາບເຄື່ອງນຸ່ງຕຳຫຼວດ ແລະ ທະຫານ; ຮ້ອຍບັ້ອກສະຫຼັບຮູບຊົງຕາມແບບ: ບັອກຮູບໜ່ວຍມົນ, ກ້ອນສາມແຈ, ກ້ອນຈະຕຸລັດ, ກ້ອນສີ່ແຈ.

### III. ສື່ການຮຽນ-ການສອນ

1. ເກມການສຶກສາ: ແຜ່ນເກມຈັບຄູ່ຮູບພາບກັບຕົວພະຍັນຊະນະ: ຮູບພາບງົວ, ຍຸງ, ທຸງ, ນົກ, ພູ, ໄຟ, ແມວ, ລີງ, ຣາດາ, ວີ, ເຮືອນ ແລະ ຕົວພະຍັນຊະນະ: ງ, ຍ, ທ, ນ, ພ, ຟ, ມ, ລ, ຣ, ວ, ຮ.
2. ມຸມສິລະປະສ້າງສັນ: ສໍສີໄມ້ ຫຼື ສີທຽນ, ປຶ້ມບົດເຝິກຫັດໜ່ວຍບ້ານຂອງຂ້ອຍ (ໜ້າ 17, 18), ແບບຮ້ອຍສະຫຼັບຮູບຊົງຕາມແບບ, ບັ້ອກຮູບໜ່ວຍມົນ, ກ້ອນສາມແຈ, ກ້ອນຈະຕຸລັດ, ກ້ອນສີ່ແຈ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບເຄື່ອງຫຼິ້ນຕາມມຸມ.
2. ນາຍຄູແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມເກມການສຶກສາ ແລະ ມຸມສິລະປະສ້າງສັນ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມເກມການສຶກສາ ແລະ ມຸມສິລະປະສ້າງສັນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນມຸມ.
2. ຄວາມຖືກຕ້ອງໃນການຈັບຄູ່ຮູບພາບກັບຕົວພະຍັນຊະນະຕົ້ນຕາມການອອກສຽງ ແລະ ຈັບຄູ່ທີ່ຄືກັນຕົວພະຍັນຊະນະ.
3. ຄວາມຖືກຕ້ອງໃນການຮ້ອຍສະຫຼັບຮູບຊົງຕາມແບບ ແລະ ທາສີຮູບພາບ.
4. ການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

## ຈຸດປະສົງສຳລັບ ອາທິດທີ 3
## ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມສຽງສັນຍານສັ່ນກະແຊັກໄດ້ຖືກຕ້ອງ.
2. ປະຕິບັດຄຳສັ່ງຕາມນາຍຄູແນະນຳໄດ້ຖືກຕ້ອງ.
3. ສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມຈິນຕະນາການຢ່າງມ່ວນຊື່ນ.
4. ສະແດງທ່າທາງຕາມທີ່ນາຍຄູອອກແບບປະກອບເນື້ອໃນບົດຄຳຄ່ອງໄດ້ຖືກຕ້ອງ.
5. ປອດໄພໃນເວລາສະແດງທ່າທາງ.
6. ຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.
7. ອົດທົນໃນເວລາສະແດງທ່າທາງ.
8. ມ່ວນຊື່ນໃນເວລາສະແດງທ່າທາງ.

## ກິດຈະກຳວົງມົນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກສິລະປະວັນນະຄະນະດີພື້ນເມືອງຂອງແຕ່ລະພາກໄດ້ຖືກຕ້ອງ.
2. ມີຄວາມມ່ວນຊື່ນໃນການຮ້ອງເພງ ແລະ ມີມາລະຍາດໃນການຟັງນິທານ.
3. ປະຕິບັດຕົວຈິງໃນການຟ້ອນປະກອບເພງຈຳປາເມືອງລາວ.
4. ອະນຸລັກຮັກສາສິລະປະວັນນະຄະດີ, ເຄື່ອງຫັດຖະກຳ ແລະ ເຄື່ອງດົນຕີພື້ນເມືອງລາວ.
5. ບອກເຄື່ອງດົນຕີ, ຫັດຖະກຳ ແລະ ແບບຫຼິ້ນພື້ນເມືອງໄດ້ຖືກຕ້ອງ.
6. ເລົ່າຄຳຄ່ອງປະກອບທ່າທາງໄດ້ຖືກຕ້ອງ.
7. ເລົ່າຄຳຄ່ອງ, ເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນບົດຄຳຄ່ອງ, ຮູບພາບ ແລະ ນິທານໄດ້ຊັດເຈນ.
8. ນັບຈຳນວນແຕ່ 1-10 ໄດ້ຖືກຕ້ອງ.
9. ບອກຮູບສີ່ແຈ, ວົງມົນຕາມຮູບພາບໄດ້ຖືກຕ້ອງ.
10. ບອກການສະເຫຼີມບຸນເຂົ້າ, ອອກພັນສາ, ບຸນພະເຫວດ ແລະ ບຸນປີໃໝ່ລາວໄດ້ຖືກຕ້ອງ.
11. ປະຕິບັດຕົນໃນເວລາໄປສະເຫຼີມສະຫຼອງບຸນເຂົ້າ, ອອກພັນສາ, ບຸນພະເຫວດ ແລະ ບຸນປີໃໝ່ລາວ.

## ກິດຈະກຳສິລະປະສ້າງສັນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການແຕ້ມຮູບພາບດອກຈຳປາຕາມແບບ, ຮ້ອຍໄມ້ປ່ອງ 1-10,ສານລາຍອັດຕາມແບບ, ທາສີຮູບພາບຊໍ່ດອກໄມ້ ແລະ ຕັດ, ຕິດຮູບພາບດອກໄມ້ໃສ່ບັດອວຍພອນໄດ້ຖືກຕ້ອງ.
2. ແຕ້ມຮູບພາບດອກຈຳປາຕາມແບບໄດ້ຄ້າຍຄື.
3. ເຝິກປະສາດສຳພັດລະຫວ່າງມື ແລະ ສາຍຕາຮ້ອຍໄມ້ປ່ອງ1-10 ແລະ ຕັດ, ຕິດດອກໄມ້ໃສ່ບັດອວຍພອນໄດ້ຈົບງາມ.
4. ສານລາຍອັດຕາມແບບໄດ້ຈົບງາມ.
5. ທາສີຮູບພາບຊໍ່ດອກໄມ້ໄດ້ຈົບງາມ ແລະ ຢູ່ໃນຂອບ.
6. ມີຄວາມອົດທົນໃນການແຕ້ມຮູບພາບດອກຈຳປາ, ຮ້ອຍໄມ້ປ່ອງໄດ້ 1-10, ສານລາຍອັດ ແລະ ຕິດດອກໄມ້ໃສ່ບັດອວຍພອນ.
7. ແບ່ງປັນສໍສີໃຫ້ກັບໝູ່ເພື່ອນ.

## ກິດຈະກຳການຫຼິ້ນກາງແຈ້ງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນງູກິນຂຽດ, ຫຼິ້ນແບບຫຼິ້ນແຂ່ງຂັນສິ່ງພາກໄມ້, ຫຼິ້ນນ້ຳ-ຫຼິ້ນຊາຍ: ຜອງຊາຍໃສ່ກະປ໋ອງ, ຫຼິ້ນແບບຫຼິ້ນຕຳຫຼວດຈັບໂຈນ ແລະ ຫຼິ້ນແບບຫຼິ້ນສົ່ງໂອນ້ຳຂ້າມຫົວ.
2. ຫຼິ້ນແບບຫຼິ້ນງູກິນຂຽດ, ຫຼິ້ນແບບຫຼິ້ນແຂ່ງຂັນສິ່ງພາກໄມ້, ຫຼິ້ນນ້ຳ-ຫຼິ້ນຊາຍ: ຜອງນ້ຳ, ຜອງຊາຍ, ຫຼິ້ນແບບຫຼິ້ນຕຳຫຼວດຈັບໂຈນ, ຫຼິ້ນແບບຫຼິ້ນສົ່ງໂອນ້ຳຂ້າມຫົວໄດ້ຖືກຕ້ອງ.
3. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.
4. ເຝິກກ້າມຊີ້ນມືໃຫ້ມີຄວາມແຂງແຮງ.

## ກິດຈະກຳເກມການສຶກສາ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ຈັດໝວດໝູ່ຕາມປະເພດຮູບພາບເຄື່ອງດົນຕີພື້ນເມືອງລາວໄດ້ຖືກຕ້ອງ.
3. ຈັບຄູ່ທີ່ຄືກັນຮູບພາບເຄື່ອງຫັດຖະກຳພື້ນເມືອງລາວ, ບຸນອອກພັນສາ, ບຸນປີໃໝ່ລາວໄດ້ຖືກຕ້ອງ.
4. ຄວາມສາມັກຄີໃນເວລາຫຼິ້ນເກມ.
5. ຄວາມອົດທົນໃນເວລາຫຼິ້ນເກມ.
6. ຕໍ່ຮູບພາບເດັກນ້ອຍລຳໄດ້ຖືກຕ້ອງ.
7. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.
8. ແບ່ງປັນເກມໃຫ້ໝູ່ເພື່ອນ.

## ກິດຈະກຳການຫຼິ້ນຕາມມຸມ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຫຼິ້ນເຄື່ອງດົນຕີ, ພິມຕົວເລກໃສ່ອ່າງດິນຊາຍ 0-5, ຕໍ່ບ໋ອກເປັນຮູບຕ່າງໆຕາມຈິນຕະນາການ, ວາງຮູບເລຂາຄະນິດສະຫຼັບກັນຕາມແບບ, ວາງຮູບເລຂາຄະນິດປະກອບເປັນຮູບຕ່າງໆຢ່າງມ່ວນຊື່ນ.
3. ສານລາຍອັດ, ຮ້ອຍໄມ້ປ່ອງໄດ້ຖືກຕ້ອງ.
4. ອ່ານຮູບພາບບຸນເຂົ້າພັນສາ ແລະ ອອກພັນສາ, ເວົ້າເປັນປະໂຫຍກຕາມຮູບພາບໄດ້ຊັດເຈນ.
5. ຫຼິ້ນບົດບາດສົມມຸດນັກສິລະປະ, ຊ່າງເສີມສວຍ, ເປັນຕົວລະຄອນໃນບົດເລື່ອງ ບຸນປີໃໝ່ລາວ, ເປັນຊາວບ້ານແຫ່ກັນຫຼອນບຸນພະເວດຢ່າງມ່ວນຊື່ນ
6. ຈັບຄູ່ທີ່ຄືກັນຮູບພາບເຄື່ອງຫັດຖະກຳພື້ນເມືອງລາວ, ບຸນອອກພັນສາ, ຈັດໝວດໝູ່ຕາມປະເພດຮູບພາບເຄື່ອງດົນຕີພື້ນເມືອງລາວ; ຕໍ່ຮູບພາບເດັກນ້ອຍລຳໄດ້ຖືກຕ້ອງ.
7. ເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.
8. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.
9. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.
10. ເກັບມ້ຽນເຄື່ອງໃຫ້ຖືກບ່ອນທີ່ກຳນົດໄວ້.
11. ມີມາລະຍາດທີ່ດີກັບໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມສຽງສັນຍານສັ່ນກະແຊັກ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມສຽງສັນຍານສັ່ນກະແຊັກໄດ້ຖືກຕ້ອງ.
2. ມ່ວນຊື່ນໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມສຽງສັນຍານ ສັ່ນກະແຊັກ:

- ສັ່ນກະແຊັກ 1 ບາດ ສະແດງທ່າທາງ ສະຜົມ.
- ສັ່ນກະແຊັກ 2 ບາດ ສະແດງທ່າທາງ ຕັດຜົມ.
- ສັ່ນກະແຊັກ 1 ບາດ ສະແດງທ່າທາງ ແປງລົດ.

### III. ສື່ການຮຽນ-ການສອນ

ທ່າຫັດກາຍະບໍລິຫານລຳຄໍ ແລະ ແຂນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານລຳຄໍ ແລະ ແຂນ: ທ່າໝູນລຳຄໍ, ທ່າຍົກແຂນຂຶ້ນເທິງຫົວ, ພັບແຂນສອກເຂົ້າປາຍນິ້ວມືຈຸບ່າ.
2. ໃຫ້ເດັກນ້ອຍຍ່າງເຕະຂາໄປທາງໜ້າ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມສຽງສັນຍານສັ່ນກະແຊັກ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງອັດສະໝາດຫຼັບຕາສະມາທິ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມສຽງສັນຍານ ສັ່ນກະແຊັກ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມມ່ວນຊື່ນໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຕາມສຽງສັນຍານສັ່ນກະແຊັກ.
2. ຄວາມມ່ວນຊື່ນໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ສິລະປະວັນນະຄະດີ ພື້ນເມືອງ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກສິລະປະວັນນະຄະນະດີພື້ນເມືອງຂອງແຕ່ລະພາກໄດ້ຖືກຕ້ອງ.
2. ມີຄວາມມ່ວນຊື່ນໃນການຮ້ອງເພງ, ຟ້ອນ ແລະ ອະນຸລັກຮັກສາສິລະປະວັນນະຄະດີພື້ນເມືອງລາວ.
3. ປະຕິບັດຕົວຈິງໃນການຟ້ອນປະກອບເພງຈຳປາເມືອງລາວ.

### II. ເນື້ອໃນຕົ້ນຕໍ

1. ສິລະປະວັນນະຄະນະດີພື້ນເມືອງປະກອບມີຂັບລຳ, ເພງ ແລະ ຟ້ອນ.

- ຂັບລຳ: ພາກເໜືອ: ຂັບຊຳເໜືອ, ຂັບທຸ້ມຫຼວງພະບາງ, ຂັບຊຽງຂວາງ; ພາກກາງ: ຂັບງື່ມ, ລຳພູໄທ, ລຳບ້ານຊອກ, ລຳຄອນສະຫວັນ, ລຳມະຫາໄຊ, ລຳຕັ່ງຫວາຍ; ພາກໃຕ້: ລຳສາລະວັນ, ລຳສີພັນດອນ, ລຳລ່ອງ.
- ເພງ: ເພງຈຳປາເມືອງລາວ; ເພງດອກບົວທອງ; ເພງອື່ນໆຂອງແຕ່ລະທ້ອງຖິ່ນ.
- ຟ້ອນ: ຟ້ອນອວຍພອນ, ຟ້ອນລາວແພນ, ຟ້ອນຈຳປາເມືອງລາວ ແລະ ຟ້ອນອື່ນໆຂອງແຕ່ລະທ້ອງຖິ່ນ.

2. ການຮ້ອງເພງ ແລະ ຟ້ອນປະກອບເພງ ຈຳປາເມືອງລາວ.

### III. ສື່ການຮຽນ-ການສອນ

1. ບົດເພງ ຈຳປາເມືອງລາວ,
2. ທ່າພື້ນຖານການຟ້ອນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ.

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບສິລະປະວັນນະຄະດີພື້ນເມືອງຂອງແຕ່ລະພາກ; ໃຫ້ເດັກນ້ອຍບອກສິລະປະວັນນະຄະດີພື້ນເມືອງ.
2. ໃຫ້ເດັກນ້ອຍຮ້ອງເພງ ຈຳປາເມືອງລາວ.
3. ໃຫ້ເດັກນ້ອຍປະຕິບັດຕົວຈິງໃນການຟ້ອນປະກອບເພງ ຈຳປາເມືອງລາວ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຂັບລຳຂອງແຕ່ລະພາກ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີຮັກແພງກັນ ແລະ ອະນຸລັກສິລະປະພື້ນເມືອງລາວ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກສິລະປະວັນນະຄະນະດີພື້ນເມືອງຂອງແຕ່ລະພາກ.
2. ຄວາມມ່ວນຊື່ນໃນການຮ້ອງເພງ, ຟ້ອນ ແລະ ການອະນຸລັກຮັກສາສິລະປະວັນນະຄະດີພື້ນເມືອງລາວ.
3. ການປະຕິບັດຕົວຈິງໃນການຟ້ອນປະກອບເພງຈຳປາເມືອງລາວ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ແຕ້ມຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການແຕ້ມຮູບພາບດອກຈຳປາຕາມແບບໄດ້ຖືກຕ້ອງ.
2. ແຕ້ມຮູບພາບດອກຈຳປາຕາມແບບໄດ້ຄ້າຍຄື.
3. ມີຄວາມອົດທົນໃນການແຕ້ມຮູບພາບດອກຈຳປາຕາມແບບ.

### II. ເນື້ອໃນຕົ້ນຕໍ

ການແຕ້ມຮູບດອກຈຳປາຕາມແບບ.

### III. ສື່ການຮຽນ-ການສອນ

1. ເຈ້ຍຂາວ, ສໍດຳ ແລະ ຢາງລຶບ.
2. ເຈ້ຍແບບຮູບດອກຈຳປາທີ່ແຕ້ມແລ້ວ.
3. ບົດເພງເພງ ຈຳປາເມືອງລາວ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ຈຳປາເມືອງລາວ ປະກອບທ່າທາງ.
2. ໃຫ້ເດັກນ້ອຍສັງເກດຮູບດອກຈຳປາ, ສົນທະນາ ແລະ ບອກກ່ຽວກັບຄວາມອັນຕອນການແຕ້ມຮູບພາບ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການແຕ້ມຮູບດອກຈຳປາຕາມແບບ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນ, ຄວາມສາມັກຄີ, ຄວາມຈົບງາມ ແລະ ການເກັບມ້ຽນອຸປະກອນໄວ້.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການແຕ້ມຮູບພາບດອກຈຳປາຕາມແບບ.
2. ຄວາມຄ້າຍຄືໃນການແຕ້ມຮູບພາບດອກຈຳປາຕາມແບບ.
3. ຄວາມອົດທົນໃນການແຕ້ມຮູບພາບດອກຈຳປາຕາມແບບ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ງູກິນຂຽດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນງູກິນຂຽດໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນງູກິນຂຽດໄດ້ຖືກຕ້ອງ.
3. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນ ງູກິນຂຽດ.

### III. ສື່ການຮຽນ-ການສອນ

1. ບົດຄຳຄ່ອງ ງູກິນຂຽດ.
2. ບົດເພງ ດອກບົວທອງ.
3. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ດອກບົວທອງ ປະກອບທ່າທາງ.
2. ນາຍຄູສະເໜີ ແບບຫຼິ້ນ ແລະ ສາທິດວິທີຫຼິ້ນແບບຫຼິ້ນງູກິນຂຽດ; ໃຫແດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນງູກິນຂຽດ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນ ງູກິນຂຽດ.
5. ສຶກສາອົບຮົມເດັກນ້ອຍ ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ບໍ່ຍູ້ກັນລົ້ມ, ຫຼິ້ນແລ້ວອະນາໄມຕົນ, ມືໃຫ້ສະອາດ ແລະ ເກັບມ້ຽນເຄື່ອງຊ່ວຍກັນ.
6. ໃຫ້ເດັກນ້ອຍຄ້ຳແອວໂຍກຕົວ ໄປ, ມາ, ຫຼັງຈາກນັ້ນປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນ ງູກິນຂຽດ.
3. ການຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບເດັກນ້ອຍລຳ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ຕໍ່ຮູບພາບເດັກນ້ອຍລຳໄດ້ຖືກຕ້ອງ.
3. ເກັບມ້ຽນແຜ່ນເກມ.

### II. ເນື້ອໃນຕົ້ນຕໍ

ການເກມຕໍ່ຮູບພາບເດັກນ້ອຍລຳ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຕໍ່ຮູບພາບເດັກນ້ອຍລຳ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ຮູບພາບກັບຕົວພະຍັນຊະນະ.
3. ບົດເພງ ຈຳປາເມືອງລາວ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ຈຳປາເມືອງລາວ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຕໍ່ຮູບພາບເດັກນ້ອຍລຳ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການເກັບມ້ຽນແຜ່ນເກມ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຕໍ່ຮູບພາບເດັກນ້ອຍລຳ.
3. ການເກັບມ້ຽນແຜ່ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມບົດບາດສົມມຸດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຫຼິ້ນເຄື່ອງດົນຕີຢ່າງມ່ວນຊື່ນ ແລະ ພິມຕົວເລກອາຣັບໃສ່ອ່າງດິນຊາຍໄດ້ຖືກຕ້ອງ.
3. ຫຼິ້ນບົດບາດສົມມຸດເປັນນັກສິລະປະ ແລະ ຊ່າງເສີມສວຍຢ່າງມ່ວນຊື່ນ.
4. ເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມບົດບາດສົມມຸດ.
2. ການຫຼິ້ນເຄື່ອງດົນຕີ: ຕີກອງ, ເປົ່າແຄນ, ດີດກີຕ້າ, ສັ່ນກະແຊັກ ແລະ ພິມຕົວເລກ 0-9 ໃສ່ອ່າງດິນຊາຍ.
3. ການຫຼິ້ນບົດບາດສົມມຸດເປັນນັກສິລະປະຮ້ອງເພງ, ຂັບ, ລຳ ຕ່າງໆ ແລະ ເປັນຊ່າງເສີມສວຍແຕ່ງໜ້າ, ສະຜົມ, ທາເລັບໃຫ້ລູກຄ້າ.

### III. ສື່ການຮຽນ-ການສອນ

1. ມຸມເຄື່ອງຫຼິ້ນສຳຜັດ: ກອງ, ແຄນ, ກີຕ້າ, ກະແຊັກ, ແບບພິມຕົວເລກ 0-9 ແລະ ອ່າງດິນຊາຍ.
2. ມຸມບົດບາດສົມມຸດ: ເຄື່ອງດົນຕີຂອງຈິງ ຫຼື ຈຳລອງ: ກອງ, ແຄນ, ກີຕ້າ ແລະ ກະແຊັກ, ຊຸດເຄື່ອງມືເສີມສວຍຂອງຈຳລອງ ຫຼື ຂອງຈິງ, ແປ້ງ, ຕຽງນອນສະຜົມ, ກ່ອງຢາສະຜົມເປົ່າ, ກ່ອງສີທາ ເລັບເປົ່າ.
3. ບົດເພງ ຈຳປາເມືອງລາວ; ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ຈຳປາເມືອງລາວ ປະກອບທ່າທາງຕາມຈິນຕະນາການ.
2. ນາຍຄູສົນທະນາກັບເດັກກ່ຽວກັບເຄື່ອງຫຼິ້ນ ແລະ ແນະນຳວິທີຫຼິ້ນ; ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມບົດບາດສົມມຸດ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມບົດບາດສົມມຸດ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມມ່ວນຊື່ນໃນການຫຼິ້ນເຄື່ອງດົນຕີ ແລະ ຄວາມຖືກຕ້ອງໃນການພິມຕົວເລກອາຣັບໃສ່ອ່າງດິນຊາຍ.
3. ຄວາມມ່ວນຊື່ນໃນການຫຼິ້ນບົດບາດສົມມຸດເປັນນັກສິລະປະ ແລະ ຊ່າງເສີມສວຍ.
4. ການເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວປະຕິບັດຄຳສັ່ງຕາມນາຍຄູແນະນຳ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ປະຕິບັດຄຳສັ່ງຕາມນາຍຄູແນະນຳໄດ້ຖືກຕ້ອງ.
2. ປອດໄພໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການປະຕິບັດຄຳສັ່ງຕາມນາຍຄູແນະນຳ: ເປົ່າແຄນ, ຕີກອງ, ຕີລະນາດ.

### III. ສື່ການຮຽນ-ການສອນ

1. ບົດເພງ ຈຳປາເມືອງລາວ.
2. ທ່າຫັດກາຍະບໍລິຫານມື ແລະ ແຂວ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານມື ແລະ ແຂວ: ທ່າຢືນກຳມືເອົ່າ, ແບມືອອກ ແລະ ທ່າຫງ່ຽງແຂວໄປເບື້ອງຂວາ-ຊ້າຍ.
2. ໃຫ້ເດັກນ້ອຍເຕັ້ນຈ່າງຂາ.
3. ນາຍຄູແນະນຳ ແລະ ສາທິດການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງກັບພື້ນຄູ້ຂາ, ເອົາມືທັງສອງຄໍ່າພື້ນທາງຫຼັງ, ພ້ອມທັງສັ່ນຂາ.
6. ໃຫ້ເດັກນ້ອຍປະຕິບັດຄືນການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມປອດໄພໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
2. ຄວາມປອດໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ເຄື່ອງດົນຕີ ແລະ ແບບຫຼິ້ນພື້ນເມືອງ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກເຄື່ອງດົນຕີ ແລະ ແບບຫຼິ້ນພື້ນເມືອງໄດ້ຖືກຕ້ອງ.
2. ເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບໄດ້ຊັດເຈນ.
3. ນັບຈຳນວນຮູບພາບແຕ່ 1-10 ໄດ້ຖືກຕ້ອງ.
4. ອະນຸລັກຮັກສາເຄື່ອງດົນຕີ ແລະ ແບບຫຼິ້ນພື້ນເມືອງ.

### II. ເນື້ອໃນຕົ້ນຕໍ

1. ເຄື່ອງດົນຕີ ແລະ ແບບຫຼິ້ນພື້ນເມືອງ.

- ເຄື່ອງດົນຕີພື້ນເມືອງ: ແຄນ, ກອງ, ລະນາດ, ຊໍ, ສິ່ງ, ແສ່ງ, ຂຸ່ຍ, ຄ້ອງ ແລະ ອື່ນໆ.
- ແບບຫຼິ້ນພື້ນເມືອງ: ຫຼິ້ນເສືອເຕັ້ນຂ້າມຫ້ວຍ, ຫຼິ້ນຊ່ອນຫາ, ງູກິນຂຽດ, ໝາກຄອນ ແລະ ແບບຫຼິ້ນອື່ນໆໃນທ້ອງຖິ່ນ.

2. ການຮ້ອງເພງ ສຽງດົນຕີ.
3. ການເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບ:

- ຄຳສັບ: ແຄນ, ກອງ, ລະນາດ, ຊໍ, ສິ່ງ, ແສ່ງ, ຂຸ່ຍ, ຄ້ອງ, ໝາກຄອນ.
- ປະໂຫຍກ: ເດັກນ້ອຍສີຊໍ, ເດັກນ້ອຍເປົ່າຂຸ່ຍ, ເດັກນ້ອຍເປົ່າແຄນ, ເດັກນ້ອຍຫຼິ້ນງູກິນຂຽດ, ເດັກນ້ອຍຫຼິ້ນຊ້ອນຫາ.

4. ນັບຈຳນວນຮູບພາບ 1-10.

### III. ສື່ການຮຽນ-ການສອນ

1. ແຄນ, ກອງ, ລະນາດ, ຊໍ, ສິ່ງ, ແສ່ງ; ບົດເພງ ສຽງດົນຕີ ເບິ່ງປຶ້ມຄູ່ມືຄູ.
2. ຮູບພາບ: ເດັກນ້ອຍສີຊໍ, ເດັກນ້ອຍຕີສິ່ງ, ເດັກນ້ອຍເປົ່າຂຸ່ຍ, ເດັກນ້ອຍຕີກອງ, ເດັກນ້ອຍເປົ່າແຄນ.
3. ຮູບພາບຊໍແຕ່ 1-10.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູພາເດັກນ້ອຍຮ້ອງເພງ ສຽງດົນຕີ, ສົນທະນາກ່ຽວກັບເນື້ອໃນຂອງບົດເພງ.
2. ໃຫ້ເດັກນ້ອຍສັງເກດແຄນ, ກອງ, ລະນາດ, ຊໍ, ສິ່ງ, ແສ່ງ, ຮູບພາບເດັກນ້ອຍຫຼິ້ນງູກິນຂຽດ, ເດັກນ້ອຍຫຼິ້ນຊ້ອນຫາ, ສົນທະນາ ແລະ ບອກກ່ຽວກັບເຄື່ອງດົນຕີ, ແບບຫຼິ້ນພື້ນເມືອງ.
3. ໃຫ້ເດັກນ້ອຍສັງເກດຮູບພາບ, ເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບ.
4. ນາຍຄູພາເດັກນ້ອຍນັບຈຳນວນຮູບພາບຊໍ ແຕ່ 1-10.
5. ນາຍຄູໃຫ້ເດັກນ້ອຍເວົ້າຄືນກ່ຽວກັບເຄື່ອງດົນຕີ ແລະ ແບບຫຼິ້ນພື້ນເມືອງ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີຮັກແພງກັນ, ການອະນຸລັກຮັກສາເຄື່ອງດົນຕີ ແລະ ແບບຫຼິ້ນພື້ນເມືອງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1 ຄວາມຖືກຕ້ອງໃນການບອກເຄື່ອງດົນຕີ ແລະ ແບບຫຼິ້ນພື້ນເມືອງ.

2. ຄວາມຊັດເຈນໃນການເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບ.
3. ຄວາມຖືກຕ້ອງໃນການນັບຈຳນວນຮູບພາບແຕ່ 1-10.
4. ການອະນຸລັກຮັກສາເຄື່ອງດົນຕີ ແລະ ແບບຫຼິ້ນພື້ນເມືອງ.

# ກິດຈະກໍາສິລະປະສ້າງສັນ

## ຫົວຂໍ້: ຮ້ອຍໄມ້ປ່ອງ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການຮ້ອຍໄມ້ປ່ອງ 1-10 ໄດ້ຖືກຕ້ອງ.
2. ເຝິກປະສາດສໍາຜັດລະຫວ່າງມື ແລະ ສາຍຕາໃນການຮ້ອຍໄມ້ປ່ອງ1-10 ໄດ້ຄ່ອງແຄ້ວ.
3. ມີຄວາມອົດທົນໃນການຮ້ອຍໄມ້ປ່ອງໄດ້.

### II. ເນື້ອໃນຕົ້ນຕໍ

ການຮ້ອຍໄມ້ປ່ອງ 1-10.

### III. ສື່ການຮຽນ-ການສອນ

1. ເຊືອກຟາງ ຫຼື ເສັ້ນດ້າຍ ແລະ ໄມ້ປ່ອງ.
2. ໄມ້ປ່ອງທີ່ຮ້ອຍແລ້ວແຕ່ 1-10.

### IV. ກິດຈະກໍາການຮຽນ-ການສອນ

1. ໃຫ້ເດັກນ້ອຍເຮັດທ່າທາງດຶງເຊືອກ, ຖູຝ່າມື.
2. ໃຫ້ເດັກນ້ອຍສັງເກດໄມ້ປ່ອງທີ່ຮ້ອຍແລ້ວ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການຮ້ອຍໄມ້ປ່ອງ.
3. ນາຍຄູແນະນໍາ, ສາທິດວິທີ ແລະ ຂັ້ນຕອນການຮ້ອຍໄມ້ປ່ອງ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນໍາເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການຮ້ອຍໄມ້ປ່ອງແຕ່ 1-10.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນ, ຄວາມສາມັກຄີ, ຄວາມຈົບງາມ ແລະ ການເກັບມ້ຽນອຸປະກອນໄວ້.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການຮ້ອຍໄມ້ປ່ອງໄດ້.
2. ຄວາມຄ່ອງແຄ້ວໃນການຮ້ອຍໄມ້ປ່ອງ 1-10.
3. ຄວາມອົດທົນໃນການຮ້ອບໄມ້ປ້ອງແຕ່ 1-10.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນແຂ່ງຂັນແລ່ນສົ່ງໝາກໄມ້

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນແຂ່ງຂັນສົ່ງໝາກໄມ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນແຂ່ງຂັນແລ່ນສົ່ງໝາກໄມ້ໄດ້ຖືກຕ້ອງ.
3. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນແຂ່ງຂັນແລ່ນສົ່ງໝາກໄມ້.

### III. ສື່ການຮຽນ-ການສອນ

1. ໝາກໄມ້2 ໜ່ວຍ ແລະ ໝາກຫວິດ.
2. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).
3. ເພງ ສຽງດົນຕີ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ສຽງດົນຕີ ປະກອບທ່າທາງ.
2. ນາຍຄູສະເໜີແບບຫຼິ້ນ ແລະ ສາທິດວິທີຫຼິ້ນແບບຫຼິ້ນແຂ່ງຂັນແລ່ນສົ່ງໝາກໄມ້; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນແຂ່ງຂັນແລ່ນສົ່ງໝາກໄມ້, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນແຂ່ງຂັນແລ່ນສົ່ງໝາກໄມ້.
5. ສຶກສາອົບຮົມເດັກນ້ອຍຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ມີຄວາມວ່ອງໄວຄ່ອງແຄ້ວ, ມີສະຕິລະວັງຕົວໃນການຫຼິ້ນ, ຫຼິ້ນແລ້ວ ອະນາໄມຕົນ, ມື ໃຫ້ສະອາດ ແລະ ເກັບມ້ຽນອຸປະກອນ.
6. ໃຫ້ເດັກນ້ອຍເຮັດທ່າທາງທົດດອກໄມ້ ແລະ ປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນແຂ່ງຂັນແລ່ນສົ່ງໝາກໄມ້.
3. ການຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັດໝວດໝູ່ຕາມປະເພດຮູບພາບເຄື່ອງດົນຕີພື້ນເມືອງລາວ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມໄດ້ຖືກຕ້ອງ.
2. ຈັດໝວດໝູ່ຕາມປະເພດຮູບພາບເຄື່ອງດົນຕີພື້ນເມືອງລາວໄດ້ຖືກຕ້ອງ.
3. ສາມັກຄີໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັດໝວດໝູ່ຕາມປະເພດຮູບພາບເຄື່ອງດົນຕີພື້ນເມືອງລາວ: ຊໍ, ກອງ, ສິ່ງ, ຂຸ່ຍ, ລະນາດ ແລະ ຄ້ອງວົງ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັດໝວດໝູ່ຕາມປະເພດຮູບພາບເຄື່ອງດົນຕີພື້ນເມືອງລາວ: ຊໍ, ກອງ, ສິ່ງ, ຂຸ່ຍ, ລະນາດ ແລະ ຄ້ອງວົງ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຕໍ່ຮູບພາບເດັກນ້ອຍລຳ.
3. ບົດເພງ ສຽງດົນຕີ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ສຽງດົນຕີ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ສົນທະນາກ່ຽວກັບຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຈັດໝວດໝູ່ຕາມປະເພດຮູບພາບເຄື່ອງດົນຕີພື້ນເມືອງລາວ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຄວາມສາມັກຄີໃນເວລາຫຼິ້ນເກມ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັດໝວດໝູ່ຕາມປະເພດຮູບພາບເຄື່ອງດົນຕີພື້ນເມືອງລາວ.
3. ຄວາມສາມັກຄີໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຫຼິ້ນເຄື່ອງດົນຕີ ແລະ ຕໍ່ບຼັອກເປັນຮູບຕ່າງໆຕາມຈິນຕະນາການຢ່າງມ່ວນຊື່ນ.
3. ຈັດໝວດໝູ່ຕາມປະເພດຮູບພາບເຄື່ອງດົນຕີພື້ນເມືອງລາວ ແລະ ການຕໍ່ຮູບພາບເດັກນ້ອຍລຳ. ໄດ້ຖືກຕ້ອງ.
4. ຊ່ວຍໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ.
2. ການຫຼິ້ນເຄື່ອງດົນຕີພື້ນເມືອງ: ເປົ່າແຄນ, ຕີກອງ, ຕີລະນາດ, ສີຊໍ, ດີດພິນ, ດີດແສ່ງ, ເປົ່າຂຸ່ຍ, ຕີຄ້ອງ ແລະ ຕໍ່ບຼັອກ ເປັນຮູບຕ່າງໆຕາມຈິນຕະນາການ.
3. ຈັດໝວດໝູ່ຕາມປະເພດຮູບພາບເຄື່ອງດົນຕີພື້ນເມືອງລາວ: ຊໍ, ກອງ, ພິນ, ຂຸ່ຍ, ລະນາດ ແລະ ຄ້ອງວົງ ແລະ ເກມຕໍ່ຮູບພາບເດັກນ້ອຍລຳ.

### III. ສື່ການຮຽນ-ການສອນ

1. ມຸມເຄື່ອງຫຼິ້ນສຳຜັດ: ເຄື່ອງດົນຕີຈິງ ຫຼື ຈຳລອງ ແຄນ, ກອງ, ລະນາດ, ຊໍ, ພິນ, ແສ່ງ, ຂຸ່ຍ, ຄ້ອງ ແລະ ຊຸດບຼັອກ.
2. ມຸມເກມການສຶກສາ: ກະດານສຽບ ຫຼື ຕິດ, ແຜ່ນເກມຈັດໝວດໝູ່ຕາມປະເພດຮູບພາບເຄື່ອງດົນຕີພື້ນເມືອງລາວ: ຊໍ, ກອງ, ພິນ, ຂຸ່ຍ, ລະນາດ ແລະ ຄ້ອງວົງ ແລະ ແຜ່ນເກມຕໍ່ຮູບພາບເດັກນ້ອຍລຳ..
3. ບົດເພງ ສຽງດົນຕີ; ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ສຽງດົນຕີ ປະກອບທ່າທາງຕາມຈິນຕະນາການ.
2. ນາຍຄູສົນທະນາກັບເດັກກ່ຽວກັບເຄື່ອງຫຼິ້ນ ແລະ ແນະນຳວິທີຫຼິ້ນ; ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມມ່ວນຊື່ນໃນການຫຼິ້ນເຄື່ອງດົນຕີ ແລະ ຕໍ່ບຼັອກເປັນຮູບຕ່າງໆຕາມຈິນຕະນາການ.
3. ຄວາມຖືກຕ້ອງໃນການຈັດໝວດໝູ່ຕາມປະເພດຮູບພາບເຄື່ອງດົນຕີພື້ນເມືອງລາວ ແລະ ການຕໍ່ຮູບພາບເດັກນ້ອຍລຳ.
4. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມຈິນຕະນາການ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມຈິນຕະນາການຢ່າງມ່ວນຊື່ນ.
2. ຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມຈິນຕະນາການ: ແສ່ວຕີນສິ້ນ ແລະ ປັ້ນໝໍ້.

### III. ສື່ການຮຽນ-ການສອນ

ທ່າຫັດກາຍະບໍລິຫານລຳຄໍ ແລະ ຂາ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານລຳຄໍ ແລະ ຂາ: ທ່າກົ້ມຫົວລົງ, ເງີຍຂຶ້ນ ແລະ ທ່າໂຢ່ງໂຢະຂາລົງ.
2. ໃຫ້ເດັກນ້ອຍແລ່ນຊິກແຊັກ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມຈິນຕະນາການ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍຢືນເຮັດທ່າທາງຈັບດອກໄມ້ມາດົມ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມຈິນຕະນາການ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນໃນການສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມຈິນຕະນາການ.
2. ການຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

# ກິດຈະກຳວິງມົນ

## ຫົວຂໍ້: ຫັດຖະກຳພື້ນເມືອງ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກປະເພດຂອງຫັດຖະກຳພື້ນເມືອງໄດ້.
2. ເລົ່າຄຳຄ່ອງ, ເວົ້າຄຳສັບ ແລະ ປະໂຫຍກຕາມຄຳຄ່ອງໄດ້ຊັດເຈນ.
3. ບອກຮູບສີ່ແຈ, ວົງມົນຕາມຮູບພາບໄດ້ຖືກຕ້ອງ.
4. ອະນຸລັກຮັກສາເຄື່ອງຫັດຖະກຳພື້ນເມືອງ.

### II. ເນື້ອໃນຕົ້ນຕໍ

1. ຫັດຖະກຳພື້ນເມືອງມີ: ຫັດຖະກຳຕ່ຳແຜ່ນ, ຫັດຖະກຳຖັກແສ່ວ, ຈັກສານ ແລະ ຫັດຖະກຳປັ້ນໝໍ້.
2. ການເລົ່າຄຳຄ່ອງ ຫັດຖະກຳ, ເວົ້າຄຳສັບ ແລະ ປະໂຫຍກຕາມເນື້ອໃນຄຳຄ່ອງ.

- ຄຳສັບ: ໄຊ, ຫວດ, ເຂິງ, ກະຕິ໊ງ, ສະໂຫຼ່ງ, ຜ້າບ່ຽງ, ສິ້ນໄໝ, ເສື້ອກັບໝາວ, ຫັດຖະກຳ.
- ປະໂຫຍກ: ຊາວບ້ານຂ້ອຍເປັນຄົນດຸໝັ່ນ, ອ້າຍເປັນຊ່າງປັ້ນ, ປູ່ສານໄຊ, ຍ່າຕ່ຳສິ້ນໄໝ, ເອື້ອຍຖັກເສື້ອກັບໝາວ, ຊາວໂລກຍ້ອງຍໍຫັດຖະກຳລາວ.

3. ຮູບເລຂາຄະນິດ: ຮູບສີ່ແຈ, ວົງມົນ.

### III. ສື່ການຮຽນ-ການສອນ

1. ຕົບສິ້ນ, ໂຖດອກໄມ້, ຕິບເຂົ້າ; ບົດຄຳຄ່ອງ ຫັດຖະກຳ (ເບິ່ງປຶ້ມຄູ່ມືຄູ).
2. ຮູບພາບຕິບເຂົ້າ, ກະຕິ໊ງ, ສາດ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູພາເດັກນ້ອຍເລົ່າຄຳຄ່ອງ, ສົນທະນາ, ເວົ້າຄຳສັບ ແລະ ປະໂຫຍກຕາມເນື້ອໃນບົດຄຳຄ່ອງ.
2. ໃຫ້ເດັກນ້ອຍສັງເກດຕົບສິ້ນ, ໂຖດອກໄມ້, ຕິບເຂົ້າ, ສົນທະນາ ແລະ ບອກກ່ຽວກັບຫັດຖະກຳພື້ນເມືອງ.
3. ໃຫ້ເດັກນ້ອຍສັງເກດຮູບຕິບເຂົ້າ, ກະຕິ໊ງ, ສາດ ແລ້ວບອກສິ່ງທີ່ເປັນຮູບສີ່ແຈ, ວົງມົນ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຫັດຖະກຳປັ້ນ, ຫັດຖະກຳຕ່ຳແຜ່ນ, ຫັດຖະກຳຈັກສານ, ຫັດຖະກຳຖັກແສ່ວ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມດຸໝັ່ນ ແລະ ການອະນຸລັກຮັກສາຫັດຖະກຳພື້ນເມືອງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຫັດຖະກຳພື້ນເມືອງ.
2. ຄວາມຊັດເຈນໃນການ ເລົ່າຄຳຄ່ອງ, ເວົ້າຄຳສັບ ແລະ ປະໂຫຍກຕາມເນື້ອໃນບົດຄຳຄ່ອງ.
3. ຄວາມຖືກຕ້ອງໃນການບອກຮູບສີ່ແຈ, ວົງມົນຕາມຮູບພາບ.
4. ການອະນຸລັກຮັກສາເຄື່ອງຫັດຖະກຳພື້ນເມືອງ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ສານລາຍອັດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການສານລາຍອັດຕາມແບບໄດ້ຖືກຕ້ອງ.
2. ສານລາຍອັດຕາມແບບໄດ້ຈົບງາມ.
3. ມີຄວາມອົດທົນໃນການສານລາຍອັດຕາມແບບ.

### II. ເນື້ອໃນຕົ້ນຕໍ

ການສານລາຍອັດຕາມແບບ.

### III. ສື່ການຮຽນ-ການສອນ

1. ເຈ້ຍທີ່ຕັດເປັນເສັ້ນແລ້ວ.
2. ແຜ່ນທີ່ສານລາຍອັດແລ້ວ.
3. ບົດຄຳຄ່ອງ ຫັດຖະກຳ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ຫັດຖະກຳ ປະກອບທ່າທາງ.
2. ໃຫ້ເດັກນ້ອຍສັງເກດແຜ່ນເຈ້ຍທີ່ສານແລ້ວ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການສານລາຍອັດ.
3. ນາຍຄູແນະນຳ, ສາທິດວິທີ ແລະ  ຂັ້ນຕອນການສານລາຍອັດຕາມແບບ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການສານລາຍອັດຕາມແບບ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນ, ຄວາມສາມັກຄີ, ຄວາມຈົບງາມ ແລະ ການເກັບມ້ຽນອຸປະກອນໄວ້.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການສານລາຍອັດຕາມແບບ.
2. ຄວາມຈົບງາມໃນການສານລາຍອັດຕາມແບບ.
3. ຄວາມອົດທົນໃນການສານລາຍອັດຕາມແບບ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນຜອງຊາຍໃສ່ກະປ໋ອງ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນຜອງຊາຍໃສ່ກະປ໋ອງໄດ້ຖືກຕ້ອງ.
2. ເຝິກກ້າມຊີ້ນມືໃຫ້ມີຄວາມແຂງແຮງ.
3. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

## II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນຜອງຊາຍໃສ່ກະປ໋ອງຜອງຊາຍໃສ່ກະປ໋ອງ.

## III. ສື່ການຮຽນ-ການສອນ

1. ຄຸນ້ຳ, ໂອ, ກະປ໋ອງ, ອ່າງຊາຍ.
2. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).
3. ບົດຄຳຄ່ອງ ຫັດຖະກຳ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ  ຫັດຖະກຳ ປະກອບທ່າທາງ.
2. ນາຍຄູສະເໜີແບບຫຼິ້ນ ແລະ ສາທິດວິທີຫຼິ້ນແບບຫຼິ້ນຜອງຊາຍໃສ່ກະປ໋ອງ; ໃຫ້ເດັກນ້ອຍບອກ ຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນນ້ຳ-ຫຼິ້ນຊາຍ: ຜອງຊາຍໃສ່ກະປ໋ອງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນຜອງຊາຍໃສ່ກະປ໋ອງ.
5. ສຶກສາອົບຮົມເດັກນ້ອຍຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ລະມັດລະວັງບໍ່ໃຫ້ດິນເຂົ້າຕາ, ຫຼັງຈາກຫຼິ້ນແລ້ວອະນາໄມມື ແລະ ຕີນໃຫ້ສະອາດ.
6. ໃຫ້ເດັກນ້ອຍເຮັດທ່າທາງເປັນແມງໄມ້ບິນໄປຮອບໆບໍລິເວນ, ຫຼັງຈາກນັ້ນປ່ອຍໃຫ້ເດັກນ້ອຍຫຼິ້ນ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມແຂງແຮງຂອງມືໃນເວລາຫຼິ້ນ.
3. ການຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັບຮູບພາບເຄື່ອງຫັດຖະກຳພື້ນເມືອງລາວ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັບຮູບພາບເຄື່ອງຫັດຖະກຳພື້ນເມືອງລາວໄດ້ຖືກຕ້ອງ.
3. ເກັບມ້ຽນແຜ່ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັບຮູບພາບເຄື່ອງຫັດຖະກຳພື້ນເມືອງລາວ: ຜ້າສະໂຫຼ້ງ, ກະຕິ້ງ, ໄຊ, ຜ້າ, ຜ້າບ່ຽງ, ສິ້ນ ແລະ ຕິບເຂົ້າ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັບຮູບພາບເຄື່ອງຫັດຖະກຳພື້ນເມືອງລາວ: ຜ້າສະໂຫຼ້ງ, ກະຕິ້ງ, ໄຊ, ຜ້າ, ຜ້າບ່ຽງ, ສິ້ນ ແລະ ຕິບເຂົ້າ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັດໝວດໝູ່ຕາມປະເພດຮູບພາບເຄື່ອງດົນຕີພື້ນເມືອງລາວ: ຊໍ, ກອງ, ສິ່ງ, ຂຸ່ຍ, ລະນາດ ແລະ ຄ້ອງວົງ,
3. ບົດຄຳຄ່ອງ ຫັດຖະກຳ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ຫັດຖະກຳ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນຈັບຄູ່ທີ່ຄືກັບຮູບພາບເຄື່ອງຫັດຖະກຳພື້ນເມືອງລາວ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການເກັບມ້ຽນແຜ່ນເກມ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ກມ ແລະ ຮູບພາບທີ່ມີຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັບຮູບພາບເຄື່ອງຫັດຖະກຳພື້ນເມືອງລາວ.
3. ການເກັບມ້ຽນແຜ່ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ວາງຮູບເລຂາຄະນິດປະກອບເປັນຮູບຕ່າງໆຕາມແບບ ແລະ ວາງບ໊ອກສະຫຼັບກັນຕາມແບບໄດ້ຖືກຕ້ອງ.
3. ສານລາຍອັດ ແລະ ຮ້ອຍໄມ້ປ່ອງໄດ້ຖືກຕ້ອງ.
4. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ.
2. ການສຳຜັດ ແລະ ວາງຮູບສີ່ແຈ, ສາມ ແຈ, ວົງມົນປະກອບເປັນຮູບເຮືອນ, ຮູບວັດ, ຮູບທາດ, ຮູບໂຮງໝໍ ຕາມແບບ, ວາງບ໊ອກ ໜ່ວຍມົນ, ສາມແຈ ແລະ ສີ່ແຈນ້ອຍ-ໃຫຍ່ສະຫຼັບກັນຕາມແບບ.
3. ການສານລາຍອັດ, ຮ້ອຍ ແລະ ນັບໄມ້ປ່ອງຈຳນວນ 10 ອັນ.

### III. ສື່ການຮຽນ-ການສອນ

1. ມຸມເຄື່ອງຫຼິ້ນສຳຜັດ: ຮູບສີ່ແຈ, ສາມແຈ, ວົງມົນ, ແບບຮູບເຮືອນ, ຮູບວັດ, ຮູບທາດ, ໂຮງໝໍ, ບ໊ອກໜ່ວຍມົນ, ສາມແຈນ້ອຍໃຫຍ່ ແລະ ສີ່ແຈນ້ອຍໃຫຍ່.
2. ມຸມສິລະປະສ້າງສັນ: ເຈ້ຍຕັດເປັນເສັ້ນ, ເຊືອກສຳລັບຮ້ອຍ, ໄມ້ປ່ອງ.
3. ບົດຄຳຄ່ອງ ຫັດຖະກຳ; ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ຫັດຖະກຳ ປະກອບທ່າທາງຕາມຈິນຕະນາການ.
2. ນາຍຄູສົນທະນາກັບເດັກກ່ຽວກັບເຄື່ອງຫຼິ້ນ ແລະ ແນະນຳວິທີຫຼິ້ນ; ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການແບ່ງປັນເຄື່ອງຫຼິ້ນໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຖືກຕ້ອງໃນການວາງຮູບເລຂາຄະນິດປະກອບເປັນຮູບຕ່າງໆຕາມແບບ ແລະ ວາງບ໊ອກສະຫຼັບກັນຕາມແບບ.
3. ຄວາມຖືກຕ້ອງໃນການສານລາຍອັດ ແລະ ຮ້ອຍໄມ້ປ່ອງ.
4. ການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມທີ່ນາຍຄູອອກແບບປະກອບບົດລຳລ່ອງ ຫັດຖະກຳ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມທີ່ນາຍຄູອອກແບບປະກອບເນື້ອໃນບົດລຳລ່ອງໄດ້ຖືກຕ້ອງ.
2. ອົດທົນໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມທີ່ນາຍຄູອອກແບບປະກອບເນື້ອໃນບົດລຳລ່ອງ ຫັດຖະກຳ.

### III. ສື່ການຮຽນ-ການສອນ

1. ບົດລຳລ່ອງ ຫັດຖະກຳ.
2. ທ່າຫັດກາຍະບໍລິຫານແຂນ ແລະ ຂາ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານແຂນ ແລະ ຂາ: ທ່າແຂນຂວາໂຄ້ງໄປທາງຊ້າຍ, ແຂນຊ້າຍໂຄ້ງໄປທາງຂວາ ແລະ ທ່າພູນຫົວເຂົ່າ.
2. ໃຫ້ເດັກນ້ອຍເຕັ້ນຊິກແຊັກເບື້ອງຊ້າຍ-ຂວາ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມທີ່ນາຍຄູອອກແບບປະກອບເນື້ອໃນບົດລຳລ່ອງ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນອນຫງາຍຫຼັບຕາວາແຂນອອກ, ພ້ອມທັງຈ່າງຂາ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມທີ່ນາຍຄູອອກແບບປະກອບເນື້ອໃນບົດລຳລ່ອງ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຕາມທີ່ນາຍຄູອອກແບບປະກອບເນື້ອໃນບົດລຳລ່ອງ.
2. ຄວາມອົດທົນໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ບຸນເຂົ້າພັນສາ ແລະ ອອກພັນສາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກການສະເຫຼີມສະຫຼອງບຸນເຂົ້າ ແລະ ອອກພັນສາໄດ້ຖືກຕ້ອງ.
2. ເລົ່າຄຳຄ່ອງປະກອບທ່າທາງຢ່າງຖືກຕ້ອງ.
3. ເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບໄດ້ຊັດເຈນ.
4. ປະຕິບັດຕົນໃນເວລາໄປສະເຫຼີມສະຫຼອງບຸນເຂົ້າ ແລະ ອອກພັນສາ.

### II. ເນື້ອໃນຕົ້ນຕໍ

1. ການສະເຫຼີມສະຫຼອງບຸນເຂົ້າພັນສາ ແລະ ອອກພັນສາ:

- ການສະເຫຼີມສະຫຼອງບຸນເຂົ້າພັນສາ: ບຸນເຂົ້າພັນສາກົງກັບເດືອນກໍລະກົດ ຫຼື ເດືອນ 8 ເພັງ (ຂຶ້ນ 15 ຄ່ຳເດືອນ 8 ລາວ) ວັນທາງພຸດທະສາສະໜາ; ການສະເຫຼີມສະຫຼອງ: ຕອນເຊົ້າເພິ່ນໃສ່ບາດ, ຕອນກາງຄືນມີການຄົບງັນ ແລະ ວຽນທຽນ (ແຫ່ດອກໄມ້).
- ການສະເຫຼີມສະຫຼອງບຸນອອກພັນສາ: ບຸນອອກພັນສາກົງກັບເດືອນຕຸລາ ຫຼື ເດືອນ 11 ເພັງ (ຂຶ້ນ 15 ຄ່ຳເດືອນ 11 ລາວ) ວັນທາງພຸດທະສາສະໜາ; ການສະເຫຼີມສະຫຼອງ: ຕອນເຊົ້າໃສ່ບາດ, ຕອນກາງຄືນມີການຄົບງັນ ແລະ ໄຫຼເຮືອໄຟ ຫຼື ລອຍກະໂທງ.

2. ການເລົ່າຄຳຄ່ອງ ບຸນເຂົ້າພັນສາ ແລະ ອອກພັນສາ ປະກອບທ່າທາງ.
3. ການເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບ:

- ຄຳສັບ: ໃສ່ບາດ, ວຽນທຽນ, ເຮືອໄຟ, ກະໂທງ.
- ປະໂຫຍກ: ເດັກນ້ອຍໄປວຽນທຽນກັບເອື້ອຍ, ເອື້ອຍໄປໃສ່ບາດຢູ່ວັດ, ພໍ່ເຖົ້າໄປຟັງເທດຢູ່ວັດ.

### III. ສື່ການຮຽນ-ການສອນ

1. ຮູບພາບ: ຄົນໃສ່ບາດ, ຄົນວຽນທຽນ, ເຮືອໄຟ, ກະໂທງ.
2. ບົດຄຳຄ່ອງ ບຸນເຂົ້າພັນສາ ແລະ ອອກພັນສາ (ເບິ່ງປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບການໄປວັດ, ໃສ່ບາດ.
2. ໃຫ້ເດັກນ້ອຍເລົ່າຄຳຄ່ອງປະກອບທ່າທາງ.
3. ໃຫ້ເດັກນ້ອຍສັງເກດຮູບພາບ, ສົນທະນາ ແລະ ບອກກ່ຽວກັບການສະເຫຼີມສະຫຼອງບຸນເຂົ້າ ແລະ ອອກພັນສາ.
4. ໃຫ້ເດັກນ້ອຍເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບ.
5. ໃຫ້ເດັກນ້ອຍເລົ່າຄຳຄ່ອງປະກອບທ່າທາງຄືນ ແລະ ບອກການສະເຫຼີມສະຫຼອງບຸນເຂົ້າ-ອອກພັນສາ.
6. ນາຍຄູສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີກັນ ແລະ ປະຕິບັດຕົນໃນເວລາໄປບຸນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກການສະເຫຼີມສະຫຼອງບຸນເຂົ້າ ແລະ ອອກພັນສາ.
2. ຄວາມຖືກຕ້ອງໃນການເລົ່າຄຳຄ່ອງປະກອບທ່າທາງ.
3. ຄວາມຊັດເຈນໃນການເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບ.
4. ການປະຕິບັດຕົນໃນເວລາໄປສະເຫຼີມສະຫຼອງບຸນເຂົ້າ ແລະ ອອກພັນສາ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ທາສີຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການທາສີຮູບພາບຊໍ່ດອກໄມ້ໄດ້ຖືກຕ້ອງ.
2. ທາສີຮູບພາບຊໍ່ດອກໄມ້ໄດ້ຈົບງາມ ແລະ ຢູ່ໃນຂອບ.
3. ແບ່ງປັນສໍສີໃຫ້ກັບໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການທາສີຮູບພາບຊໍ່ດອກໄມ້.

### III. ສື່ການຮຽນ-ການສອນ

1. ສໍສີທຽນ ຫຼື ສໍສີໄມ້, ເຈ້ຍຮູບພາບຊໍ່ດອກໄມ້
2. ເຈ້ຍຮູບພາບຊໍ່ດອກໄມ້ທີ່ທາສີແລ້ວ
3. ບົດຄຳຄ່ອງ ບຸນເຂົ້າພັນສາ ແລະ ອອກພັນສາ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ບຸນເຂົ້າພັນສາ ແລະ ອອກພັນສາ ປະກອບທ່າທາງ.
2. ໃຫ້ເດັກນ້ອຍສັງເກດຮູບພາບຊໍ່ດອກໄມ້ທີ່ທາສີແລ້ວ ແລະ ສົນທະນາ ແລະ ບອກກ່ຽວກັບການທາສີຮູບພາບ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການທາສີຮູບພາບຊໍ່ດອກໄມ້.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການທາສີຮູບພາບຊໍ່ດອກໄມ້.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນ, ຄວາມສາມັກຄີ, ຄວາມຈົບງາມ ແລະ ການເກັບມ້ຽນອຸປະກອນໄວ້.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການທາສີຮູບພາບຊໍ່ດອກໄມ້.
2. ຄວາມຈົບງາມ ແລະ ຢູ່ໃນຂອບໃນການທາສີຮູບພາບຊໍ່ດອກໄມ້.
3. ການແບ່ງປັນສໍສີໃຫ້ກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນຕຳຫຼວດຈັບໂຈນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນຕຳຫຼວດຈັບໂຈນໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນຕຳຫຼວດຈັບໂຈນໄດ້ຖືກຕ້ອງ.
3. ເບີກບານມ່ວນຊື່ນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນຕຳຫຼວດຈັບໂຈນ.

### III. ສື່ການຮຽນ-ການສອນ

1. ສາດ.
2. ບົດຄຳຄ່ອງ ບຸນເຂົ້າພັນສາ ແລະ ອອກພັນສາ.
3. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງບຸນເຂົ້າພັນສາ ແລະ ອອກພັນສາ ປະກອບທ່າທາງ.
2. ນາຍຄູສະເໜີ ແບບຫຼິ້ນ ແລະ ສາທິດວິທີຫຼິ້ນແບບຫຼິ້ນຕຳຫຼວດຈັບໂຈນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກຫຼິ້ນແບບຫຼິ້ນຕຳຫຼວດຈັບໂຈນ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນຕຳຫຼວດຈັບໂຈນ.
5. ສຶກສາອົບຮົມເດັກເດັກ ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ມີສະຕິລະວັງຕົວ, ເກັບມ້ຽນອຸປະກອນ ຫຼັງຈາກຫຼິ້ນແລ້ວ, ອະນາໄມມື ແລະ ຕີນໃຫ້ສະອາດ.
6. ໃຫ້ເດັກນ້ອຍນັ່ງຢຽດຂາແລ້ວຄ່ອຍບີບ, ຫຼັງຈາກນັ້ນປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນຕຳຫຼວດຈັບໂຈນ.
3. ຄວາມເບີກບານມ່ວນຊື່ນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັນຮູບພາບບຸນອອກພັນສາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນແຜ່ນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັນຮູບພາບບຸນອອກພັນສາໄດ້ຖືກຕ້ອງ
3. ອົດທົນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັນຮູບພາບບຸນອອກພັນສາ: ໃສ່ບາດ, ໄຫຼເຮືອໄຟ, ລອຍກະໂທງ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັນຮູບພາບບຸນອອກພັນສາ: ໃສ່ບາດ, ໄຫຼເຮືອໄຟ, ລອຍກະໂທງ (ເກມສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັນຮູບພາບເຄື່ອງຫັດຖະກຳພື້ນເມືອງລາວ: ຜ້າສະໄຫຼ້, ກະຕິບ, ໄຊ, ຜ້າ, ຜ້າບ່ຽງ, ສິ້ນ ແລະ ຕິບເຂົ້າ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກ່ຽວກັບຮູບເລຂາຄະນິດ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນຈັບຄູ່ທີ່ຄືກັນຮູບພາບບຸນອອກພັນສາ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຄວາມອົດທົນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັນຮູບພາບບຸນອອກພັນສາ.
3. ຄວາມອົດທົນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມອ່ານ ແລະ ມຸມເກມການສຶກສາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ອ່ານຮູບພາບບຸນເຂົ້າພັນສາ ແລະ ບຸນອອກພັນສາ, ເວົ້າປະໂຫຍກຕາມຮູບພາບໄດ້ຊັດເຈນ.
3. ຈັບຄູ່ທີ່ຄືກັນຮູບພາບບຸນອອກພັນສາ ແລະ ຈັບຄູ່ທີ່ຄືກັນຮູບພາບເຄື່ອງຫັດຖະກຳພື້ນເມືອງລາວໄດ້ຖືກຕ້ອງ.
4. ເກັບມ້ຽນເຄື່ອງຫຼິ້ນຖືກບ່ອນທີ່ກຳນົດໄວ້.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມອ່ານ ແລະ ມຸມເກມການສຶກສາ.
2. ການສັງເກດ ແລະ ອ່ານຮູບພາບບຸນເຂົ້າພັນສາ ແລະ ບຸນອອກພັນສາ; ເວົ້າປະໂຫຍກຮູບພາບ: ເດັກນ້ອຍສີຊໍ, ເດັກນ້ອຍຕີສິ່ງ, ເດັກນ້ອຍເປົ່າຂຸ່ຍ, ເດັກນ້ອຍຕີກອງ, ເດັກນ້ອຍເປົ່າແຄນ.
3. ການຈັບຄູ່ທີ່ຄືກັນຮູບພາບບຸນອອກພັນສາ: ໃສ່ບາດ, ໄຫຼເຮືອໄຟ, ລອຍກະໂທງ ແລະ ການຈັບຄູ່ທີ່ຄືກັນຮູບພາບເຄື່ອງຫັດຖະກຳພື້ນເມືອງລາວ: ຜ້າສະໄຫຼ້ງ, ກະດົ້ງ, ໄຊ, ຜ້າ, ຜ້າບ່ຽງ, ສິ້ນ ແລະ ຕິບເຂົ້າ.

### III. ສື່ການຮຽນ-ການສອນ

1. ມຸມອ່ານ: ກະດານສຽບ ຫຼື ຕິດ, ຮູບພາບບຸນເຂົ້າພັນສາ ແລະ ບຸນອອກພັນສາ, ເດັກນ້ອຍສີຊໍ, ເດັກນ້ອຍຕີສິ່ງ, ເດັກນ້ອຍເປົ່າຂຸ່ຍ, ເດັກນ້ອຍຕີກອງ, ເດັກນ້ອຍເປົ່າແຄນ.
2. ມຸມເກມການສຶກສາ: ກະດານສຽບ ຫຼື ຕິດ, ແຜ່ນເກມຈັບຄູ່ທີ່ຄືກັນຮູບພາບບຸນອອກພັນສາ: ໃສ່ບາດ, ໄຫຼເຮືອໄຟ, ລອຍກະໂທງ ແລະ ແຜ່ນເກມຈັບຄູ່ທີ່ຄືກັນ ຮູບພາບເຄື່ອງຫັດຖະກຳພື້ນເມືອງລາວ: ຜ້າສະໄຫຼ້ງ, ກະດົ້ງ, ໄຊ, ຜ້າ, ຜ້າບ່ຽງ, ສິ້ນ ແລະ ຕິບເຂົ້າ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ບຸນເຂົ້າພັນສາ ແລະ ອອກພັນສາ ປະກອບທ່າທາງຕາມຈິນຕະນາການ.
2. ນາຍຄູສົນທະນາກັບເດັກກ່ຽວກັບເຄື່ອງຫຼິ້ນ ແລະ ແນະນຳວິທີຫຼິ້ນ; ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມອ່ານ ແລະ ມຸມເກມການສຶກສາ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມອ່ານ ແລະ ມຸມເກມການສຶກສາ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເຄື່ອງຫຼິ້ນຖືກບ່ອນທີ່ກຳນົດໄວ້.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຊັດເຈນໃນການອ່ານຮູບພາບບຸນເຂົ້າພັນສາ ແລະ ບຸນອອກພັນສາ; ເວົ້າປະໂຫຍກຕາມຮູບພາບ.
3. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັນຮູບພາບບຸນອອກພັນສາ ແລະ ຈັບຄູ່ທີ່ຄືກັນຮູບພາບເຄື່ອງຫັດຖະກຳພື້ນເມືອງລາວ.
4. ການເກັບມ້ຽນເຄື່ອງຫຼິ້ນຖືກບ່ອນທີ່ກຳນົດໄວ້.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມທີ່ນາຍຄູອອກແບບປະກອບບົດຄຳຄ່ອງ ບຸນເຂົ້າພັນສາ ແລະ ອອກພັນສາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມທີ່ນາຍຄູອອກແບບປະກອບເນື້ອໃນບົດຄຳຄ່ອງໄດ້ຖືກຕ້ອງ.
2. ມ່ວນຊື່ນໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມທີ່ນາຍຄູອອກແບບປະກອບເນື້ອໃນບົດຄຳຄ່ອງ ບຸນເຂົ້າພັນສາ ແລະ ອອກພັນສາ.

### III. ສື່ການຮຽນ-ການສອນ

1. ບົດຄຳຄ່ອງ ບຸນເຂົ້າພັນສາ ແລະ ອອກພັນສາ.
2. ທ່າຫັດກາຍະບໍລິຫານແຂນ ແລະ ຕີນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານແຂນ ແລະ ຕີນ: ທ່າແຂນໄຂວ່ແຂນຊ້າຍ, ແຂນຊ້າຍໄຂວ່ແຂນຂວາແລະທ່າຢ່ຳເທົ້າ.
2. ໃຫ້ເດັກນ້ອຍໂດດຢຽບເສັ້ນເຊືອກໄລຍະຫ່າງ 20-50 ຊັງຕີແມັດ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມທີ່ນາຍຄູອອກແບບປະກອບເນື້ອໃນບົດຄຳຄ່ອງ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງກັບພື້ນຄູ້ຂາ, ເອົາມືທັງສອງຄ່ຳພື້ນທາງຫຼັງ, ພ້ອມທັງສັ່ນຂາ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມທີ່ນາຍຄູອອກແບບປະກອບເນື້ອໃນບົດຄຳຄ່ອງ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມມ່ວນຊື່ນໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຕາມທີ່ນາຍຄູອອກແບບປະກອບເນື້ອໃນບົດຄຳຄ່ອງ.
2. ຄວາມມ່ວນຊື່ນໃນເວລາສະແດງທ່າທາງ.

# ກິດຈະກຳ ວົງມົນ

## ຫົວຂໍ້: ບຸນພະເຫວດ ແລະ ບຸນປີໃໝ່ລາວ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ມີຄວາມມ່ວນຊື່ນ ແລະ ມີມາລະຍາດໃນການຟັງນິທານ.
2. ບອກການສະເຫຼີມສະຫຼອງບຸນພະເຫວດ ແລະ ບຸນປີໃໝ່ລາວໄດ້ຖືກຕ້ອງ.
3. ເວົ້າຄຳສັບ ແລະ ປະໂຫຍກຕາມເນື້ອໃນບົດນິທານໄດ້ຊັດເຈນ.
4. ປະຕິບັດຕົນໃນເວລາໄປສະເຫຼີມສະຫຼອງບຸນພະເຫວດ ແລະ ບຸນປີໃໝ່ລາວ.

### II. ເນື້ອໃນຕົ້ນຕໍ

1. ການສະເຫຼີມສະຫຼອງບຸນພະເຫວດ ແລະ ປີໃໝ່ລາວ.

- ການສະເຫຼີມສະຫຼອງບຸນພະເຫວດ: ບຸນພະເຫວດກົງກັບເດືອນ 4 ຂອງລາວ (ເດືອນມີນາ); ການສະເຫຼີມສະຫຼອງ: ຕອນເຊົ້າຕັກບາດ, ຟັງເທດເລື່ອງພະເຫວດສັນດອນ; ຕອນບ່າຍເພິ່ນແຫ່ກັນຫຼອນ ແລະ ບາງທ້ອງຖິ່ນເພິ່ນໄດ້ເຮັດພິທີແຫ່ພະເຫວດເຂົ້າເມືອງ.
- ການສະເຫຼີມສະຫຼອງບຸນປີໃໝ່ລາວ: ບຸນປີໃໝ່ລາວກົງກັບເດືອນ 5 ລາວ (ວັນທີ 14-16 ເດືອນເມສາ); ການສະເຫຼີມສະຫຼອງ: ຫົດສົງພະພຸດທະຮູບ, ບາສີສູ່ຂວັນ, ຫົດນ້ຳອວຍພອນເຊິ່ງກັນ ແລະ ກັນ; ບາງທ້ອງຖິ່ນ ເພິ່ນໄດ້ແຫ່ນາງສັງຂານ.

2. ການຟັງນິທານເລື່ອງ ບຸນປີໃໝ່ລາວ, ເວົ້າຄຳສັບ ແລະ ປະໂຫຍກຕາມເນື້ອໃນບົດນິທານ.

- ຄຳສັບ: ບຸນປີໃໝ່ລາວ, ດອກຄູນ, ສົງພະ, ຫົດນ້ຳ, ນ້ຳຫອມ, ທູບທຽນ, ອວຍພອນ, ມັດແຂນ.
- ປະໂຫຍກ: ຊາວບ້ານຮ່ວມສະຫຼອງບຸນປີໃໝ່ລາວ, ສອງອ້າຍນ້ອງໄປສົງນ້ຳພະ, ນາງແກ້ວກັບພໍ່ແມ່ພາກັນໄປຕັກບາດ, ພໍ່ແມ່ມັດແຂນໃຫ້ລູກ.

### III. ສື່ການຮຽນ-ການສອນ

1. ຮູບພາບ: ຄົນໃສ່ບາດ, ຜູ້ເຖົ້ານັ່ງຟັງເທດຢູ່ວັດ, ຄົນແຫ່ກັນຫຼອນ, ເດັກນ້ອຍສົງພະ.
2. ບົດນິທານເລື່ອງ ບຸນປີໃໝ່ລາວ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບກິດຈະກຳໃນມື້ບຸນປີໃໝ່ລາວທີ່ເດັກນ້ອຍເຄີຍປະຕິບັດ.
2. ນາຍຄູເລົ່ານິທານ, ສົນທະນາ; ໃຫ້ເດັກນ້ອຍເວົ້າຄຳສັບ ແລະ ປະໂຫຍກຕາມເນື້ອໃນບົດນິທານ.
3. ໃຫ້ເດັກນ້ອຍສັງເກດຮູບພາບ, ສົນທະນາ ແລະ ບອກກ່ຽວກັບການສະເຫຼີມສະຫຼອງບຸນພະເຫວດ, ບຸນປີໃໝ່ລາວ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການສະເຫຼີມສະຫຼອງບຸນພະເຫວດ ແລະ ບຸນປີໃໝ່ລາວ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີກັນ ແລະ ປະຕິບັດຕົນໃນການຫຼິ້ນບຸນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນ ແລະ ມາລະຍາດໃນການຟັງນິທານ.
2. ຄວາມຖືກຕ້ອງໃນການບອກການສະເຫຼີມບຸນພະເຫວດ ແລະ ບຸນປີໃໝ່ລາວ.
3. ຄວາມຊັດເຈນໃນການເວົ້າຄຳສັບ ແລະ ປະໂຫຍກຕາມເນື້ອໃນບົດນິທານ
4. ການປະຕິບັດຕົນໃນເວລາໄປສະເຫຼີມສະຫຼອງບຸນພະເຫວດ ແລະ ບຸນປີໃໝ່ລາວ.

# ກິດຈະກຳ ສິລະປະສ້າງສັນ

## ຫົວຂໍ້: ຕິດຮູບພາບ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການຕິດຮູບພາບດອກໄມ້ໃສ່ບັດອວຍພອນໄດ້ຖືກຕ້ອງ.
2. ເຝິກປະສາດສຳພັນລະຫວ່າງມືກັບສາຍຕາຕິດດອກໄມ້ໃສ່ບັດອວຍພອນໄດ້ສະອາດຈົບງາມ.
3. ມີຄວາມອົດທົນໃນການຕິດດອກໄມ້ໃສ່ບັດອວຍພອນ.

## II. ເນື້ອໃນຕົ້ນຕໍ

ການຕິດຮູບພາບດອກໄມ້ໃສ່ບັດອວຍພອນ.

## III. ສື່ການຮຽນ-ການສອນ

1. ກາວສຳເລັດຮູບ ຫຼື ກາວເຂົ້າໜຽວຕົ້ມ
2. ຮູບພາບດອກໄມ້ທີ່ຕັດແລ້ວ ແລະ ຊອງບັດອວຍພອນ.
3. ບັດອວຍພອນທີ່ຕິດຮູບພາບດອກໄມ້ໃສ່ແລ້ວ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເຮັດທ່າທາງກຳມື-ແບມື.
2. ໃຫ້ເດັກນ້ອຍສັງເກດບັດອວຍພອນທີ່ຕິດຮູບພາບດອກໄມ້ໃສ່ແລ້ວ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການຕິດອອກໄມ້.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການຕິດຮູບພາບດອກໄມ້ໃສ່ບັດອວຍພອນ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການຕິດຮູບພາບດອກໄມ້ໃສ່ບັດອວຍພອນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນ, ຄວາມສາມັກຄີ, ຄວາມຈົບງາມ ແລະ ການເກັບມ້ຽນອຸປະກອນໄວ້.

## V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການຕິດຮູບພາບດອກໄມ້ໃສ່ບັດອວຍພອນ.
2. ຄວາມຈົບງາມໃນການຕິດຮູບພາບດອກໄມ້ໃສ່ບັດອວຍພອນ.
3. ຄວາມອົດທົນໃນການຕິດຮູບພາບດອກໄມ້ໃສ່ບັດອວຍພອນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນແຂ່ງຂັນສົ່ງ ໂອນ້ຳຂ້າມຫົວ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນສົ່ງໂອນ້ຳຂ້າມຫົວໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນແຂ່ງຂັນສົ່ງໂອນ້ຳຂ້າມຫົວໄດ້ຖືກຕ້ອງ.
3. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນແຂ່ງຂັນສົ່ງໂອນ້ຳຂ້າມຫົວ.

### III. ສື່ການຮຽນ-ການສອນ

1. ໂອນ້ຳ ແລະ ໝາກຫວິດ.
2. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ.

1. ໃຫ້ເດັກນ້ອຍຕົບມືນັບປາກເປົ່າແຕ່ 1-20.
2. ນາຍຄູສະເໜີ ແລະ ສາທິດວິທີຫຼິ້ນແບບຫຼິ້ນແຂ່ງຂັນສົ່ງໂອນ້ຳຂ້າມຫົວ; ໃຫ້ເດັກບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນແຂ່ງຂັນສົ່ງໂອນ້ຳຂ້າມຫົວ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນແຂ່ງຂັນສົ່ງໂອນ້ຳຂ້າມຫົວ.
5. ສຶກສາອົບຮົມເດັກນ້ອຍຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ອົດທົນລໍຖ້າຫຼິ້ນຕາມລຳດັບ ແລະ ລະມັດລະວັງບໍ່ໃຫ້ນ້ຳຕົກເຮ່ຍ.
6. ໃຫ້ເດັກນ້ອຍຄ້ຳແອວແລ້ວພູນໄປທາງຂ້າງຊ້າຍ, ຂ້າງຂວາ, ຫຼັງຈາກນັ້ນປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ:

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນແຂ່ງຂັນສົ່ງໂອນ້ຳຂ້າມຫົວ.
3. ການຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັນຮູບພາບບຸນປີໃໝ່ລາວ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັນຮູບພາບບຸນປີໃໝ່ລາວໄດ້ຖືກຕ້ອງ.
3. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັນຮູບພາບບຸນປີໃໝ່ລາວ: ສູ່ຂວັນ, ຫົດນ້ຳກັນ, ສົງພະ, ຕົບພະຊາຍ, ວຽນທຽນ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັນຮູບພາບບຸນປີໃໝ່ລາວ: ສູ່ຂວັນ, ຫົດນ້ຳກັນ, ສົງພະ, ຕົບພະຊາຍ, ວຽນທຽນ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັນຮູບພາບບຸນອອກພັນສາ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບການສະເຫຼີມສະຫຼອງປີໃໝ່ລາວ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຈັບຄູ່ທີ່ຄືກັນຮູບພາບບຸນປີໃໝ່ລາວ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການຊ່ວຍເຫຼືອໝູ່ເພື່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັນຮູບພາບບຸນປີໃໝ່ລາວ.
3. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມບົດບາດສົມມຸດ

### I. ຈຸດປະສົງ

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ວາງບ້ອກປະກອບເປັນຮູບຕ່າງໆຕາມແບບຕາມຄວາມຄິດຂອງເດັກ ແລະ ພິມຕົວເລກອາຣັບ 0-5 ຕາມລຳດັບໃສ່ອ່າງດິນຊາຍໄດ້ຖືກຕ້ອງ.
3. ຫຼິ້ນບົດບາດສົມມຸດຕາມບົດເລື່ອງ ບຸນປີໃໝ່ລາວ ຢ່າງມ່ວນຊື່ນ.
4. ມີມາລະຍາດທີ່ດີຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມບົດບາດສົມມຸດ.
2. ຕໍ່ບ້ອກສາມແຈ, ທໍ່ກົມ, ສີ່ແຈ, ໜ່ວຍມົນ ແລະ ກັບສາກເປັນຮູບວັດ, ຮູບທາດຕາມແບບ ແລະ ຕາມຄວາມຄິດເດັກ, ພິມຕົວເລກອາຣັບແຕ່ 0-5 ຕາມລຳດັບໃສ່ອ່າງດິນຊາຍ.
3. ການຫຼິ້ນບົດບາດສົມມຸດຕາມບົດເລື່ອງ ບຸນປີໃໝ່ລາວ, ເປັນຊາວບ້ານແຫ່ກັນຫຼອນບຸນພະເວດ.

### III. ສື່ການຮຽນ-ການສອນ

1. ມຸມເຄື່ອງຫຼິ້ນສຳຜັດ: ບ້ອກສາມແຈ, ທໍ່ກົມ, ສີ່ແຈ, ໜ່ວຍມົນ ແລະ ກັບສາກ; ແບບພິມຕົວເລກອາຣັບແຕ່ 0-5, ອ່າງດິນຊາຍ.
2. ມຸມບົດບາດສົມມຸດ: ໜວກຕົວລະຄອນໃນບົດເລື່ອງ ບຸນປີໃໝ່ລາວ, ວັດຈຳລອງ, ຕົ້ນເງິນ ຫຼື ກັບຈຳລອງ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບການສະເຫຼີມສະຫຼອງບຸນພະເຫວດ ແລະ ປີໃໝ່ລາວ.
2. ນາຍຄູແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມບົດບາດສົມມຸດ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມບົດບາດສົມມຸດ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການມີມາລະຍາດທີ່ດີຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຖືກຕ້ອງໃນການວາງບ້ອກປະກອບເປັນຮູບຕ່າງໆຕາມແບບຕາມຄວາມຄິດຂອງເດັກ ແລະ ພິມຕົວເລກອາຣັບ 0-5 ຕາມລຳດັບໃສ່ອ່າງດິນຊາຍ.
3. ຄວາມມ່ວນຊື່ນໃນການຫຼິ້ນບົດບາດສົມມຸດຕາມບົດເລື່ອງ ບຸນປີໃໝ່ລາວ.
4. ການມີມາລະຍາດທີ່ດີຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

## ຈຸດປະສົງສຳລັບ ອາທິດທີ 4

### ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

ເພື່ອໃຫ້ເດັກນ້ອຍສາມາດ:

1. ປະຕິບັດຂໍ້ຕົກລົງຕາມນາຍຄູແນະນຳໄດ້ຖືກຕ້ອງ.
2. ສະແດງທ່າທາງຕາມການສັນຍານ ຍົກທຸງໄດ້ຖືກຕ້ອງ.
3. ສະແດງທ່າທາງຕາມສຽງສັນຍານເຄາະ, ຕົບມື, ສັ່ນກະແຊັກໄດ້ຖືກຕ້ອງ.
4. ຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.
5. ປອດໄພໃນເວລາສະແດງທ່າທາງ.
6. ອົດທົນໃນເວລາສະແດງທ່າທາງ.
7. ເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

### ກິດຈະກຳວົງມົນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ບ້ານ, ເມືອງ, ແຂວງທີ່ຕົນອາໄສຢູ່ໄດ້ຖືກຕ້ອງ.
2. ບອກຊື່ເຕັມ, ຊື່ຫຍໍ້ຂອງປະເທດ ແລະ ຊື່ບັນດາແຂວງໃນປະເທດລາວໄດ້ຖືກຕ້ອງ.
3. ບອກຜົນການປຽບທຽບໂດຍໃຊ້ຄຳວ່າສັ້ນກວ່າ, ຍາວກວ່າ, ຍາວເທົ່າກັນ ແລະ ຈຳນວນທີ່ນ້ອຍກວ່າ ບໍ່ເກີນ 10 ໄດ້ຖືກຕ້ອງ.
4. ມີຄວາມຮັກບ້ານເກີດເມືອງນອນຂອງຕົນເອງ ແລະ ມີຄວາມເຄົາລົບນັບຖືວັນຊາດຂອງລາວ.
5. ບອກການສະເຫຼີມສະຫຼອງວັນຊາດ, ສີຂອງທຸງຊາດລາວ ແລະ ບອກບັນດາທຸງຊາດແຕ່ລະປະເທດໃນກຸ່ມອາຊຽນໄດ້ຖືກຕ້ອງ.
6. ບອກການສະເຫຼີມສະຫຼອງວັນແມ່ຍິງ, ວັນຄູ, ວັນກຳມະກອນ, ວັນກອງທັບ, ວັນເດັກນ້ອຍສາກົນໄດ້ຖືກຕ້ອງ.
7. ປະຕິບັດຕົວຈິງໃນການອວຍພອນແມ່ຍິງ, ນາຍຄູ, ກຳມະກອນ ແລະ ທະຫານ.
8. ອ່ານຕົວເລກສັບປ່ຽນບ່ອນແຕ່ 0-5 ໄດ້ຖືກຕ້ອງ.
9. ປະຕິບັດຕົນຕໍ່ແມ່, ນາຍຄູ, ກຳມະກອນ ແລະ ທະຫານ.
10. ເວົ້າອອກສຽງຄຳທີ່ຄ້າຍຄືກັນແຕ່ມີຄວາມໝາຍຕ່າງກັນຕາມຮູບພາບໄດ້ຊັດເຈນ.
11. ບອກລຳດັບທີ່ຕັ້ງຂອງເຮືອນຕາມຮູບພາບໄດ້ຖືກຕ້ອງ.
12. ປະຕິບັດຕົວຈິງໃນການແຕ້ມຮູບ.
13. ອ່ານຕົວເລກອາຣັບຈາກໃບເງິນກີບໄດ້ຖືກຕ້ອງ.
14. ອະນຸລັກຮັກສາເງິນກີບ.

### ກິດຈະກຳສິລະປະສ້າງສັນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການຂີດຂຽນຕົວເລກ 12 ຕາມຮອຍຈ້ຳ, ແຕ້ມ ແລະ ທາສີຮູບພາບທຸງຊາດລາວຕາມແບບ, ຮ້ອຍດອກໄມ້ເປັນພວງມະໄລ, ຕິດເຈ້ຍມຸ່ນໃສ່ຮູບພາບລ້ອນຕີ ແລະ ຂີດຂຽນຕົວເລກ 13 ຕາມຮອຍຈ້ຳໄດ້ຖືກຕ້ອງ.
2. ເຝິກປະສາດສຳພັນລະຫວ່າງມືກັບສາຍຕາສານສະຫຼັບສີຂາວ, ແດງ ແລະ ຟ້າໄດ້ຈົບງາມ.
3. ແຕ້ມຮູບພາບທຸງຊາດລາວຕາມແບບໄດ້ຄ້າຍຄື.
4. ຮ້ອຍດອກໄມ້ເປັນພວງມະໄລໄດ້ຈົບງາມ.
5. ຕິດເຈ້ຍມຸ່ນໃສ່ຮູບພາບລ້ອນຕີ ແລະ ຕິດຮູບພາບປູມເປົ້າໄດ້ສະອາດຈົບງາມ.
6. ມີຄວາມອົດທົນໃນການສານສະລັບສີຂາວ, ແດງ ແລະ ຟ້າ, ຮ້ອຍດອກໄມ້ເປັນພວງມະໄລ, ຕິເຈ້ຍມຸ່ນໃສ່ຮູບລ້ອນຕີ ແລະ ຕິດເຈ້ຍມຸ່ນໃສ່ຮູບພາບປູມເປົ້າ.
7. ແບ່ງປັນສໍສີໃຫ້ກັບໝູ່ເພື່ອນ.

## ກິດຈະກຳການຫຼິ້ນກາງແຈ້ງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນມັດຕາຕາບອດຊົກມວຍ, ຫຼິ້ນແບບຫຼິ້ນແຂ່ງຂັນຮ່າຍນ້ຳສີຕ່າງໆ, ຫຼິ້ນແບບຫຼິ້ນມັດຕາຈັບປຸມເປົ້າ, ຫຼິ້ນແບບຫຼິ້ນແຂ່ງຂັນຫາມບານ ແລະ ຫຼິ້ນນ້ຳ-ຫຼິ້ນຊາຍ: ຖອກນ້ຳໃສ່ພາຊະນະຕ່າງໆ, ກອງຊາຍເປັນຮູບຕ່າງໆຕາມໃຈ.
2. ຫຼິ້ນແບບຫຼິ້ນຕາບອດຊົກມວຍ, ຫຼິ້ນແບບຫຼິ້ນແຂ່ງຂັນຮ່າຍນ້ຳສີຕ່າງໆ, ຫຼິ້ນແບບຫຼິ້ນມັດຕາຈັບປຸມເປົ້າ, ຫຼິ້ນແບບຫຼິ້ນແຂ່ງຂັນຫາມບານ, ຫຼິ້ນນ້ຳ-ຫຼິ້ນຊາຍ: ຖອກນ້ຳໃສ່ພາຊະນະຕ່າງໆ, ກອງຊາຍເປັນຮູບຕ່າງໆຕາມໃຈໄດ້ຖືກຕ້ອງ.
3. ມີຄວາມປອດໄພໃນເວລາຫຼິ້ນ.
4. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.
5. ເບີກບານມ່ວນຊື່ນໃນເວລາຫຼິ້ນ.
6. ອົດທົນໃນການຫຼິ້ນແບບຫຼິ້ນ.
7. ເຝິກກ້າມຊີ້ນມືໃຫ້ແຂງແຮງໃນເວລາຖອກນ້ຳ ແລະ ກອງຊາຍ.

## ກິດຈະກຳເກມການສຶກສາ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ, ຕົວເລກ ແລະ ຮູບພາບທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັນຮູບພາບທຸງຊາດ, ທຸງທິວຕາມສີ, ການສະເຫຼີມສະຫຼອງວັນແມ່ຍິງສາກົນ, ການສະເຫຼີມສະຫຼອງວັນສ້າງກອງທັບ, ການສະເຫຼີມສະຫຼອງບຸນວັນເດັກນ້ອຍໄດ້ຖືກຕ້ອງ.
3. ລຽນລຳດັບຕົວເລກແຕ່ 0-9 ໄດ້ຖືກຕ້ອງ.
4. ເກັບມ້ຽນແຜ່ນເກມ.
5. ອົດທົນໃນເວລາຫຼິ້ນເກມ.
6. ເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

## ກິດຈະກຳການຫຼິ້ນຕາມມຸມ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຮ້ອຍດອກໄມ້ເປັນພວງມະໄລ, ແຕ້ມ ແລະ ທາສີຮູບພາບທຸງຊາດລາວ, ຂີດຂຽນຕົວເລກ 13 ຕາມຮອຍຈ້ຳໄດ້ຖືກຕ້ອງ.
3. ອ່ານຮູບພາບຕາມປຶ້ມນິທານເລື່ອງ ໜ້າທີ່ທະຫານ ແລະ ຕຳຫຼວດ, ອ່ານຮູບພາບຕາມປຶ້ມນິທານເລື່ອງປີໃໝ່ລາວ, ອ່ານຕົວເລກຈາກໃບເງິນກີບ, ອ່ານຈຳນວນຮູບພາບດອກໄມ້ແຕ່ 1-10, ອ່ານພະຍັນຊະນະ: ມ, ຈ, ດ, ສ, ຖ ປະສົມສະຫຼະ xື ມີວັນນະຍຸດ x່, x້, ອ່ານຕົວເລກສັບບ່ອນແຕ່ 0-5, ອ່ານຄຳສັບທີ່ມີຕົວສະກົດ: ກ, ນ,ງ, ດ, ບ, ມ ໄດ້ຊັດເຈນ.
4. ຫຼິ້ນບົດບາດສົມມຸດເປັນພໍ່ຄ້າ, ແມ່ຄ້າ ແລະ ລູກຄ້າຊື້ຂາຍສິ້ນຄ້າ, ເປັນນັກສິລະປະຢ່າງມ່ວນຊື່ນ
5. ຈັບຄູ່ທີ່ຄືກັນຮູບພາບທຸງຊາດ, ທຸງທິວຕາມສີ, ການສະເຫຼີມສະຫຼອງວັນແມ່ຍິງສາກົນ, ການສະເຫຼີມສະຫຼອງວັນສ້າງກອງທັບ, ການສະເຫຼີມສະຫຼອງບຸນວັນເດັກນ້ອຍ; ລຽນລຳດັບຕົວເລກແຕ່ 0-9; ຈັບຄູ່ທີ່ຄືກັນຮູບພາບບຸນປີໃໝ່ລາວໄດ້ຖືກຕ້ອງ.
6. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.
7. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.
8. ເກັບມ້ຽນເຄື່ອງໃຫ້ຖືກບ່ອນທີ່ກຳນົດໄວ້.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວປະຕິບັດຂໍ້ຕົກລົງຕາມນາຍຄູແນະນຳ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ປະຕິບັດຂໍ້ຕົກລົງຕາມນາຍຄູແນະນຳໄດ້ຖືກຕ້ອງ.
2. ປອດໄພໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການປະຕິບັດຂໍ້ຕົກລົງຕາມນາຍຄູແນະນຳ:

- ເວົ້າຊື່ແຂວງຜົ້ງສາລີໃຫ້ແລ່ນເຂົ້າມຸມພາກເໜືອ.
- ເວົ້າຊື່ແຂວງນະຄອນຫຼວງວຽງຈັນແລ່ນເຂົ້າມຸມພາກກາງ.
- ເວົ້າຊື່ແຂວງອັດຕະປືໃຫ້ແລ່ນເຂົ້າມຸມພາກໃຕ້.

### III. ສື່ການຮຽນ-ການສອນ

ທ່າຫັດກາຍະບໍລິຫານຂາ ແລະ ແຂນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານຂາ ແລະ ແຂນ: ທ່າໝູນຫົວເຂົ່າ, ທ່າເບັດແຂນໄປເບື້ອງຊ້າຍ-ເບື້ອງຂວາ.
2. ໃຫ້ເດັກນ້ອຍຍາງເຢ່ງເຢ້ເປັນ 2 ແຖວ.
3. ນາຍຄູແນະນຳ ແລະ ສາທິດການປະຕິບັດຂໍ້ຕົກລົງຕາມນາຍຄູແນະນຳ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງອັດສະໝາດຫຼັບຕາສະມາທິ.
6. ໃຫ້ເດັກນ້ອຍປະຕິບັດຄືນການປະຕິບັດຂໍ້ຕົກລົງຕາມນາຍຄູແນະນຳ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມປອດໄພໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການປະຕິບັດຂໍ້ຕົກລົງຕາມນາຍຄູແນະນຳ.
2. ຄວາມປອດໄພໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ບ້ານ, ເມືອງ, ແຂວງ ແລະ ປະເທດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ບ້ານ, ເມືອງ, ແຂວງທີ່ຕົນອາໄສຢູ່ໄດ້ຖືກຕ້ອງ.
2. ບອກຊື່ເຕັມ, ຊື່ຫຍໍ້ຂອງປະເທດ ແລະ ຊື່ບັນດາແຂວງໃນປະເທດລາວ.
3. ບອກຜົນການປຽບທຽບໂດຍໃຊ້ຄຳວ່າສັ້ນກວ່າ, ຍາວກວ່າ, ຍາວເທົ່າກັນໄດ້ຖືກຕ້ອງ.
4. ມີຄວາມຮັກບ້ານເກີດເມືອງນອນຂອງຕົນເອງ.

### II. ເນື້ອໃນຕົ້ນຕໍ

1. ບ້ານ. ເມືອງ, ແຂວງ ແລະ ປະເທດ
- ບ້ານ: ຊື່ບ້ານ, ເມືອງ ແລະ ແຂວງທີ່ຕົນອາໄສຢູ່.
- ປະເທດ: ຊື່ເຕັມສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ; ຊື່ຫຍໍ້: ສ. ປ. ປ. ລາວ.
- ບັນດາແຂວງໃນປະເທດລາວ: ປະເທດລາວມີ 18 ແຂວງຄື: 1 ນະຄອນຫຼວງ; 2 ແຂວງຜົ້ງສາລີ; 3 ແຂວງຫຼວງນ້ຳທາ; 4 ແຂວງອຸດົມໄຊ; 5 ແຂວງບໍ່ແກ້ວ; 6 ແຂວງຫຼວງພະບາງ; 7 ແຂວງຫົວພັນ; 8 ແຂວງໄຊຍະບູລີ; 9 ແຂວງຊຽງຂວາງ; 10 ແຂວງວຽງຈັນ; 11 ແຂວງບໍລິຄຳໄຊ; 12 ແຂວງຄຳມ່ວນ; 13 ແຂວງສະຫວັນນະເຂດ; 14 ແຂວງສາລະວັນ; 15 ແຂວງຈຳປາສັກ; 16 ແຂວງເຊກອງ; 17 ແຂວງອັດຕະປື; 18 ແຂວງໄຊສົມບູນ.

2. ການປຽບທຽບຄວາມຍາວໂດຍໃຊ້ຄຳວ່າ: ສັ້ນກວ່າ, ຍາວກວ່າ, ຍາວເທົ່າກັນ

### III. ສື່ການຮຽນ-ການສອນ.

1. ຮູບພາບ: ຖະໜົນສັ້ນ, ຍາວ.
2. ແຜນທີ່ປະເທດລາວ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ບ້ານ, ເມືອງ ແລະ ແຂວງທີ່ເດັກນ້ອຍອາໄສຢູ່.
2. ໃຫ້ເດັກນ້ອຍສັງເກດແຜນທີ່ປະເທດລາວ, ສົນທະນາ ແລະ ບອກກ່ຽວກັບຊື່ຫຍໍ້, ຊື່ເຕັມ, ບັນດາແຂວງຕ່າງໆໃນປະເທດລາວ.
3. ໃຫ້ເດັກນ້ອຍສັງເກດຮູບພາບຖະໜົນ, ປຽບທຽບຄວາມຍາວຂອງຖະໜົນແລ້ວບອກຜົນການປຽບທຽບ.
4. ໃຫ້ເດັກນ້ອຍເວົ້າຄືນຊື່ບ້ານ, ເມືອງ, ແຂວງທີ່ຕົນອາໄສຢູ່.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີຮັກແພງກັນ ແລະ ຮັກບ້ານເກີດເມືອງນອນຂອງຕົນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ບ້ານ, ເມືອງ, ແຂວງທີ່ຕົນອາໄສຢູ່.
2. ຄວາມຖືກຕ້ອງໃນການບອກຊື່ເຕັມ, ຊື່ຫຍໍ້ຂອງປະເທດ ແລະ ຊື່ບັນດາແຂວງໃນປະເທດລາວ.
3. ຄວາມຖືກຕ້ອງໃນການບອກຜົນການປຽບທຽບຄວາມຍາວໂດຍໃຊ້ຄຳວ່າ: ຍາວກວ່າ, ສັ້ນກວ່າ, ຍາວເທົ່າກັນ.
4. ຄວາມຮັກບ້ານເກີດເມືອງນອນຂອງຕົນເອງ.

# ກິດຈະກຳ ສິລະປະສ້າງສັນ

## ຫົວຂໍ້: ຂີດຂຽນຕົວເລກ 12 ຕາມຮອຍຈ້ຳ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການຂີດຂຽນຕົວເລກ 12 ຕາມຮອຍຈ້ຳໄດ້ຖືກຕ້ອງ.
2. ເຝິກປະສາດສຳຜັດລະຫວ່າງມືກັບສາຍຕາ, ຂີດຂຽນຕົວເລກ 12 ຕາມຮອຍຈ້ຳໄດ້ຄ່ອງແຄ້ວ.
3. ມີຄວາມອົດທົນໃນການຂີດຂຽນຕົວເລກ 12 ຕາມຮອຍຈ້ຳ.

### II. ເນື້ອໃນຕົ້ນຕໍ

ການຂີດຂຽນຕົວເລກ 12 ຕາມຮອຍຈ້ຳ.

### III. ສື່ການຮຽນ-ການສອນ

1. ສໍດຳ, ຢາງລຶບ.
2. ປຶ້ມບົດເຝິກຫັດລະນຶດສາດເຫຼັ້ມ 1 (ໜ້າ 8) ຫຼື ເຈ້ຍຕົວເລກ 12.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍໃຫ້ຍົກມືຂຶ້ນສັ່ນຄໍ່ມື ແລະ ເອົານິ້ວມືສານກັນແລ້ວຫົບຄໍ່ມືຊ້າຍ-ຂວາ.
2. ໃຫ້ເດັກນ້ອຍສັງເກດຕົວເລກ 12, ສົນທະນາ ແລະ ບອກກ່ຽວກັບຕົວເລກ 12.
3. ນາຍຄູແນະນຳ, ສາທິດວິທີ, ແລະ ຂັ້ນຕອນການຂີດຂຽນຕົວເລກ 12.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການຂີດຂຽນຕົວເລກ 12 ຕາມຮອຍຈ້ຳ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນ, ຄວາມສາມັກຄີ, ຄວາມຈົບງາມ ແລະ ການເກັບມ້ຽນອຸປະກອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການຂີດຂຽນຕົວເລກ 12 ຕາມຮອຍຈ້ຳ.
2. ຄວາມຄ່ອງແຄ້ວໃນການຂີດຂຽນຕົວເລກ 12 ຕາມຮອຍຈ້ຳ.
3. ຄວາມອົດທົນໃນການຂີດຂຽນຕົວເລກ 12 ຕາມຮອຍຈ້ຳ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນຕາບອດຊົກມວຍ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນມັດຕາຕາບອດຊົກມວຍໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນຕາບອດຊົກມວຍໄດ້ຖືກຕ້ອງ.
3. ມີຄວາມປອດໄພໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນຕາບອດຊົກມວຍ.

### III. ສື່ການຮຽນ-ການສອນ

1. ຜ້າ, ກະເປົ໋າ, ງົ້ວ, ກະເປົ໋າດິນຊາຍ, ເຊືອກ ແລະ ໄມ້ນ້ອຍສຳລັບຂີດເສັ້ນໄຊ ແລະ ເສັ້ນເລີ່ມຕົ້ນ.
2. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຄ້ຳແອວເຕັ້ນຢູ່ກັບທີ່ ແລະ ຍ່າງຊ້າຕາມສຽງຕົບກອງ.
2. ນາຍຄູສະເໜີ ແບບຫຼິ້ນ ແລະ ສາທິດວິທີຫຼິ້ນແບບຫຼິ້ນຕາບອດຊົກມວຍ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນຕາບອດຊົກມວຍ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນຕາບອດຊົກມວຍ.
5. ສຶກສາອົບຮົມເດັກນ້ອຍ ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ມີສະຕິລະວັງຕົວບໍ່ໃຫ້ລົ້ມໃນເວລາຍ່າງ ອົດທົນລໍຖ້າຫຼິ້ນຕາມລຳດັບ, ຫຼິ້ນແລ້ວອະນາໄມ ມື ແລະ ຕີນໃຫ້ສະອາດ.
6. ໃຫ້ເດັກນ້ອຍຄ້ຳແອວຢືດຕົວຂຶ້ນ, ລົງ, ຫຼັງຈາກນັ້ນປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນຕາບອດຊົກມວຍ.
3. ຄວາມປອດໄພໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມລຽນລຳດັບຕົວເລກ 0-9

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຕົວເລກທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ລຽນລຳດັບຕົວເລກ 0-9 ໄດ້ຖືກຕ້ອງ.
3. ອົດທົນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການລຽນລຳດັບຕົວເລກ 0-9: 0, 1, 2, 3, 4, 5, 6, 7, 8, 9.

### III. ສື່ການຮຽນ-ການສອນ

1. ແຜ່ນເກມລຽນລຳດັບຕົວເລກ 0-9: 0, 1, 2, 3, 4, 5, 6, 7, 8, 9 (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັບຮູບພາບບຸນປີໃໝ່ລາວ.
3. ບົດຄຳຄ່ອງ ບຸນເຂົ້າພັນສາ ແລະ ອອກພັນສາ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ບຸນເຂົ້າພັນສາ ແລະ ອອກພັນສາ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຕົວເລກທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຕົວເລກ ແລະ ການຫຼິ້ນເກມລຽນລຳດັບຕົວເລກ 0-9.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຄວາມອົດທົນໃນເວລາຫຼິ້ນເກມ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
2. ຄວາມຖືກຕ້ອງໃນການລຽນລຳດັບຕົວເລກ 0-9.
3. ຄວາມອົດທົນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເກມການສຶກສາ ແລະ ມຸມອ່ານ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ລຽນລຳດັບຕົວເລກ 0-9 ແລະ ຈັບຄູ່ທີ່ຄືກັບຮູບພາບບຸນປີໃໝ່ລາວໄດ້ຖືກຕ້ອງ.
3. ອ່ານຮູບພາບຕາມປຶ້ມນິທານ ແລະ ອ່ານຕົວເລກຈາກໃບເງິນກີບໄດ້ຊັດເຈນ.
4. ເກັບມ້ຽນເຄື່ອງຫຼິ້ນຖືກບ່ອນທີ່ກຳນົດໄວ້.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມເກມການສຶກສາ ແລະ ມຸມອ່ານ.
2. ການລຽນລຳດັບຕົວເລກ 0-9 ແລະ ການຈັບຄູ່ທີ່ຄື ກັບຮູບພາບບຸນປີໃໝ່ລາວ: ສູ່ຂວັນ, ຫົດນ້ຳກັນ, ສົງພະ, ຕົບພະຊາຍ, ວຽນທຽນ.
3. ການສັງເກດ ແລະ ອ່ານຮູບພາບຕາມປຶ້ມນິທານເລື່ອງ ໜ້າທີ່ທະຫານ ແລະ ຕຳຫຼວດ ແລະ ເລື່ອງບຸນປີໃໝ່ລາວ, ສັງເກດ ແລະ ອ່ານຕົວເລກຈາກເງິນກີບໃບ 500 ກີບ ແລະ ໃບ 1000 ກີບ.

### III. ສື່ການຮຽນ-ການສອນ

1. ມຸມເກມການສຶກສາ: ກະດານສຽບ ຫຼື ຕິດ, ແຜ່ນເກມລຽນລຳດັບຕົວເລກ 0-9 ແລະ ແຜ່ນເກມຈັບຄູ່ທີ່ຄືກັບຮູບພາບບຸນປີໃໝ່ລາວ: ສູ່ຂວັນ, ຫົດນ້ຳກັນ, ສົງພະ, ຕົບພະຊາຍ, ວຽນທຽນ.
2. ມຸມອ່ານ: ກະດານສຽບ ຫຼື ຕິດ, ຮູບພາບຕາມປຶ້ມນິທານເລື່ອງ ໜ້າທີ່ທະຫານ ແລະ ຕຳຫຼວດ ແລະ ເລື່ອງ ບຸນປີໃໝ່ລາວ, ເງິນກີບໃບ 500 ກີບ ແລະ ໃບ 1000 ກີບ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ບ້ານ, ເມືອງ ແລະ ແຂວງທີ່ຕົນອາໄສຢູ່.
2. ນາຍຄູແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມເກມການສຶກສາ ແລະ ມຸມອ່ານ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມເກມການສຶກສາ ແລະ ມຸມອ່ານ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເຄື່ອງຫຼິ້ນຖືກບ່ອນທີ່ກຳນົດໄວ້.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຖືກຕ້ອງໃນການລຽນລຳດັບຕົວເລກ 0-9 ແລະ ຈັບຄູ່ທີ່ຄືກັບຮູບພາບບຸນປີໃໝ່ລາວ.
3. ຄວາມຊັດເຈນໃນການອ່ານຮູບພາບຕາມປຶ້ມນິທານ ແລະ ອ່ານຕົວເລກຈາກໃບເງິນກີບ.
4. ການເກັບມ້ຽນເຄື່ອງຫຼິ້ນຖືກບ່ອນທີ່ກຳນົດໄວ້.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມການສັນຍານຍົກທຸງ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມການສັນຍານຍົກທຸງໄດ້ຖືກຕ້ອງ.
2. ຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມການສັນຍານຍົກທຸງ:

- ຍົກທຸງຊາດສະແດງທ່າທາງຮ້ອງເພງ.
- ຍົກທຸງທິວສະແດງທ່າທາງຟ້ອນ.

### III. ສື່ການຮຽນ-ການສອນ

ທ່າຫັດກາຍະບໍລິຫານລຳຕົວ ແລະ ຂາ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານລຳຕົວ ແລະ ຂາ: ທ່າຫງ່ຽງລຳຕົວໄປເບື້ອງຊ້າຍ-ເບື້ອງຂວາ ແລະ ທ່າຢືນຂາດຽວຍົກຂາຊ້າຍຄູ້ເຂົ້າທາງຫຼັງ ພ້ອມທັງເອົາມືຈັບໄວ້ (ຜັດປ່ຽນເບື້ອງ).
2. ໃຫ້ເດັກນ້ອຍຍ່າງກ້າວໄປທາງໜ້າ-ຖອຍຫຼັງ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມການສັນຍານຍົກທຸງ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງຢຽດຂາໄປທາງໜ້າ, ຈ່າງຂາອອກ, ກົ້ມຕົວລົງເອົາມືທັງສອງຈັບປາຍຕີນ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມການສັນຍານຍົກທຸງ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຕາມການສັນຍານຍົກທຸງ.
2. ການຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

# ກິດຈະກໍາວົງມົນ

## ຫົວຂໍ້: ວັນຊາດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກການສະເຫຼີມສະຫຼອງວັນຊາດ, ບອກສີຂອງທຸງຊາດລາວ ແລະ ບອກບັນດາທຸງຊາດແຕ່ລະປະເທດໃນກຸ່ມອາຊຽນໄດ້ຖືກຕ້ອງ.
2. ບອກຜົນການປຽບທຽບຈໍານວນທີ່ນ້ອຍກວ່າບໍ່ເກີນ 10 ໄດ້ຖືກຕ້ອງ.
3. ມີຄວາມເຄົາລົບນັບຖືວັນຊາດຂອງລາວ.

### II. ເນື້ອໃນຕົ້ນຕໍ

1. ການສະເຫຼີມສະຫຼອງວັນຊາດ.
   - ການປະດັບປະດາອາຄານສະຖານທີ່: ປັກທຸງຊາດ, ທຸງທິວ ແລະ ຄໍາຂວັນ; ທຸງຊາດຂອງລາວມີ 3 ສີຄື: ສີແດງ, ສີຟ້າ ແລະ ສີຂາວເປັນຮູບວົງມົນຢູ່ເຄິ່ງກາງ; ທຸງທິວມີສີແດງ, ສີຟ້າ, ສີເຫຼືອງ ແລະ ສີຂາວ; ຄໍາຂວັນ: ນໍ້າໃຈວັນຊາດທີ 2 ທັນວາ ໝັ້ນຍືນ.
   - ບັນດາທຸງຊາດແຕ່ລະປະເທດໃນກຸ່ມອາຊຽນ: ທຸງປະເທດລາວ, ຫວຽດນາມ, ກໍາປູເຈຍ, ໄທ, ມຽນມ້າ, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ບຣູໄນ, ແລະ ສິງກະໂປ.
   - ການສະເຫຼີມສະຫຼອງວັນຊາດ: ວັນຊາດກົງກັບວັນທີ 2 ເດືອນທັນວາ (ເດືອນ12); ການສະເຫຼີມສະຫຼອງ: ໂຮມຊຸມນຸມຟັງປາຖະກະຖາ, ຊົມການວາງສະແດງຜົນງານການເຄື່ອນໄຫວຕ່າງໆ, ສະແດງສິລະປະວັນນະຄະດີ ແລະ ກິລາ.
2. ການປຽບທຽບຈໍານວນທີ່ໜ້ອຍກວ່າບໍ່ເກີນ 10.

### III. ສື່ການຮຽນ-ການສອນ

1. ທຸງຊາດລາວ, ຫວຽດນາມ, ກໍາປູເຈຍ, ໄທ, ມຽນມ້າ, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ບຣູໄນ, ແລະ ສິງກະໂປ; ທຸງທິວສີແດງ, ສີຟ້າ, ສີເຫຼືອງ, ສີຂາວ.
2. ຄໍາຂວັນວັນຊາດທີ 2 ທັນວາໝັ້ນຍືນ; ຮູບພາບດອກໄມ້ແຕ່ 1-10.

### IV. ກິດຈະກໍາການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບການສະເຫຼີມສະຫຼອງວັນຊາດ ແລະ ສີຂອງທຸງຊາດລາວ.
2. ໃຫ້ເດັກນ້ອຍສັງເກດທຸງຊາດແຕ່ລະປະເທດໃນກຸ່ມອາຊຽນ, ສົນທະນາ ແລະ ບອກກ່ຽວກັບບັນດາທຸງຊາດແຕ່ລະປະເທດໃນກຸ່ມອາຊຽນ.
3. ໃຫ້ເດັກນ້ອຍສັງເກດຮູບພາບດອກໄມ້, ປຽບທຽບຈໍານວນທີ່ໜ້ອຍກວ່າບໍ່ເກີນ 10.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບສີທຸງຊາດລາວ ແລະ ຄໍາຂວັນຂອງວັນຊາດ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມຮັກ ແລະ ຄວາມເຄົາລົບນັບຖືວັນຊາດຂອງລາວ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກການສະເຫຼີມສະຫຼອງວັນຊາດ, ບອກສີຂອງທຸງຊາດລາວ ແລະ ບອກບັນດາທຸງຊາດ ແຕ່ລະປະເທດໃນກຸ່ມອາຊຽນ.
2 ຄວາມຖືກຕ້ອງໃນການປຽບທຽບຈໍານວນທີ່ນ້ອຍກວ່າບໍ່ເກີນ 10.
3. ຄວາມເຄົາລົບນັບຖືວັນຊາດຂອງລາວ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ແຕ້ມ ແລະ ທາສີຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການແຕ້ມ ແລະ ທາສີຮູບພາບທຸງຊາດລາວຕາມແບບໄດ້ຖືກຕ້ອງ.
2. ແຕ້ມຮູບພາບທຸງຊາດລາວຕາມແບບ ແລະ ທາສີໄດ້ຄ້າຍຄື.
3. ແບ່ງປັນສໍສີໃຫ້ກັບໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການແຕ້ມ ແລະ ທາສີຮູບພາບທຸງຊາດລາວຕາມແບບ.

### III. ສື່ການຮຽນ-ການສອນ

1. ເຈ້ຍຂາວ, ສໍດຳ, ສໍສີ ແລະ ຢາງລຶບ.
2. ເຈ້ຍແບບຮູບພາບທຸງຊາດລາວທີ່ແຕ້ມແລ້ວ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍໃຫ້ເຮັດທ່າທາງສັ່ນຄໍ່ມື.
2. ໃຫ້ເດັກນ້ອຍສັງເກດເຈ້ຍຮູບພາບທຸງຊາດ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການແຕ້ມ ແລະ ທາສີ.
3. ນາຍຄູແນະນຳ, ສາທິດວິທີ, ຂັ້ນຕອນການແຕ້ມ ແລະ ທາສີຮູບພາບທຸງຊາດ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ, ເວົ້າຄືນຂັ້ນຕອນການແຕ້ມ ແລະ ທາສີຮູບພາບທຸງຊາດ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນ, ຄວາມສາມັກຄີ, ຄວາມຈົບງາມ ແລະ ການເກັບມ້ຽນອຸປະກອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການແຕ້ມ ແລະ ທາສີຮູບພາບທຸງຊາດຕາມແບບ.
2. ຄວາມຄ້າຍຄືໃນການແຕ້ມຮູບພາບທຸງຊາດຕາມແບບ ແລະ ການທາສີ.
3. ການແບ່ງປັນສໍສີໃຫ້ກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນແຂ່ງຂັນຮ່າຍນ້ຳໃສ່ແກ້ວຕາມສີຕ່າງໆ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນແຂ່ງຂັນຮ່າຍນ້ຳໃສ່ແກ້ວຕາມສີຕ່າງໆໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນແຂ່ງຂັນຮ່າຍນ້ຳໃສ່ແກ້ວຕາມສີຕ່າງໆ.
3. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນແຂ່ງຂັນຮ່າຍນ້ຳສີໃສ່ແກ້ວຕາມຕ່າງໆ.

### III. ສື່ການຮຽນ-ການສອນ

1. ແກ້ວ, ນ້ຳ 3 ສີ: ສີແດງ, ສີຟ້າ, ສີເຫຼືອງ, ຕັ່ງນ້ອຍ, ຄຸ, ຈອກຢາງ, ກອງ, ເຊືອກ ຫຼື ໄມ້ນ້ອຍສຳລັບຂີດເສັ້ນໄຊ ແລະ ເສັ້ນເລີ່ມ.
2. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຍ່າງຊ້າເປັນຕາມສຽງຕົບກອງ.
2. ນາຍຄູສະເໜີ ແບບຫຼິ້ນ ແລະ ສາທິດວິທີຫຼິ້ນແບບຫຼິ້ນແຂ່ງຂັນຮ່າຍນ້ຳໃສ່ແກ້ວຕາມສີຕ່າງໆ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນແຂ່ງຂັນຮ່າຍນ້ຳສີໃສ່ແກ້ວຕາມຕ່າງໆ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນແຂ່ງຂັນຮ່າຍນ້ຳສີຕ່າງໆ.
5. ສຶກສາອົບຮົມເດັກນ້ອຍ: ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ມີສະຕິລະວັງຕົວບໍ່ໃຫ້ລົ້ມໃນເວລາແລ່ນຕັກນ້ຳ, ລະວັງບໍ່ໃຫ້ຕຳກັນ, ອົດທົນລໍຖ້າເອົາຫຼິ້ນຕາມລຳດັບ; ຫຼິ້ນແລ້ວອະນາໄມ ມື, ຕີນໃຫ້ສະອາດ ແລະ ເກັບມ້ຽນເຄື່ອງຊ່ວຍກັນ.
6. ໃຫ້ເດັກນ້ອຍເຮັດທ່າທາງນົກບິນໄປຊ້າໆ, ຫຼັງຈາກນັ້ນ ປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນແຂ່ງຂັນຮ່າຍນ້ຳໃສ່ແກ້ວຕາມສີຕ່າງໆ.
3. ການຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັນຮູບພາບທຸງຊາດ, ທຸງທິວຕາມສີ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັນຮູບພາບທຸງຊາດ, ທຸງທິວຕາມສີໄດ້ຖືກຕ້ອງ.
3. ອົດທົນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັນຮູບພາບທຸງຊາດ, ທຸງທິວຕາມສີ: ສີເຫຼືອງ, ສີຂຽວ, ສີນ້ຳໝາກກ້ຽງ, ສີຟ້າ

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັນຮູບພາບທຸງຊາດ, ທຸງທິວຕາມສີ: ສີເຫຼືອງ, ສີຂຽວ, ສີນ້ຳໝາກກ້ຽງ, ສີຟ້າ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມແຜ່ນເກມລຽນລຳດັບຕົວເລກ 0-9: 0, 1, 2, 3, 4, 5, 6, 7, 8, 9.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບການສະເຫຼີມສະຫຼອງວັນຊາດ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນຈັບຄູ່ທີ່ຄືກັນຮູບພາບທຸງຊາດ, ທຸງທິວຕາມສີ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຄວາມອົດທົນໃນເວລາຫຼິ້ນເກມ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັນຮູບພາບທຸງຊາດ, ທຸງທິວຕາມສີ.
3. ຄວາມອົດທົນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມອ່ານ ແລະ ມຸມເກມການສຶກສາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ອ່ານຈຳນວນຮູບພາບ ແລະ ອ່ານຄຳສັບທີ່ມີວັນນະຍຸດ ່, ້ ໄດ້ຊັດເຈນ.
3. ຈັບຄູ່ທີ່ຄືກັນຮູບພາບທຸງຊາດ, ທຸງທິວຕາມສີ ແລະ ລຽນລຳດັບຕົວເລກ 0-9 ໄດ້ຖືກຕ້ອງ.
4. ມີມາລະຍາດໃນການອ່ານ ແລະ ຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມອ່ານ ແລະ ມຸມເກມການສຶກສາ.
2. ການສັງເກດ ແລະ ອ່ານຈຳນວນຮູບພາບດອກໄມ້ແຕ່ 1 ເຖິງ10, ອ່ານຄຳສັບທີ່ມີວັນນະຍຸດ ່, ້: ມື, ມື່, ມື້; ຈື, ຈື່, ຈື້; ດື, ດື່, ດື້; ສື, ສື່, ສື້, ຖື, ຖື່, ຖື້.
3. ການຈັບຄູ່ທີ່ຄືກັນຮູບພາບທຸງຊາດ, ທຸງທິວຕາມສີ: ສີເຫຼືອງ, ສີຂຽວ, ສີນ້ຳໝາກກ້ຽງ, ສີຟ້າ ແລະ ລຽນລຳດັບຕົວເລກ 0-9.

### III. ສື່ການຮຽນ-ການສອນ

1. ມຸມອ່ານ: ກະດານສຽບ ຫຼື ຕິດ, ຮູບພາບດອກໄມ້ຈຳນວນແຕ່ 1 ເຖິງ10; ບັດຄຳສັບ: ມື, ມື່, ມື້; ຈື, ຈື່, ຈື້; ດື, ດື່, ດື້; ສື, ສື່, ສື້, ຖື, ຖື່, ຖື້.
2. ມຸມເກມການສຶກສາ: ກະດານສຽບ ຫຼື ຕິດ, ແຜ່ນເກມຈັບຄູ່ທີ່ຄືກັນຮູບພາບທຸງຊາດ, ທຸງທິວຕາມສີ: ສີເຫຼືອງ, ສີຂຽວ, ສີນ້ຳໝາກກ້ຽງ, ສີຟ້າ ແລະ ແຜ່ນເກມລຽນລຳດັບຕົວເລກ 0-9.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບເຄື່ອງຫຼິ້ນຕາມມຸມ.
2. ນາຍຄູແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມອ່ານ ແລະ ມຸມເກມການສຶກສາ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມອ່ານ ແລະ ມຸມເກມການສຶກສາ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບມາລະຍາດໃນການອ່ານ ແລະ ຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຊັດເຈນໃນການອ່ານຈຳນວນຮູບພາບ ແລະ ອ່ານຄຳສັບທີ່ມີວັນນະຍຸດ ່, ້.
3. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັນຮູບພາບທຸງຊາດ, ທຸງທິວຕາມສີ ແລະ ການລຽນລຳດັບຕົວເລກ 0-9.
4. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມສຽງສັນຍານ ເຄາະ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມສຽງສັນຍານ ເຄາະໄດ້ຖືກຕ້ອງ.
2. ປອດໄພໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມສຽງສັນຍານ ເຄາະ:

- ເຄາະ 1 ບາດ ສະແດງທ່າທາງມອບຊໍ່ດອກໄມ້ໃຫ້ແມ່ຍິງ.
- ເຄາະ 2 ບາດ ສະແດງທ່າທາງເຄາະບານ.
- ເຄາະ 3 ບາດ ສະແດງທ່າທາງຈັບໄມຮ້ອງເພງ.

### III. ສື່ການຮຽນ-ການສອນ

1. ກະປ໋ອງ.
2. ທ່າຫັດກາຍະບໍລິຫານແຂນ ແລະ ຂາ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານແຂນ ແລະ ຂາ: ທ່າຍົກແຂນຂຶ້ນເທິງຫົວ, ພັບແຂນສອກເອົ້າປາຍນິ້ວມືຈຸບ່າ ແລະ ທ່າໂຢ່ງໂຢະຂາລົງ.
2. ໃຫ້ເດັກນ້ອຍແລ່ນຊິກແຊັກ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມສຽງສັນຍານ ເຄາະ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍຍືນເຮັດທ່າທາງຈັບດອກໄມ້ມາດົມ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມສຽງສັນຍານ ເຄາະ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມປອດໄພໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຕາມສຽງສັນຍານ ເຄາະ.
2. ຄວາມປອດໄພໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ວັນແມ່ຍິງ ແລະ ວັນຄູ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກວັນແມ່ຍິງ, ວັນຄູ ແລະ ການສະເຫຼີມສະຫຼອງໄດ້ຖືກຕ້ອງ.
2. ປະຕິບັດຕົວຈິງໃນການອວຍພອນແມ່ຍິງ ແລະ ນາຍຄູ.
3. ອ່ານຕົວເລກສັບປ່ຽນບ່ອນແຕ່ 0-5 ໄດ້ຖືກຕ້ອງ.
4. ປະຕິບັດຕົນຕໍ່ແມ່ ແລະ ນາຍຄູ.

### II. ເນື້ອໃນຕົ້ນຕໍ

1. ວັນແມ່ຍິງ, ວັນຄູ ແລະ ການສະເຫຼີມສະຫຼອງ.
- ວັນແມ່ຍິງສາກົນ: ວັນແມ່ຍິງສາກົນກົງກັບວັນທີ 8 ເດືອນມີນາ (ເດືອນ 3); ການສະເຫຼີມສະຫຼອງ: ຟັງປາຖະກະຖາ; ມອບຊໍ່ດອກໄມ້, ອວຍພອນແມ່ຍິງ; ສະແດງສິລະປະ ແລະ ແຂ່ງຂັນກິລາ.
- ວັນຄູ: ວັນຄູກົງກັບວັນທີ 7 ເດືອນຕຸລາ (ເດືອນ10); ການສະເຫຼີມສະຫຼອງ: ຟັງ ປາຖະກະຖາ, ມອບຊໍ່ດອກໄມ້, ອວຍພອນຄູ, ສະແດງສິລະປະ ແລະ ກິລາ.

2. ການອ່ານຕົວເລກສັບປ່ຽນບ່ອນແຕ່ 0-5.

### III. ສື່ການຮຽນ-ການສອນ

1. ຊໍ່ດອກໄມ້.
2. ບັດຕົວເລກ 0-5.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບການປະຕິບັດຕົນຕໍ່ແມ່ ແລະ ນາຍຄູ.
2. ໃຫ້ເດັກນ້ອຍບອກວັນແມ່ຍິງ, ວັນຄູ ແລະ ການສະເຫຼີມສະຫຼອງ.
3. ໃຫ້ເດັກນ້ອຍປະຕິບັດຕົວຈິງກ່ຽວກັບການມອບຊໍ່ດອກໄມ້ອວຍພອນແມ່ຍິງ ແລະ ນາຍຄູ.
4. ໃຫ້ເດັກນ້ອຍອ່ານຕົວເລກສັບປ່ຽນບ່ອນແຕ່ 0-5.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບວັນແມ່ຍິງ, ວັນຄູ ແລະ ການສະເຫຼີມສະຫຼອງ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການປະຕິບັດຕົນຕໍ່ແມ່ຍິງ ແລະ ນາຍຄູ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1 ຄວາມຖືກຕ້ອງໃນການບອກວັນແມ່ຍິງ, ວັນຄູ ແລະ ການສະເຫຼີມສະຫຼອງ.

2. ການປະຕິບັດຕົວຈິງໃນການອວຍພອນ ແມ່ຍິງ ແລະ ນາຍຄູ.
3. ຄວາມຖືກຕ້ອງໃນການອ່ານຕົວເລກສັບປ່ຽນບ່ອນ.
4. ການປະຕິບັດຕົນຕໍ່ແມ່ ແລະ ນາຍຄູ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຮ້ອຍ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການຮ້ອຍດອກໄມ້ເປັນພວງມະໄລໄດ້ຖືກຕ້ອງ.
2. ຮ້ອຍດອກໄມ້ເປັນພວງມະໄລໄດ້ຈົບງາມ.
3. ມີຄວາມອົດທົນໃນການຮ້ອຍດອກໄມ້ເປັນພວງມະໄລ.

### II. ເນື້ອໃນຕົ້ນຕໍ

ການຮ້ອຍດອກໄມ້ເປັນພວງມະໄລ.

### III. ສື່ການຮຽນ-ການສອນ

1. ດອກໄມ້, ເຊືອກຟາງ ຫຼື ເສັ້ນດ້າຍ ແລະ ໄມ້ກ້ານພ້າວ.
2. ດອກໄມ້ທີ່ຮ້ອຍເປັນພວງມະໄລ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເອົາມືສານກັບກຳມືເຂົ້າແລ້ວພູບຄໍ່ມືຊ້າຍ-ຂວາ.
2. ໃຫ້ເດັກນ້ອຍສັງເກດດອກໄມ້ທີ່ຮ້ອຍແລ້ວ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການຮ້ອຍດອກໄມ້.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການຮ້ອຍດອກໄມ້ເປັນພວງມະໄລ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການຮ້ອຍດອກໄມ້ເປັນພວງມະໄລ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນ, ຄວາມສາມັກຄີ, ຄວາມຈົບງາມ ແລະ ການເກັບມ້ຽນອຸປະກອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການຮ້ອຍດອກໄມ້ເປັນພວງມະໄລ.
2. ຄວາມຈົບງາມໃນການຮ້ອຍດອກໄມ້ເປັນພວງມະໄລ.
3. ຄວາມອົດທົນໃນການຮ້ອຍດອກໄມ້ເປັນພວງມະໄລ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້ : ແບບຫຼິ້ນມັດຕາຈັບປຸມເປົ້າ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນມັດຕາຈັບປຸມເປົ້າໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນມັດຕາຈັບປູມເປົ້າໄດ້ຖືກຕ້ອງ.
3. ເບີກບານມ່ວນຊື່ນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນມັດຕາຈັບປຸມເປົ້າ.

### III. ສື່ການຮຽນ-ການສອນ

1. ບົດເພງ ສຽງດົນຕີ, ໝາກປຸມເປົ້າ, ໄມ້ສຳລັບເຮັດຫຼັກສູງປະມານ 1 ແມັດ, ຢາງບ້ວງ, ເຊືອກຟາງ ແລະ ກອງ.
2. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍສັ່ນມື, ຕົບມືໄປຂ້າງຊ້າຍ-ຂ້າງຂວາ ແລະ ຍ່າງຢ່ຳເທົ້າ.
2. ນາຍຄູສະເໜີ ແບບຫຼິ້ນ ແລະ ສາທິດວິທີຫຼິ້ນແບບຫຼິ້ນມັດຕາຈັບປຸມເປົ້າ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນມັດຕາຈັບປຸມເປົ້າ, ນາຍຄູຕິດຕາມ ແລະ ຊ່ວຍ ແນະນຳ.
4. ໃຫ້ເດັກນ້ອຍເວົ້າຄືນ ກ່ຽວກັບການຫຼິ້ນແບບຫຼິ້ນມັດຕາຈັບປຸມເປົ້າ.
5. ສຶກສາອົບຮົມເດັກນ້ອຍ ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ເຄື່ອນໄຫວຮ່າງກາຍວ່ອງໄວ, ເວລາຫຼິ້ນບໍ່ຕຳກັນກັບໝູ່, ຫຼິ້ນແລ້ວອະນາໄມຕີນ ແລະ ມືໃຫ້ສະອາດ.
6. ໃຫ້ເດັກນ້ອຍເຮັດທ່າທາງດົມດອກໄມ້, ຫຼັງຈາກນັ້ນ ປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນມັດຕາຈັບປຸມເປົ້າ.
3. ຄວາມເບີກບານມ່ວນຊື່ນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັນຮູບພາບການສະເຫຼີມສະຫຼອງວັນແມ່ຍິງສາກົນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ກມ ແລະ ຮູບພາບທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັນຮູບພາບການສະເຫຼີມສະຫຼອງວັນແມ່ຍິງສາກົນໄດ້ຖືກຕ້ອງ.
3. ອົດທົນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັນຮູບພາບການສະເຫຼີມສະຫຼອງວັນແມ່ຍິງສາກົນ: ເດັກນ້ອຍມອບຊໍ່ດອກໄມ້, ສະແດງສິລະປະ ແລະ ແຂ່ງຂັນກິລາ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັນຮູບພາບການສະເຫຼີມສະຫຼອງວັນແມ່ຍິງສາກົນ: ເດັກນ້ອຍມອບຊໍ່ດອກໄມ້, ສະແດງສິລະປະແລະ ແຂ່ງຂັນກິລາ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັນຮູບພາບທຸງຊາດ, ທຸງທິວຕາມສີ: ສີເຫຼືອງ, ສີຂຽວ, ສີນ້ຳໝາກກ້ຽງ, ສີຟ້າ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບການສະເຫຼີມສະຫຼອງວັນແມ່ຍິງສາກົນ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຈັບຄູ່ທີ່ຄືກັນຮູບພາບການສະເຫຼີມສະຫຼອງວັນແມ່ຍິງສາກົນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຄວາມອົດທົນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັນຮູບພາບການສະເຫຼີມສະຫຼອງວັນແມ່ຍິງສາກົນ.
3. ຄວາມອົດທົນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມສິລະປະສ້າງສັນ ແລະ ມຸມອ່ານ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຮ້ອຍດອກໄມ້, ແຕ້ມ ແລະ ທາສີຮູບພາບໄດ້ຖືກຕ້ອງ.
3. ອ່ານຕົວເລກ ແລະ ອ່ານຈຳນວນຕາມຮູບພາບໄດ້ຊັດເຈນ.
4. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມອ່ານ.
2. ການຮ້ອຍດອກໄມ້ເປັນພວງມະໄລ, ແຕ້ມ ແລະ ທາສີຮູບພາບທຸງຊາດລາວ.
3. ການສັງເກດ ແລະ ອ່ານຕົວເລກສັບປ່ຽນບ່ອນແຕ່ 0 ເຖິງ 5 ແລະ ອ່ານຈຳນວນຕາມຮູບ ພາບດອກໄມ້ ແຕ່ 1-10.

### III. ສື່ການຮຽນ-ການສອນ

1. ມຸມສິລະປະສ້າງສັນ: ດອກໄມ້ຈິງ ຫຼື ຈຳລອງ, ເຊືອກສຳລັບຮ້ອຍ, ເຈ້ຍຂາວ, ສໍດຳ, ສໍສີໄມ້ ຫຼື ສີທຽນ, ເຈ້ຍແບບ ຮູບພາບທຸງຊາດລາວ.
2. ມຸມອ່ານ: ກະດານສຽບ ຫຼື ຕິດ, ບັດຕົວເລກແຕ່ 0 ເຖິງ 5, ຮູບພາບດອກໄມ້ຈຳນວນແຕ່ 1-10.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບເຄື່ອງຫຼິ້ນຕາມມຸມ.
2. ນາຍຄູແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມອ່ານ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມອ່ານ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການແບ່ງປັນເຄື່ອງຫຼິ້ນໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຖືກຕ້ອງໃນການຮ້ອຍດອກໄມ້, ແຕ້ມ ແລະ ທາສີຮູບພາບ.
3. ຄວາມຊັດເຈນໃນການອ່ານຕົວເລກ ແລະ ອ່ານຈຳນວນຮູບພາບ.
4. ການແບ່ງປັນເຄື່ອງຫຼິ້ນໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມສຽງສັນຍານຕົບມື

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມສຽງສັນຍານຕົບມືໄດ້ຖືກຕ້ອງ.
3. ອົດທົນໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມສຽງສັນຍານຕົບມື:

- ຕົບມື 1 ບາດສະແດງທ່າທາງຢ່າງແບບທະຫານ.
- ຕົບມື 2 ບາດສະແດງທ່າທາງຢ່າງຕ໋ອກຕະປູ.

### III. ສື່ການຮຽນ-ການສອນ

ທ່າຫັດກາຍະບໍລິຫານຂາ ແລະ ແອວ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານຂາ ແລະ ແອວ: ທ່າຢຽດຂາໄປທາງໜ້າ ແລະ ທາງຫຼັງ.
2. ໃຫ້ເດັກນ້ອຍເຕັ້ນຈ່າງຂາ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມສຽງສັນຍານຕົບມື.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງຢຽດຂາໄປທາງໜ້າ, ຈ່າງຂາອອກ, ກົ້ມລົງເອົາມືທັງສອງຈັບປາຍຕີນ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມສຽງສັນຍານຕົບມື.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຕາມສຽງສັນຍານຕົບມື.
2. ຄວາມອົດທົນໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ວັນກຳມະກອນ ແລະ ວັນກອງທັບ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກວັນກຳມະກອນ, ວັນກອງທັບ ແລະ ການສະເຫຼີມສະຫຼອງໄດ້ຖືກຕ້ອງ.
2. ປະຕິບັດຕົວຈິງໃນການອວຍພອນກຳມະກອນ ແລະ ທະຫານ.
3. ເວົ້າອອກສຽງຄຳທີ່ຄ້າຍຄືກັນແຕ່ມີຄວາມໝາຍຕ່າງກັນຕາມຮູບພາບໄດ້ຊັດເຈນ.
4. ບອກລຳດັບທີ່ຕັ້ງຂອງເຮືອນຕາມຮູບພາບໄດ້ຖືກຕ້ອງ.
5. ການປະຕິບັດຕົນຕໍ່ກຳມະກອນ ແລະ ທະຫານ.

### II. ເນື້ອໃນຕົ້ນຕໍ

1. ວັນກຳມະກອນ, ວັນສ້າງຕັ້ງກອງທັບ ແລະ ການສະເຫຼີມສະຫຼອງ.
 - ວັນກຳມະກອນສາກົນ: ວັນກຳມະກອນສາກົນກົງກັບວັນທີ1 ເດືອນພຶດສະພາ (ເດືອນ 5); ການສະເຫຼີມສະຫຼອງ: ມອບຊໍ່ດອກໄມ້, ອວຍພອນໃຫ້ກຳມະກອນ.
 - ວັນສ້າງຕັ້ງກອງທັບ: ວັນກອງທັບກົງກັບວັນທີ 20 ເດືອນມັງກອນ (ເດືອນ1); ການສະເຫຼີມສະຫຼອງ: ຟັງການເລົ່າມູນເຊື້ອ; ອວຍພອນ, ລົງຢ້ຽມຢາມທະຫານ, ມອບຂອງຂວັນ, ສະແດງສິລະປະ ແລະ ແຂ່ງຂັນກິລາ.
2. ການເວົ້າອອກສຽງຄຳທີ່ຄ້າຍຄືກັນແຕ່ມີຄວາມໝາຍຕ່າງກັນຕາມຮູບພາບ: ປ່າ, ປ້າ; ຊໍ, ສໍ.
3. ການບອກລຳດັບທີ່ຕັ້ງຂອງເຮືອນຕາມຮູບພາບ.

### III. ສື່ການຮຽນ-ການສອນ.

1. ຊໍ່ດອກໄມ້.
2. ຮູບພາບ: ປ່າ, ປ້າ; ຊໍ, ສໍ, ລຳດັບທີ່ຕັ້ງຂອງເຮືອນ.

### IV. ກິດຈະກຳການຮຽນ-ການສອນ.

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບວັນກຳມະກອນ ແລະ ວັນກອງທັບ ແລະ ການສະເຫຼີມສະຫຼອງ.
2. ໃຫ້ເດັກນ້ອຍປະຕິບັດຕົວຈິງກ່ຽວກັບການມອບຊໍ່ດອກໄມ້ອວຍພອນກຳມະກອນ ແລະ ທະຫານ.
3. ໃຫ້ເດັກນ້ອຍເວົ້າອອກສຽງຄຳທີ່ຄ້າຍຄືກັນແຕ່ມີຄວາມໝາຍຕ່າງກັນຕາມຮູບພາບ.
4. ໃຫ້ເດັກນ້ອຍສັງເກດຮູບພາບລຳດັບທີ່ຕັ້ງຂອງເຮືອນ ແລ້ວບອກລຳດັບທີທີ່ຕັ້ງຂອງເຮືອນຕາມຮູບພາບ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບວັນກຳມະກອນ, ວັນກອງທັບ ແລະ ການສະເຫຼີມສະຫຼອງ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີຮັກແພງກັນ, ການປະຕິບັດຕົນຕໍ່ກຳມະກອນ ແລະ ທະຫານ.

### V. ການວັດ ແລະ ປະເມີນຜົນ.

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກວັນກຳມະກອນ, ວັນກອງທັບ ແລະ ການສະເຫຼີມສະຫຼອງ.
2. ການປະຕິບັດຕົວຈິງໃນການອວຍພອນກຳມະກອນ ແລະ ທະຫານ.
3. ຄວາມຊັດເຈນໃນການເວົ້າອອກສຽງຄຳທີ່ຄ້າຍຄືກັນແຕ່ມີຄວາມໝາຍຕ່າງກັນຕາມຮູບພາບ.
4. ຄວາມຖືກຕ້ອງໃນການບອກລຳດັບທີ່ຕັ້ງຂອງເຮືອນຕາມຮູບພາບ.
5. ການປະຕິບັດຕົນຕໍ່ກຳມະກອນ ແລະ ທະຫານ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຕິດເຈ້ຍມຸ່ນໃສ່ຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການຕິດເຈ້ຍມຸ່ນໃສ່ຮູບພາບຄ້ອນຕີໄດ້ຖືກຕ້ອງ.
2. ຕິດເຈ້ຍມຸ່ນໃສ່ຮູບພາບຄ້ອນຕີໄດ້ສະອາດຈົບງາມ.
3. ມີຄວາມອົດທົນໃນການຕິເຈ້ຍມຸ່ນໃສ່ຮູບຄ້ອນຕີ.

### II. ເນື້ອໃນຕົ້ນຕໍ

ການຕິດເຈ້ຍມຸ່ນໃສ່ຮູບພາບຄ້ອນຕີ.

### III. ສື່ການຮຽນ-ການສອນ

1. ຮູບພາບຄ້ອນຕີ.
2. ຮູບພາບຄ້ອນຕີທີ່ຕິດເຈ້ຍມຸ່ນໃສ່ແລ້ວ.
3. ກາວ, ເຈ້ຍມຸ່ນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍໃຫ້ດີດນິ້ວມືເທື່ອລະນິ້ວ, ກຳມື ແລະ ແບມື.
2. ໃຫ້ເດັກນ້ອຍສັງເກດຮູບພາບຄ້ອນຕີ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການຕິດເຈ້ຍມຸ່ນໃສ່ຮູບພາບ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການຕິດເຈ້ຍມຸ່ນໃສ່ຮູບພາບຄ້ອນຕີ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການຕິດເຈ້ຍມຸ່ນໃສ່ຮູບພາບຄ້ອນຕີ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນ, ຄວາມສາມັກຄີ, ຄວາມຈົບງາມ ແລະ ການເກັບມ້ຽນອຸປະກອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການຕິດເຈ້ຍມຸ່ນໃສ່ຮູບພາບຄ້ອນຕີ.
2. ຄວາມຈົບງາມໃນການຕິກເຈ້ຍມຸ່ນໃສ່ຮູບພາບຄ້ອນຕີ.
3. ຄວາມອົດທົນໃນການຕິດເຈ້ຍມຸ່ນໃສ່ຮູບພາບຄ້ອນຕີ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນແຂ່ງຂັນຫາມບານ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນແຂ່ງຂັນຫາມບານໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນແຂ່ງຂັນຫາມບານໄດ້ຖືກຕ້ອງ.
3. ອົດທົນໃນການຫຼິ້ນແບບຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນແຂ່ງຂັນຫາມບານ.

### III. ສື່ການຮຽນ-ການສອນ

1. ໝາກບານ, ເຊືອກ, ກອງ, ໄມ້ນ້ອຍສຳລັບຂີດເສັ້ນໄຊ ແລະ ເສັ້ນເລີ່ມ.
2. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍໝູນເຫົວຂໍ່າ, ເບັ່ວແອວ ແລະ ແກວ່ງແຂນໄປມາ.
2. ນາຍຄູສະເໜີ ແລະ ສາທິດວິທີຫຼິ້ນແບບຫຼິ້ນແຂ່ງຂັນຫາມບານ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນແຂ່ງຂັນຫາມບານ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນແຂ່ງຂັນຫາມບານ.
5. ສຶກສາອົບຮົມເດັກນ້ອຍຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ເຄື່ອນໄຫວຮ່າງກາຍວ່ອງໄວເວລາຫຼິ້ນບໍ່ຍູ້ໝູ່ລົ້ມ, ອົດທົນລໍຖ້າເຂົ້າຫຼິ້ນຕາມລຳດັບ, ຫຼິ້ນແລ້ວອະນາໄມຕີນ ແລະ ມືໃຫ້ສະອາດ.
6. ໃຫ້ເດັກນ້ອຍຍົກມືຂຶ້ນສູງເຮັດທ່າທາງລົມພັດໃບໄມ້, ຫຼັງຈາກນັ້ນ ປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນແຂ່ງຂັນຫາມບານ.
3. ຄວາມອົດທົນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັບຮູບພາບການສະເຫຼີມສະຫຼອງວັນສ້າງກອງທັບ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັບຮູບພາບການສະເຫຼີມສະຫຼອງວັນສ້າງກອງທັບໄດ້ຖືກຕ້ອງ.
3. ເກັບມ້ຽນແຜ່ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັບຮູບພາບການສະເຫຼີມສະຫຼອງວັນສ້າງກອງທັບ: ມອບຂອງຂວັນໃຫ້ທະຫານ, ສະແດງສິລະປະ, ແຂ່ງກິລາ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັບຮູບພາບການສະເຫຼີມສະຫຼອງວັນສ້າງກອງທັບ: ມອບຂອງຂວັນໃຫ້ທະຫານ, ສະແດງສິລະປະ, ແຂ່ງກິລາ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັບຮູບພາບການສະເຫຼີມສະຫຼອງວັນແມ່ຍິງສາກົນ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບສະຫຼະ ແລະ ວັນນະຍຸດ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຈັບຄູ່ທີ່ຄືກັບຮູບພາບການສະເຫຼີມສະຫຼອງວັນສ້າງກອງທັບ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການເກັບມ້ຽນແຜ່ນເກມ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັບຮູບພາບການສະເຫຼີມສະຫຼອງວັນສ້າງກອງທັບ.
3. ການເກັບມ້ຽນແຜ່ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມອ່ານ ແລະ ມຸມເກມການສຶກສາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ອ່ານຄຳສັບທີ່ມີຕົວສະກົດ ແລະ ອ່ານຕົວເລກໄດ້ຊັດເຈນ.
3. ຈັບຄູ່ທີ່ຄືກັນຮູບພາບການສະເຫຼີມສະຫຼອງວັນສ້າງຕັ້ງກອງທັບ ແລະ ຈັບຄູ່ທີ່ຄືກັນຮູບພາບການສະເຫຼີມສະຫຼອງວັນແມ່ຍິງສາກົນໄດ້ຖືກຕ້ອງ.
4. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມອ່ານ.
2. ການສັງເກດ ແລະ ອ່ານຄຳສັບທີ່ມີຕົວສະກົດ ກ, ນ, ງ, ດ, ບ, ມ: ມົກ, ດົງ, ຖົມ, ຈົດ, ສົບ, ມົມ ແລະ ອ່ານຕົວເລກສັບປ່ຽນບ່ອນແຕ່ 0 ເຖິງ 5.
3. ການຈັບຄູ່ທີ່ຄືກັນຮູບພາບການສະເຫຼີມສະຫຼອງວັນສ້າງຕັ້ງກອງທັບ: ມອບຂອງຂວັນໃຫ້ທະຫານ, ສະແດງສິລະປະ, ແຂ່ງກິລາ ແລະ ການຈັບຄູ່ທີ່ຄືກັນຮູບພາບການສະເຫຼີມສະຫຼອງວັນແມ່ຍິງສາກົນ ເດັກນ້ອຍມອບຊໍ່ດອກໄມ້, ສະແດງສິລະປະ ແລະ ແຂ່ງຂັນກິລາ.

### III. ສື່ການຮຽນ-ການສອນ

1. ມຸມອ່ານ: ກະດານສຽບ ຫຼື ຕິດ, ບັດຄຳສັບ: ມົກ, ດົງ, ຖົມ, ຈົດ, ສົບ, ມົມ ແລະ ບັດຕົວເລກແຕ່ 0 ເຖິງ 5.
2. ມຸມເກມການສຶກສາ: ກະດານສຽບ ຫຼື ຕິດ, ແຜ່ນເກມຈັບຄູ່ທີ່ຄືກັນຮູບພາບການສະເຫຼີມສະຫຼອງວັນສ້າງຕັ້ງກອງທັບ: ມອບຂອງຂວັນໃຫ້ທະຫານ, ສະແດງສິລະປະ, ແຂ່ງກິລາ ແລະ ແຜ່ນເກມຈັບຄູ່ທີ່ຄືກັນຮູບພາບການສະເຫຼີມສະຫຼອງວັນແມ່ຍິງສາກົນເດັກນ້ອຍມອບຊໍ່ດອກໄມ້, ສະແດງສິລະປະ ແລະ ແຂ່ງຂັນກິລາ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເຄື່ອງຫຼິ້ນຕາມມຸມ.
2. ນາຍຄູແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມອ່ານ ແລະ ມຸມເກມການສຶກສາ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມອ່ານ ແລະ ມຸມເກມການສຶກສາ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຊັດເຈນໃນການອ່ານຄຳສັບທີ່ມີຕົວສະກົດ ແລະ ອ່ານຕົວເລກ.
3. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັນຮູບພາບການສະເຫຼີມສະຫຼອງວັນສ້າງຕັ້ງກອງທັບ ແລະ ການຈັບຄູ່ທີ່ຄືກັນ ຮູບພາບການສະເຫຼີມສະຫຼອງວັນແມ່ຍິງສາກົນ.
4. ການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມສຽງສັນຍານສັ່ນກະແຊັກ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມສຽງສັນຍານສັ່ນກະແຊັກໄດ້ຖືກຕ້ອງ.
2. ເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມສຽງສັນຍານສັ່ນກະແຊັກ:

- ສັ່ນກະແຊັກ 1 ບາດ ສະແດງທ່າທາງມອບຂອງອັ້ວນ ແລະ ຮັບຂອງອັ້ວນ.
- ສັ່ນກະແຊັກ 2 ບາດ ສະແດງທ່າທາງຕົບບານ.

### III. ສື່ການຮຽນ-ການສອນ

ທ່າຫັດກາຍະບໍລິຫານແອວ ແລະ ຕີນ (ເບິ່ງປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານແອວ ແລະ ຕີນ: ທ່າເບັດແອວໄປເບື້ອງຊ້າຍ-ຂວາ ແລະ ທ່າເຍ່ງເຍ້ຕີນຂຶ້ນ-ລົງ.
2. ໃຫ້ເດັກນ້ອຍຍ່າງໂຍ່ງໂຍະເປັນ 2 ແຖວ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມສຽງສັນຍານສັ່ນກະແຊັກ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງອັດສະໝາດຫຼັບຕາສະມາທິ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມສຽງສັນຍານສັ່ນກະແຊັກ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຕາມສຽງສັນຍານສັ່ນກະແຊັກ.
2. ການເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

# ກິດຈະກຳວົງມົນ

## ຫົວຂໍ້: ວັນເດັກນ້ອຍສາກົນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກວັນເດັກນ້ອຍສາກົນ ແລະ ການສະເຫຼີມສະຫຼອງໄດ້ຖືກຕ້ອງ.
2. ອ່ານຕົວເລກອາຣັບຈາກໃບເງິນກີບໄດ້ຖືກຕ້ອງ.
3. ອະນຸລັກຮັກສາເງິນກີບ.

### II. ເນື້ອໃນຕົ້ນຕໍ

1. ວັນເດັກນ້ອຍສາກົນ: ວັນເດັກນ້ອຍສາກົນກົງກັບວັນທີ 1 ເດືອນມິຖຸນາ (ເດືອນ 6); ການສະເຫຼີມສະຫຼອງດ້ວຍການສະແດງສິລະປະວັນນະຄະດີ, ແຂ່ງຂັນກິລາ, ມອບຂອງຂວັນໃຫ້ເດັກ, ກວດສຸຂະພາບ ແລະ ພາເດັກໄປທັດສະນະສຶກສາສະຖານທີ່ຕ່າງໆ.
2. ການອ່ານຕົວເລກອາຣັບຈາກເງິນກີບ: ໃບເງິນກີບໃບ 500 ກີບ ແລະ ໃບ 1000 ກີບ.

### III. ສື່ການຮຽນ-ການສອນ

1. ເງິນກີບໃບ 50 ກີບ, ໃບ 1000 ກີບ.
2. ເຈ້ຍຂາວ, ສໍດຳ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບວັນເດັກນ້ອຍສາກົນ ແລະ ການສະເຫຼີມສະຫຼອງ.
2. ໃຫ້ເດັກນ້ອຍສັງເກດຕົວເລກໃນໃບເງິນແລ້ວອ່ານຕົວເລກອາຣັບຈາກເງິນກີບໃບ 500 ກີບ ແລະ ໃບ 1000 ກີບ.
3. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບວັນເດັກນ້ອຍສາກົນ ແລະ ການສະເຫຼີມສະຫຼອງ.
4. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີຮັກແພງກັນ ແລະ ການອະນຸລັກຮັກສາເງິນກີບຂອງລາວ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກວັນເດັກນ້ອຍສາກົນ ແລະ ການສະເຫຼີມສະຫຼອງ.
2. ຄວາມຖືກຕ້ອງໃນການອ່ານຕົວເລກອາຣັບຈາກໃບເງິນກີບ.
3. ການອະນຸລັກຮັກສາເງິນກີບ

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຂີດຂຽນຕົວເລກ 13 ຕາມຮອຍຈ້ຳ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການຂີດຂຽນຕົວເລກ 13 ຕາມຮອຍຈ້ຳໄດ້ຖືກຕ້ອງ.
2. ຂີດຂຽນຕົວເລກ 13 ຕາມຮອຍຈ້ຳໄດ້ສະອາດຈົບງາມ.
3. ມີຄວາມອົດທົນໃນການຂີດຂຽນຕົວເລກ 13 ຕາມຮອຍຈ້ຳ.

### II. ເນື້ອໃນຕົ້ນຕໍ

ການຂີດຂຽນຕົວເລກ 13 ຕາມຮອຍຈ້ຳ.

### III. ສື່ການຮຽນ-ການສອນ

1. ສໍດຳ, ຢາງລຶບ.
2. ປຶ້ມບົດເຝິກຫັດລະນິດສາດເຫຼັ້ມ 1 (ໜ້າ 11) ຫຼື ເຈ້ຍຕົວເລກ 13.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເອົານິ້ວມືສານກັນແລ້ວແອນຫຼັງມືເຂົ້າຫາກັນ.
2. ໃຫ້ເດັກນ້ອຍສັງເກດຮູບພາບປູມເປົ້າທີ່ຕິດເຈ້ຍມຸ່ນໃສ່ແລ້ວ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການຂີດຂຽນຕົວເລກ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການຂີດຂຽນຕົວເລກ 13 ຕາມຮອຍຈ້ຳ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການຂີດຂຽນຕົວເລກ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນ, ຄວາມສາມັກຄີ, ຄວາມຈົບງາມ ແລະ ການເກັບມ້ຽນອຸປະກອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການຂີດຂຽນຕົວເລກ 13 ຕາມຮອຍຈ້ຳ.
2. ຄວາມຈົບງາມໃນການຂີດຂຽນຕົວເລກ 13 ຕາມຮອຍຈ້ຳ.
3. ຄວາມອົດທົນໃນການຂີດຂຽນຕົວເລກ 13 ຕາມຮອຍຈ້ຳ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ຫຼິ້ນນ້ຳ-ຫຼິ້ນຊາຍ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນນ້ຳ-ຫຼິ້ນຊາຍ: ຖອກນ້ຳໃສ່ພາຊະນະຕ່າງໆ, ກອງຊາຍເປັນຮູບຕ່າງໆຕາມໃຈໄດ້ຖືກຕ້ອງ.
2. ເຝິກກ້າມຊີ້ນມືໃຫ້ແຂງແຮງໃນເວລາຖອກນ້ຳ ແລະ ກອງຊາຍ.
3. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນນ້ຳ-ຫຼິ້ນຊາຍ: ຖອກນ້ຳໃສ່ພາຊະນະຕ່າງໆ, ກອງຊາຍເປັນຮູບຕ່າງໆຕາມໃຈ.

### III. ສື່ການຮຽນ-ການສອນ

1. ຄຸນ້ຳ, ໂອ, ຊາມ, ກະຕຸກຢາງ, ຈອກ, ກະປ໋ອງ, ອ່າງດິນຊາຍ ຫຼື ຄຸດິນຊາຍ, ຊ້ວານນ້ອຍ, ພາຖາດ ແລະ ປູນຂາວ.
2. ວິທີຫຼິ້ນ (ເບິ່ງປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເຕັ້ນຢູ່ກັບທີ່ ແລະ ແລ່ນຊ້າຕາມສຽງຕົບມື.
2. ນາຍຄູສະເໜີແບບຫຼິ້ນ ແລະ ສາທິດວິທີຫຼິ້ນນ້ຳ-ຫຼິ້ນຊາຍ: ຖອກນ້ຳໃສ່ພາຊະນະຕ່າງໆ, ກອງຊາຍເປັນຮູບຕ່າງໆຕາມໃຈ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນນ້ຳ-ຫຼິ້ນຊາຍ: ຖອກນ້ຳໃສ່ພາຊະນະຕ່າງໆ, ກອງຊາຍເປັນຮູບຕ່າງໆຕາມໃຈ, ຄູຕິດ ຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນນ້ຳ-ຫຼິ້ນຊາຍ ຖອກນ້ຳໃສ່ພາຊະນະຕ່າງໆ, ກອງຊາຍເປັນຮູບຕ່າງໆຕາມໃຈ.
5. ສຶກສາອົບຮົມເດັກນ້ອຍຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ລະມັດລະວັງບໍ່ໃຫ້ດິນເຂົ້າຕາ, ຫຼິ້ນແລ້ວອະນາໄມມື, ຕີນໃຫ້ສະອາດ ແລະ ເກັບມ້ຽນອຸປະກອນ.
6. ໃຫ້ເດັກນ້ອຍຄ້ຳແອວຍືດຕົວຂຶ້ນ, ລົງ, ຫຼັງຈາກນັ້ນປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມແຂງແຮງຂອງກ້າມຊີ້ນມືໃນເວລາຫຼິ້ນ.
3. ການຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັນຮູບພາບການການສະເຫຼີມສະຫຼອງບຸນວັນເດັກນ້ອຍ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັນຮູບພາບການການສະເຫຼີມສະຫຼອງບຸນວັນເດັກນ້ອຍໄດ້ຖືກຕ້ອງ.
3. ເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັນຮູບພາບການການສະເຫຼີມສະຫຼອງບຸນວັນເດັກນ້ອຍ: ເດັກນ້ອຍຮ້ອງເພງ, ຟ້ອນ. ເຕະບານ, ຮັບຂອງຂວັນ ແລະ ກວດສຸຂະພາບ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັນຮູບພາບການການສະເຫຼີມສະຫຼອງບຸນວັນເດັກນ້ອຍ: ເດັກນ້ອຍຮ້ອງເພງ, ຟ້ອນ. ເຕະບານ, ຮັບຂອງຂວັນ ແລະ ກວດສຸຂະພາບ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັນຮູບພາບການສະເຫຼີມສະຫຼອງວັນສ້າງກອງທັບ,

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບການປະຕິບັດກິດຈະກຳຂອງເດັກນ້ອຍ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຈັບຄູ່ທີ່ຄືກັນຮູບພາບການການສະເຫຼີມສະຫຼອງບຸນວັນເດັກນ້ອຍ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການເວົ້າຄຳທີ່ສຸພາບ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັນຮູບພາບການການສະເຫຼີມສະຫຼອງບຸນວັນເດັກນ້ອຍ.
3. ການເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຫຼິ້ນບົດບາດສົມມຸດເປັນພໍ່ຄ້າ, ແມ່ຄ້າ, ລູກຄ້າ ແລະ ເປັນນັກສິລະປະຢ່າງມ່ວນຊື່ນ.
3. ຕັດ, ຕິດເຈ້ຍ ແລະ ຂີດຂຽນຕົວເລກ 13 ຕາມຮອຍຈ້ຳໄດ້ຖືກຕ້ອງ.
4. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ.
2. ຫຼິ້ນບົດບາດສົມມຸດເປັນພໍ່ຄ້າ, ແມ່ຄ້າ ແລະ ເປັນລູກຄ້າ; ເປັນນັກສິລະປະສະແດງຕ້ອນຮັບວັນເດັກ.
3. ຕັດ ແລະ ຕິດເຈ້ຍມຸ່ນໃສ່ຮູບພາບລ້ອນຕີ ແລະ ຂຽນຕົວເລກ 13 ຕາມຮອຍຈ້ຳ.

### III. ສື່ການຮຽນ-ການສອນ

1. ມຸມບົດບາດສົມມຸດ: ກ່ອງຂອງຂວັນເປົ່າ, ກ່ອງນົມ, ນ້ຳໝາກໄມ້, ເຂົ້າໜົມຕຸກກະຕາ, ໝາກບານ, ເຄື່ອງດົນ ຕີພື້ນເມືອງຂອງຈິງ ຫຼື ຈຳລອງ: ແຄນ, ກອງ, ລະນາດ, ຊໍ, ສິ່ງ, ແສ່ງ, ຂຸ່ຍ, ຄ້ອງ, ໄມໂຄຼໂຟນ.
2. ມຸມສິລະປະສ້າງສັນ: ມີດຕັດປາຍມົນ, ເຈ້ຍສີ, ກາວ, ເຈ້ຍຮູບພາບລ້ອນຕີ, ປຶ້ມບົດເຝິກຄະນິດສາດເຫຼັ້ມ 1 (ໜ້າ 11) ຫຼື ຕົວເລກ 13 ຕາມຮອຍຈ້ຳ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເຄື່ອງຫຼິ້ນຕາມມຸມ.
2. ນາຍຄູແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມມ່ວນຊື່ນໃນການຫຼິ້ນບົດບາດສົມມຸດເປັນພໍ່ຄ້າ, ແມ່ຄ້າ, ລູກຄ້າ ແລະ ເປັນນັກສິລະປະ.
3. ຄວາມຖືກຕ້ອງໃນການຕັດ, ຕິດເຈ້ຍ ແລະ ຂີດຂຽນຕົວເລກ 13 ຕາມຮອຍຈ້ຳ.
4. ການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

# ເອກະສານອ້າງອີງ


## ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

1. ປຶ້ມຄູ່ມືການຈັດກິດຈະກຳການສອນຊັ້ນອະນຸບານ ກະຊວງສຶກສາທິການ, ກົມສາມັນ ເດືອນ ມີນາ (3) ປີ 2005 ພິມທີ່ເອກະພາບການພິມ.
2. ປຶ້ມຫຼັກການສອນອະນຸບານ ກຸ່ມວິຊາຄູທົ່ວໄປ ສາຍສ້າງຄູອະນຸບານລະບົບ 2 ປີ, ປີທີ 1 ປີ 2008.
3. ປຶ້ມວິທີສອນກາຍະສຶກສາ ກຸ່ມວິທີສອນສາຍສ້າງຄູອະນຸບານລະບົບ 2 ປີ, ປີທີ 2 ປີ 2009.
4. ປຶ້ມແຜນຈັດປະສົບການຊັ້ນອະນຸບານ 1 ປີ, 2014 ພິມທີ່ບໍລິສັດລັດວິສາຫະກິດໂຮງພິມສຶກສາ.
5. ຄູ່ມືຄູພະລະສຶກສາ, ຫັດຖະກຳ, ສິລະປະກຳ, ສິລະປະດົນຕີຊັ້ນປະຖົມປີທີໜຶ່ງ ກະຊວງສຶກສາທິການ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

## ກິດຈະກຳວົງມົນ

6. ຄູ່ມືຄູການຈັດກິດຈະກຳການຮຽນ-ການສອນ ຊັ້ນອະນຸບານກົມສາມັນສຶກສາ ກະຊວງສຶກສາທິການ.
7. ຫຼັກການສອນເດັກກ່ອນໄວຮຽນລະບົບ 11+3 ກະຊວງສຶກສາທິການ ປີ 2008.
8. ປຶ້ມແຜນຈັດປະສົບການຊັ້ນອະນຸບານ 1 ປີ, 2014 ພິມທີ່ບໍລິສັດລັດວິສາຫະກິດໂຮງພິມສຶກສາ.

## ກິດຈະກຳສິລະປະສ້າງສັນ

9. ຄູ່ມືຄູກິດຈະກຳສ້າງສັນ (ສິລະປະສຶກສາ) ຊັ້ນອະນຸບານສຶກສາ ປີທີ 1, ພິມປີ 2014.
10. ກະຊວງສຶກສາທິການ, ກົມສາມັນສຶກສາຄູ່ມືຄູກິດຈະກຳການສອນຊັ້ນອະນຸບານ ປີ 2005.
11. ກະຊວງສຶກສາທິການ, ປຶ້ມຫຼັກການສອນອະນຸບານ ລະບົບ 11+2 ປີ 2008 (ໜ້າ 93).

## ກິດຈະກຳການຫຼິ້ນກາງແຈ້ງ

12. ຄູ່ມືຄູ ກິດຈະກຳກາງແຈ້ງ ຊັ້ນອະນຸບານສຶກສາ ປີທີ 1, ພິມປີ 2014.
13. ຄູ່ມືຄູ ກິດຈະກຳການສອນ ຊັ້ນອະນຸບານ ກະຊວງສຶກສາ ປີ 1990 ໜ້າທີ 102,105,106,131.
14. ປຶ້ມແບບຮຽນວິຊາຫຼັກການສອນເດັກກ່ອນໄວຮຽນລະບົບ 11+2 ກົມສ້າງຄູ, ກະຊວງສຶກສາທິການ ປີ 2004 (ບົດທີ 11 ກິດຈະກຳກາງແຈ້ງ).

## ກິດຈະກຳເກມການສຶກສາ

15. ປຶ້ມແຜ່ນຈັດປະສົບການ ຊັ້ນອະນຸບານ 1 ເຫຼັ້ມ 1, ປີ 2005 (ກະຊວງສຶກສາທິການ-ກົມສາມັນສຶກສາ) ແລະ ປຶ້ມແຜນຈັດປະສົບການຊັ້ນອະນຸບານສຶກສາ ປີທີ 1, ພິມປີ 2014.
16. ປຶ້ມວິຊາ: ຫຼັກການສອນ 11 + 3 ສົກຮຽນ 2008 (ກະຊວງສຶກສາທິການ-ກົມສ້າງຄູ).

## ກິດຈະກຳການຫຼິ້ນຕາມມຸມ

17. ປຶ້ມວິຊາຊອກຮູ້ສະພາບແວດລ້ອມ 11 + 3 ປີ 2008 (ກະຊວງສຶກສາທິການ-ກົມສ້າງຄູ).
18. ປຶ້ມແຜນຈັດປະສົບການຊັ້ນອະນຸບານ 1 ເຫຼັ້ມ 1 ປີ 2005 (ກະຊວງສຶກສາທິການ-ກົມສາມັນສຶກສາ) ແລະ ປຶ້ມແຜນຈັດປະສົບການຊັ້ນອະນຸບານສຶກສາປີທີ 1, ພິມປີ 2014.
19. ປຶ້ມການພັດທະນາໂຮງຮຽນຄຸນນະພາບ, ຄູ່ມືຄູສອນຫ້ອງກຽມປະຖົມ (ກະຊວງສຶກສາ 2010).